## ໂຄງການສົ່ງເສີມການປູກພືດອາຫານສັດສໍາລັບຄອບຄົວຊາວກະສິກອນ (FSP)

ໂຄງການສົ່ງເສີມການປູກພືດອາຫານສັດສໍາລັບຄອບຄົວຊາວກະສິກອນ ແມ່ນ ໂຄງການລະດັບພາກພື້ນ ໃນ ອາຊີຕາເວັນອອກສ່ຽງໃຕ້ ໂດຍໄດ້ຮັບທຶນຊ່ວຍເຫລືອຈາກ ອົງການເພື່ອການພັດທະນາສາກົນຂອງອົດສະຕາລີ (AusAID) ເຊິ່ງຄຸ້ມຄອງ ແລະ ບໍລິຫານໂດຍສູນຄົ້ນຄວ້າກະສິກໍາເຂດຮ້ອນ (CIAT) ແລະ ອົງການຄົ້ນຄວ້າວິທະ ຍາສາດຂອງອົດສະຕາລີ (CSIRO) ເຊິ່ງໄດ້ ເລີ້ມຕົ້ນປະຕິບັດໂຄງການມາແຕ່ ປີ 1995. ໂຄງການສົ່ງເສີມການ ປູກພືດອາຫານສັດສໍາລັບຄອບຄົວຊາວກະສິກອນ ເປັນໂຄງການທີ່ປະສານ ລະຫວ່າງ ຊາວກະສິກອນ, ນັກພັດ ທະນາກອນ ແລະ ນັກຄົ້ນຄວ້າ ຢູ່ ໃນປະເທດຕ່າງ ໆ ເຊັ່ນ ອິນໂດເນເຊຍ, ສ ປ ປ ລາວ, ມາເລເຊຍ, ຟີລິບປິນ, ໄທ, ຫວຽດນາມ ແລະ ຈີນ. ຈຸດປະສົງ ຂອງໂຄງການ ແມ່ນ ເພື່ອພັດທະນາເຕັກໂນໂລຊີພືດອາຫານສັດ ຮ່ວມ ກັບຊາວກະສິກອນໃນເຂດພູດອຍ, ເຊິ່ງເປັນເຂດທີ່ມີທ່າແຮງ ໃນການປູກພືດອາຫານສັດ ເພື່ອ ເປັນອາຫານສັດ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດ.

ປື້ມຫົວນີ້ ໄດ້ຈັດພິມຂຶ້ນ ຢູ່ ສ ປ ປ ລາວ ໂດຍ ການຮ່ວມມືລະຫວ່າງ ສະຖາບັນຄົ້ນຄ້ວາກະສິກໍາ ແລະ ປ່າໄມ້ ແລະ ກົມລ້ຽງສັດ ແລະ ການປະມົງ

CIAT Centro Internacional de Agricultura Tropical / International Center for Tropical Agriculture

ACIAR

CSIRO

AusAID

# ການພັດທະນາ ເຕັກໂນໂລຊີພືດອາຫານສັດ ຮ່ວມກັບ ຊາວກະສິກອນ

## ຈະເຮັດແນວໃດ ໃນການຄັດເລືອກ ແນວພັນພືດອາຫານສັດທີ່ດີ ເພື່ອແນະນຳໃຫ້ແກ່ຊາວກະສິກອນ ຢູ່ ເຂດອາຊີ ຕາເວັນອອກສຽງໃຕ້

ແປ ແລະ ຮຽບຮຽງໂດຍ

ພອນປະເສີດ ເພັງສະຫວັນ

ວັນທອງ ແພງວິຈິດ

ໂດຍ Peter M. Horne ແລະ Werner W. Stür

ຈັດພິມໂດຍອົງການຄົ້ນຄວ້າກະສິກຳຂອງອົດສະຕາລີ (ACIAR) ແລະ ສູນຄົ້ນຄວ້າກະສິກຳເຂດຮ້ອນສາກົນ (CIAT)
ACIAR Monograph No. 70

ສູນຄົ້ນຄວ້າກະສິກຳນາໆ ຊາດ ຂອງອົດສະຕາລີ
Australian Center for International Agricultural Research (ACIAR)
GPO Box 1571,
Canberra, ACT 2601
Australia
Tel: (61 2) 62170500
Fax: (61 2) 62170501
E-mail: aciar@aciar.gov.au

ອົງການເພື່ອການພັດທະນາສາກົນຂອງອົດສະຕາລີ
Australian Agency for International Development (AusAID)
GPO Box 887
Canberra, ACT 2601
Australia
Tel: (61 2) 6206 4000
Fax: (61 2) 6206 4880
E-mail: infoausaid@ausaid.gov.au

ໂຄງການສົ່ງເສີມການປູກພືດອາຫານສັດສຳລັບຄອບຄົວຊາວກະສິກອນ
Forages for Smallholders Project (FSP)
c/o CIAT Regional Office
Makati Central P.O Box 3127
1271 Makati City
Philippines
Tel: (63 2) 845 0563
Fax: (63 2) 845 0606
E-mail: ciat-asia@cgiar.org

ISBN 186320 292 7

ໂດຍ: Horne, P.M. and Stur, W.W. (2000). ການພັດທະນາ ເຕັກໂນໂລຊີພືດອາຫານສັດ ຮ່ວມກັບຊາວກະ ສິກອນ:
ຈະເຮັດແນວໃດ ໃນການຄັດເລືອກແນວພັນ ພືດອາຫານສັດທີ່ດີ ເພື່ອແນະນຳໃຫ້ແກ່ ຊາວກະສິກອນ ຢູ່ ອາຊີ ຕາເວັນອອກສ່ຽງໃຕ້.
ACIAR Monograph No. 70

ແປ ແລະ ຮຽບຮຽງໂດຍ: ພອນປະເສີດ ເຜັງສະຫວັນ ແລະ ວັນທອງ ແພງວິຈິດ.
ອອກແບບ ໂດຍ: Albert Borrero, ອີຣີ, ລອດສ ບາຍົດສ, ຟີລິບປິນ.
ຮູບກະຕູນ ໂດຍ: Dave Daniel, ອົດສະຕາລີ
ອອກແບບໜ້າປົກ ໂດຍ: ກອງພັດ ຫລວງລາດ, ສ ປ ປ ລາວ
ປື້ມຫົວນີ້ ແມ່ນໄດ້ຈັດພິມເປັນຫລາຍພາສາ ເຊັ່ນ: ລາວ, ອັງກິດ, ອິນໂດເນເຊຍ, ໄທ, ຫວຽດນາມ ແລະ ຈີນ



# ສາລະບານ


6 **ຄຳຂອບໃຈ**

**ພາກທີ 1.** 9 **ກ່ອນທີ່ທ່ານຈະເລີ້ມຕົ້ນ...**
ພືດອາຫານສັດແມ່ນຫຍັງ ?
ເປັນຫຍັງຈຶ່ງຈຳເປັນມີປື້ມຫົວນີ້?

**ພາກທີ 2.** 13 **ຄວນເຮັດແນວໃດແດ່ໃນການປະເມີນຜົນພືດອາຫານສັດຮ່ວມກັບຊາວກະສິກອນ**
ການເຂົ້າໃຈຄວາມຕ້ອງການຂອງຊາວກະສິກອນ.
ການຄັດເລືອກວິທີການປູກ ແລະ ນຳໃຊ້ພືດອາຫານສັດ ທີ່ເຫມາະສົມ.
ການຄັດເລືອກພືດອາຫານສັດ.
ທີ່ສາມາດປັບຕົວເຂົ້າກັບສະພາບດິນຟ້າອາກາດຕົວຈິງໄດ້ດີທີ່ສຸດ.
ສະເຫນີສາຍພັນທີ່ດີທີ່ສຸດ ແຕ່ ບໍ່ແມ່ນທຸກ ໆ ສາຍພັນຂອງແຕ່ລະຊະນິດໃຫ້ແກ່ຊາວກະສິກອນ !
ສະເຫນີຫລາຍ ໆ ທາງເລືອກ ໃຫ້ແກ່ຊາວກະສິກອນ !

**ພາກທີ 3.** 23 **ຈະຄັດເລືອກພືດອາຫານສັດທີ່ດີໄດ້ແນວໃດ...**
ຄວາມເຫມາະສົມຂອງພືດອາຫານສັດ ຕໍ່ການນຳໃຊ້ຕ່າງ ໆ.
ການແນະນຳ ພືດອາຫານສັດ ສຳລັບ ສະພາບອາກາດ ແລະ ດິນ ທີ່ແຕກຕ່າງກັນ.
ບາງຈຸດສຳຄັນທີ່ຕ້ອງໄດ້ພິຈາລະນາເປັນພິເສດ.

**ພາກທີ 4.** 33 **ລາຍລະອຽດກ່ຽວກັບແຕ່ລະຊະນິດ...**
ພືດອາຫານສັດ ຕະກຸນຫຍ້າ
ພືດອາຫານສັດ ຕະກຸນຖົ່ວ
ພືດອາຫານສັດຊະນິດອື່ນ ໆ ທີ່ເປັນປະໂຫຍດ

**ພາກທີ 5.** 75 **ເອກະສານຊ້ອນທ້າຍ**
ຕົ້ນກຳເນີດ ແລະ ການຈຳແນກ ພືດອາຫານສັດສາຍພັນຕ່າງ ໆ ທີ່ແນະນຳ.
ພວກເຮົາສາມາດຕິດຕໍ່ ແລະ ຊອກຫາແນວພັນສາຍພັນພືດອາຫານສັດເຫລົ່ານີ້ໄດ້ຢູ່ໃສແດ່?

# ຄຳຂອບໃຈ

ປື້ມຫົວນີ້ ແມ່ນໄດ້ຂຽນຂຶ້ນມາ ໂດຍອີງໃສ່ປະສົບປະການ ຂອງ ນັກຄົ້ນຄວ້າທົດລອງ ແລະ ຊາວກະສິ ກອນ ທີ່ ເຮັດວຽກຮ່ວມກັບ ໂຄງການສົ່ງເສີມການປູກພືດອາຫານສັດສຳລັບຄອບຄົວຊາວກະສິກອນ ຢູ່ ອາຊີຕາ ເວັນອອກສ່ຽງ ໃຕ້ ເຊິ່ງໄດ້ຮັບທຶນຈາກ ອົງການເພື່ອການພັດທະນາສາກົນຂອງອົດສະຕາລີ. ໂຄງການນີ້ ເປັນໂຄງ ການແຫ່ງຄວາມສຳພັນລະຫວ່າງ ຊາວກະສິກອນ, ນັກພັດທະນາກອນ ແລະ ພະນັກງານຄົ້ນຄວ້າທົດລອງ ຜູ້ທີ່ນຳໃຊ້ວິທີການເຮັດວຽກແບບມີສ່ວນຮ່ວມ ເພື່ອພັດທະນາເຕັກໂນໂລຊີພືດອາຫານສັດ ຮ່ວມກັບຊາວກະສິກອນ. ໂຄງການສົ່ງເສີມການປູກພືດອາຫານສັດ ໄດ້ທົດສອບ ຫລາຍກວ່າ 600 ສາຍພັນພືດອາຫານສັດ, ເຊິ່ງລວມມີສາຍພັນ ທີ່ໄດ້ຄັດເລືອກໃນແຕ່ລະປະເທດ ແລະ ສູນທ້ອນໂຮມແນວພັນ ຂອງສູນຄົ້ນຄວ້າກະສິກຳເຂດຮ້ອນ (CIAT) ແລະ ອົງການຄົ້ນຄວ້າວິທະຍາສາດຂອງອົດສະຕາລີ (CSIRO) ເຊິ່ງວຽກງານດັ່ງກ່າວນີ້ ບໍ່ອາດເປັນໄປໄດ້ ຖ້າບໍ່ມີ ສູນທ້ອນໂຮມແນວພັນພືດອາຫານສັດເຫລົ່ານີ້. ພືດອາຫານສັດ ທຸກ ໆ ສາຍພັນ ທີ່ໄດ້ບັນຈຸເຂົ້າໃນປື້ມຫົວນີ້ ແມ່ນ ຊາວກະສິກອນໄດ້ເລີ້ມນຳໃຊ້ແລ້ວ ແລະ ເຫັນວ່າມີທ່າແຮງຢ່າງໃຫຍ່ຫລວງ ສຳລັບການປັບປຸງການລ້ຽງສັດ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດ.



ໃນການຈັດພິມປຶ້ມຫົວນີ້ ໄດ້ມີຫລາຍ ໆ ທ່ານໃຫ້ການຊ່ວຍເຫລືອ ແລະ ປະກອບສ່ວນເຂົ້າໃນການປັບປຸງ ເນື້ອໃນ ແລະ ການຈັດພິມ. ຂໍສະແດງຄວາມຂອບໃຈອັນພິເສດ ຕໍ່ເພື່ອນຮ່ວມງານໃນໂຄງການສົ່ງເສີມການປູກ ພືດອາຫານສັດສຳລັບຄອບຄົວຊາວກະສິກອນ, ເຊິ່ງລວມມີ : Le Van An, Perla Asis, Le Hoa Binh, Wong Choi Chee, Francisco Gabunada, Liu Guo Dao, Bryan Hacker, Heriyanto, Ibrahim, Tatang Ibrahim, Peter Kerridge, Truong Tan Khanh, Elaine Lanting, Eduedo Magboo, Willie Nacalaban, ກັນດາ ນາຄຳມານີ, ສາຍແສງ ໄຜ່ແກ້ວ, ພອນປະເສີດ ເພັງສະຫວັນ, ວັນທອງ ແພງວິຈິດ, ວຽງສະຫວັນ ພິມພະຈັນວົງສິດ, I. Ketut Rika, Tugimal and Maimunah Tuhulele. ການແນະນຳ ແລະ ການປະເມີນໃນເບື້ອງຕົ້ນ ແມ່ນດຳເນີນໂດຍ Bert Grof, ສ່ວນການປະເມີນຜົນຢູ່ກັບຄອບຄົວຊາວກະສິກອນ ແມ່ນໄດ້ຄຳແນະນຳຈາກທ່ານ Trevor Gibsion ແລະ Arthur Cameron.

ນອກນັ້ນ, ພວກຂ້າພະເຈົ້າຍັງຂໍຂອບໃຈ ມາຍັງທ່ານ Arthur Cameron, Bruce Cook, Bert Grof, Michael Hare, John Hopkinson, John Miles ແລະ Max Shelton ທີ່ຊ່ວຍປະກອບຄວາມຄິດເຫັນໃສ່ເນື້ອໃນ ຂອງປຶ້ມຫົວນີ້, ພ້ອມນີ້ຂໍຂອບໃຈ Ian Partridge , Nathan Russell and Julio Martinez ທີ່ຊ່ວຍໃນການອອກແບບ ແລະ ຮຽບຮຽງ. ຮູບພາບຕ່າງ ໆ ໃນປຶ້ມຫົວນີ້ ແມ່ນໄດ້ຮັບການຊ່ວຍເຫລືອຈາກ Jim Holms, Alan Pottinger, Emma Louie Orencia, Lingkod Sayo (IRRI), Wong Choi Chee, Peter Horne ແລະ Werner Stür . ຮູບກະຕຸນ ແມ່ນ ແຕ້ມໂດຍ Dave Daniel ແລະ ຫນ້າປົກແຕ້ມໂດຍ ກອງພັດ ຫລວງລາດ.

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງອົງການຄົ້ນຄວ້າກະສິກຳເຂດຮ້ອນ (CIAT) , ອົງການ ຄົ້ນຄວ້າວິທະຍາສາດຂອງອົດສະຕາລີ (CSIRO) ແລະ ກົມລ້ຽງສັດ (ປະເທດໄທ), ສະຖາບັນປ່າໄມ້ ອັອກສຟອດ (OFI) ແລະ ບັນດາໂຄງການຕ່າງ ໆ ພາຍໃນປະເທດ ແລະ ນາ ໆ ຊາດ ຢູ່ ອາຊີຕາເວັນອອກສ່ຽງໃຕ້, ອາເມລິກາລາຕິນ ແລະ ອົດສະຕາລີ ທີ່ໃຫ້ຂໍ້ມູນ ແລະ ເມັດພັນ.

ການຈັດພິມປຶ້ມຫົວນີ້ ແມ່ນ ໄດ້ຮັບທຶນຈາກ ອົງການຄົ້ນຄວ້າກະສິກຳຂອງອົດສະຕາລີ (ACIAR).



# ກ່ອນທີ່ທ່ານຈະເລີ້ມຕົ້ນ ...

# 1

# ກ່ອນທີ່ທ່ານຈະເລີ້ມຕົ້ນ ...

**ພືດອາຫານສັດ ແມ່ນ ຫຍັງ ?**

ພືດອາຫານສັດ ແມ່ນ ຫຍ້າ, ກົ່ວ ແລະ ຕົ້ນໄມ້ຕະກຸນກົ່ວ ທີ່ສາມາດນຳໃຊ້ສຳລັບເປັນອາຫານໃຫ້ແກ່ສັດລ້ຽງ. ນອກນັ້ນ, ພວກມັນຍັງສາມາດນຳໃຊ້ເຂົ້າໃນການຄຸ້ມຄອງຊັບພະຍາກອນທຳມະຊາດໄດ້ເປັນຢ່າງດີ, ເຊິ່ງ ລວມມີ ການປ້ອງກັນການເຊາະເຈື່ອນ, ການປັບປຸງດິນ ແລະ ຄວບຄຸມວັດຊະພືດ. ໃນປື້ມຫົວນີ້ ຈະໄດ້ເວົ້າເຖິງ ພືດອາຫານສັດ ທີ່ຊາວກະສິກອນໄດ້ນຳໃຊ້ແລ້ວ ແລະ ໄດ້ຮັບຜົນສຳເລັດເປັນຢ່າງດີ, ເຊິ່ງໂດຍທົ່ວໄປແລ້ວ ພືດເຫລົ່ານີ້ ຈະໃຫ້ຜົນປະໂຫຍດຫລາຍດ້ານ ຫລື ເປັນພືດອະເນກປະສົງ.



## ເປັນຫຍັງ ຈຶ່ງຈຳເປັນຕ້ອງມີປື້ມຫົວນີ້ ?



ການລ້ຽງສັດ ເປັນອົງປະກອບອັນສຳຄັນ ຂອງລະບົບການຜະລິດກະສິກຳ ໃນເຂດພູດອຍ ຂອງ ອາຊີຕາ ເວັນອອກສ່ຽງໃຕ້. ໃນໄລຍະຜ່ານມາ ແຫລ່ງອາຫານສັດ ແມ່ນ ມີຢ່າງຫລວງຫລາຍຕາມທຳມະຊາດ, ແຕ່ໃນປັດຈຸບັນ ສະພາບດັ່ງກ່າວ ແມ່ນໄດ້ປ່ຽນແປງໄປ ແລະ ຊາວກະສິກອນ ຈຳເປັນຕ້ອງໄດ້ໃຊ້ເວລາຢ່າງຫລວງຫລາຍ ເພື່ອຊອກຫາອາຫານ ມາໃຫ້ສັດລ້ຽງຂອງເຂົາເຈົ້າ. ໃນການແກ້ໄຂບັນຫາດັ່ງກ່າວນີ້ ການປູກພືດອາຫານ ສັດ ແມ່ນ ສາມາດຊ່ວຍແກ້ໄຂໄດ້. ແຕ່ເຖິງຢ່າງນັ້ນກໍຕາມ, ບໍ່ແມ່ນທຸກ ໆ ເຂດການຜລິດ ຈະມີແຫລ່ງອາຫານ ສັດ ແລະ ຄວາມຕ້ອງການຄືກັນ. ພືດອາຫານສັດ ທີ່ ເຫມາະສົມກັບເຂດນຶ່ງ ອາດຈະບໍ່ເຫມາະສົມກັບອີກເຂດນຶ່ງ, ດັ່ງນັ້ນ, ວິທີທາງທີ່ດີທີ່ສຸດ ໃນການພັດທະນາ ເຕັກໂນໂລຊີພືດອາຫານສັດ ສຳລັບແຕ່ລະ ຈຸດ / ເຂດ ແມ່ນ ໃຫ້ ຊາວກະສິກອນເປັນ ຜູ້ທົດລອງ ແລະ ປະເມີນຜົນ ເພື່ອຄັດເລືອກ ເຕັກໂນໂລຊີພືດອາຫານສັດທີ່ດີ ແລະ ນຳໃຊ້ ໃຫ້ແທດເຫມາະ ເຂົ້າໃນ ສະພາບຕົວຈິງຂອງເຂົາເຈົ້າ.

ວິທີການດັ່ງກ່າວນີ້ ແມ່ນ ວິທີການເຮັດວຽກແບບມີສ່ວນຮ່ວມ ເຊິ່ງ ຫນ້າທີ່ ຫລື ບົດບາດ ຂອງພະນັກງານສົ່ງເສີມ ແມ່ນ ໃຫ້ຂໍ້ມູນແກ່ຊາວກະສິກອນ ກ່ຽວກັບພືດອາຫານສັດ ທີ່ສາມາດແກ້ໄຂບັນຫາຂອງເຂົາເຈົ້າໄດ້. ໃນປັດຈຸບັນ ໄດ້ ມີພືດອາຫານສັດຫລາຍຊະນິດ ແລະ ຫລາຍວິທີການປູກ, ແຕ່ບໍ່ແມ່ນທັງຫມົດຈະເຫມາະສົມກັບສະພາບຕົວຈິງ ແລະ ຄວາມຕ້ອງການສະເພາະໃດນຶ່ງ, ດັ່ງນັ້ນ ປື້ມຫົວນີ້ ຈະຊ່ວຍໃຫ້ພະນັກງານສົ່ງເສີມ ສາມາດ ຄັດເລືອກ ພືດອາຫານສັດທີ່ເຫມາະສົມ ເພື່ອໄປແນະນຳໃຫ້ຊາວກະສິກອນຕໍ່ໄປ.

ໃນປື້ມຫົວນີ້ ບໍ່ໄດ້ບັນຈຸເອົາພືດອາຫານສັດ ທຸກ ໆ ຊະນິດ ແລະ ສາຍພັນ ທີ່ອາດສາມາດເກີດ ໄດ້ໃນເງື່ອນໄຂສະພາບໃດນຶ່ງເທົ່ານັ້ນ , ແຕ່ຈະບັນຈຸ ເອົາແຕ່ສາຍພັນ ຫລື ຊະນິດ ທີ່ ສາມາດເກີດໄດ້ໃນຫລາຍ ເງື່ອນໄຂສະພາບແວດລ້ອມ ແລະ ເປັນຊະນິດທີ່ຊາວກະສິກອນໄດ້ ເລີ້ມນຳໃຊ້ແລ້ວ ຫລື ມີທ່າແຮງອັນໃຫຍ່ຫລວງໃນການຂະຫຍາຍ ໃນ ເຂດອາຊີຕາເວັນອອກສ່ຽງໃຕ້. ລາຍລະອຽດກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ພືດອາຫານສັດ ຊະນິດຕ່າງ ໆ ເຫຼົ່ານີ້ ສາມາດຊອກຫາໄດ້ ໃນປື້ມອີກຫົວນຶ່ງ ໃນຊຸດດຽວກັນນີ້: "ການພັດທະນາ ເຕັກໂນໂລຊີ ພືດອາຫານ ສັດຮ່ວມກັບຊາວກະສິກອນ - ຈະປູກ ແລະ ຄຸ້ມຄອງ ພືດອາຫານສັດ ແນວໃດ ເພື່ອການນຳໃຊ້ແບບອະເນກປະສົງ".

(ຫມາຍເຫດ: ປື້ມກ່ຽວກັບການພັດທະນາເຕັກໂນໂລຊີພືດອາຫານສັດຮ່ວມກັບຊາວກະສິກອນ ແມ່ນລວມມີ 4 ຫົວ)



# ຄວນເຮັດແນວໃດແດ່ ໃນການປະເມີນຜົນ ພືດອາຫານສັດ ຮວມກັບຊາວກະສິກອນ ...

# 2

# ຄວນເຮັດແນວໃດແດ່ ໃນການປະເມີນຜົນ ພືດອາຫານສັດຮວມກັບຊາວກະສິກອນ



**ໃນເວລາທີ່ສະເຫນີ ຫລື ແນະນຳ ພືດອາຫານສັດ ໃຫ້ແກ່ຊາວກະສິກອນນັ້ນ ຕ້ອງເອົາໃຈໃສ່ ບາງບັນຫາ ທີ່ສຳຄັນດັ່ງນີ້:**

1. ເຂົ້າໃຈຄວາມຕ້ອງການຂອງຊາວກະສິກອນ
2. ຄັດເລືອກວິທີການ ປູກ ແລະ ນຳໃຊ້ ພືດອາຫານສັດໃຫ້ເຫມາະສົມ
3. ຄັດເລືອກພືດອາຫານສັດ ທີ່ແທດເຫມາະກັບສະພາບອາກາດ ແລະ ດິນໃນທ້ອງຖິ່ນ
4. ສະເຫນີ ສາຍພັນທີ່ດີທີ່ສຸດໃຫ້ແກ່ຊາວກະສິກອນ ແຕ່ບໍ່ແມ່ນສາຍພັນໃດນຶ່ງ ຂອງແຕ່ລະຊະນິດ
5. ສະເຫນີຫລາຍທາງເລືອກໃຫ້ແກ່ຊາວກະສິກອນ

## 1. ເຂົ້າໃຈຄວາມຕ້ອງການ ຂອງ ຊາວກະສິກອນ

ບໍ່ແມ່ນຊາວກະສິກອນທຸກຄົນ ຈະຕ້ອງການພືດອາຫານສັດ. ບາງເທື່ອຫຍ້າທີ່ມີຢູ່ຕາມທຳມະຊາດ ກໍອາດພຽງພໍຕາມຄວາມຕ້ອງການ ສຳລັບເປັນອາຫານສັດຂອງເຂົາເຈົ້າແລ້ວ. ດັ່ງນັ້ນ, ຄວນຈະຊຸກຍູ້ພຽງແຕ່ຜູ້ທີ່ມີຄວາມຈຳເປັນ ຫລື ຜູ້ທີ່ມີບັນຫາກ່ຽວກັບອາຫານສັດ ເພື່ອມາທົດລອງປູກ, ປະເມີນຜົນ ແລະ ນຳໃຊ້ໃຫ້ຖືກຕ້ອງຕາມຄວາມຕ້ອງການຕົວຈິງ. ມີປື້ມອີກຫົວນຶ່ງ ໃນຊຸດດຽວກັນນີ້ " ການພັດທະນາວິທີການແກ້ໄຂບັນຫາທາງດ້ານກະສິກຳ ຮ່ວມ ກັບຊາວກະສິກອນ - ວິທີການເຮັດວຽກແບບມີສ່ວນຮ່ວມ ເພື່ອເຮັດໃຫ້ຖືກຕ້ອງແຕ່ຫົວທີ". ໄດ້ອະທິບາຍວິທີການເຮັດວຽກຮ່ວມກັບຊາວກະສິກອນ ເພື່ອຊອກຫາຄວາມຕ້ອງການ ຫລື ບັນຫາ ແລະ ວິທີການແກ້ໄຂ.

ເວລາທີ່ພວກເຮົາເຂົ້າໃຈ ຫລື ຮູ້ຈັກບັນຫາສະເພາະຂອງຊາວກະສິກອນແລ້ວ ແມ່ນສາມາດຄັດເລືອກວິທີການ ປູກ ແລະ ນຳໃຊ້ ພືດອາຫານສັດ ທີ່ສາມາດແກ້ໄຂບັນຫາຂອງເຂົາເຈົ້າໄດ້.



ການເຮັດວຽກຮ່ວມກັບ ຊາວກະສິກອນ
ໃນການປະເມີນຜົນ
ພືດອາຫານສັດ ຢູ່ພາກເຫນືອຂອງລາວ.


1


2


3


4

1 ສວນຫຍ້າສຳລັບຕັດໃຫ້ກິນ (ພາບໂດຍ: ເວີນເນີ ສະເຕີອ)
2 ສວນຫຍ້າສຳລັບປ່ອຍສັດເຂົ້າກິນ (ເວີນເນີ ສະເຕີອ)
3 ຮົ້ວຊີວະພາບ (ເວີນເນີ ສະເຕີອ)
4 ແຖວກັນເຈື່ອນ (ເວີນເນີ ສະເຕີອ)

## 2. ການຄັດເລືອກວິທີການ ປູກ ແລະ ນຳໃຊ້ ພືດອາຫານສັດໃຫ້ເໝາະສົມ

ບາງວິທີການປູກ ແລະ ນຳໃຊ້ພືດອາຫານສັດ ທີ່ສາມາດນຳໃຊ້ ໃນການແກ້ໄຂບັນຫາສະເພາະຂອງຊາວກະສິກອນ ແມ່ນໄດ້ອະທິບາຍຢູ່ລຸ່ມນີ້. ອີກປັດໄຈນຶ່ງທີ່ສຳຄັນ ແມ່ນຕ້ອງເຮັດວຽກຮ່ວມກັບຊາວກະສິກອນ ເພື່ອໃຫ້ເຂົ້າໃຈວ່າ ແມ່ນທາງເລືອກໃດ ທີ່ອາດແກ້ໄຂກັບຄວາມຕ້ອງການ ແລະ ເໝາະສົມກັບລະບົບການຜລິດ ຂອງເຂົາເຈົ້າ.

### ຫຍ້າສວນຄົວ(ສຳລັບຕັດໃຫ້ກິນ)

- ສະດວກໃນເວລາຕ້ອງການອາຫານໃຫ້ສັດ
- ຮັກສາຝຸ່ນຄອກໄວ້ໃກ້ເຮືອນ - ງ່າຍໃນເວລາຕ້ອງການ

### ສວນຫຍ້າປ່ອຍໃຫ້ສັດເຂົ້າກິນ

- ເປັນວິທີການລ້ຽງທີ່ງ່າຍທີ່ສຸດ ຖ້າຫາກມີດິນພຽງພໍ
- ຕ້ອງໄດ້ລ້ອມຮົ້ວ ເພື່ອບໍ່ໃຫ້ສັດຄົນອື່ນເຂົ້າກິນ.

### ຮົ້ວຊີວະພາບ

- ຊ່ວຍບໍ່ໃຫ້ສັດເຂົ້າໄປໃນສວນພືດອື່ນ ໆ ໄດ້ ຫລື ຮັກສາສັດໄວ້ໃນສວນຫຍ້າ.
- ຕອບສະໜອງອາຫານເສີມທີ່ມີທາດຊີ້ນ (ໂປູຕີນ)ສູງ.

### ແຖວກັນເຈື່ອນ

- ປູກເປັນແຖວຕັດໄປຕາມດິນຄ້ອຍຊັນ ເພື່ອຫລຸດຜ່ອນການເຊາະເຈື່ອນ.
- ນອກນັ້ນຍັງສາມາດປູກໄປຕາມແລວຮົ້ວ ຫລື ຂັ້ນແດນ ລະຫວ່າງ ໄຮ່ ຫລື ສວນ.

### ປັບປຸງໄຮ່ເກົ່າ

- ປູກພືດອາຫານສັດຕະກຸນກົ່ວ ໃສ່ເນື້ອທີ່ປູກຝັງເກົ່າທີ່ປະໄວ້ເປັນເວລາ ແຕ່ 1 ປີຂຶ້ນໄປ.
- ຊ່ວຍຮັກສາຄວາມອຸດົມສົມບູນຂອງດິນ ແລະ ຄວບຄຸມວັດຊະພືດ.

### ພືດປົກຄຸມ ໃນເນື້ອທີ່ປູກພືດລົ້ມລຸກ

- ປູກພືດຕະກຸນກົ່ວໃສ່ກັບພືດລົ້ມລຸກ ເຊັ່ນ ສາລີ ແລະ ມັນຕົ້ນ.
- ຄວບຄຸມວັດຊະພືດ, ປັບປຸງດິນ ແລະ ປ້ອງກັນການເຊາະເຈື່ອນ.

### ພືດປົກຄຸມ ໃນກ້ອງຕົ້ນໄມ້ /ເນື້ອທີ່ປູກຝັງຕ່າງ ໆ

- ປູກພືດຕະກຸນກົ່ວໃສ່ກ້ອງຕົ້ນໄມ້ ເຊັ່ນ ໄມ້ໃຫ້ໝາກຕ່າງ ໆ , ຕົ້ນກ້ວຍ ແລະ ໝາກພ້າວ.
- ຄວບຄຸມວັດຊະພືດ, ປັບປຸງດິນ ແລະ ປ້ອງກັນການເຊາະເຈື່ອນ.


❶


❷


❸

❶ ປັບປຸງໄຮ່ເກົ່າ ( ເວີນເນີ ສະເຕືອ)
❷ ພືດປົກຄຸມ ໃນເນື້ອທີ່ປູກພືດລົ້ມລຸກ (ປີເຕີ ຮອນ)
❸ ພືດປົກຄຸມ ໃນກ້ອງຕົ້ນໄມ້ /ເນື້ອທີ່ປູກຝັງຕ່າງ ໆ (ເວີນເນີ ສະເຕືອ)







➊ ພືດປົກຄຸມດິນ ເພື່ອປ້ອງກັນການເຊາະເຈື່ອນ (ເວີນເບີ ສະເຕືອ)

➋ ນຳໃຊ້ພືດອາຫານສັດຕະກຸນກົ່ວ ເປັນອາຫານເສີມໃນລະດູແລ້ງ (ເວີນເບີ ສະເຕືອ)

➌ ອາຫານປົ່ນຈາກໃບພືດອາຫານສັດຕະກຸນກົ່ວ (ເວີນເບີ ສະເຕືອ)

### ພືດປົກຄຸມດິນ ເພື່ອປ້ອງກັນການເຊາະເຈື່ອນ

- ປົກກະຕິຈະປູກພືດອາຫານສັດ (ຫຍ້າ ແລະ ກົ່ວ) ທີ່ມີລັກສະນະ ແກ້ງແຍ້ງໄດ້ດີ , ເປັນເຄືອ ແລະ ມີຮາກປົ່ງອອກຕາມຂໍ້ ເຊິ່ງສາມາດປົກຄຸມດິນ ແລະ ຄວບຄຸມວັດຊະພືດ.

### ນຳໃຊ້ພືດອາຫານສັດຕະກຸນກົ່ວ ເປັນອາຫານເສີມໃນລະດູແລ້ງ

- ພືດອາຫານສັດຕະກຸນກົ່ວທີ່ມີທາດຊີ້ນສູງ ຈະຊ່ວຍໃຫ້ສັດສາມາດ ນຳໃຊ້ອາຫານ ທີ່ມີຄຸນນະພາບຕ່ຳໄດ້ດີຂື້ນ.

### ອາຫານປົ່ນຈາກໃບພືດອາຫານສັດຕະກຸນກົ່ວ

- ໃບພືດອາຫານສັດຕະກຸນກົ່ວແຫ້ງ ນຳໄປເຮັດເປັນອາຫານປົ່ນ ແລະ ສາມາດເກັບໄວ້ ເປັນອາຫານແກ່ສັດໄດ້, ໂດຍສະເພາະ ແມ່ນ ໄກ່ ແລະ ໝູ, ເຊິ່ງຖືວ່າເປັນອາຫານ ເສີມ ທີ່ມີທາດຊີ້ນສູງ.



## 3. ການຄັດເລືອກພືດອາຫານສັດ ທີ່ເຫມາະສົມກັບສະພາບດິນຟ້າອາກາດ

ບໍ່ມີພືດອາຫານສັດຊະນິດໃດ ທີ່ສາມາດເກີດໄດ້ດີ ໃນຫມົດທຸກບ່ອນ. ບາງຊະນິດເກີດໄດ້ດີ ໃນດິນເປັນກົດ ແຕ່ບາງຊະນິດບໍ່ໄດ້ດີ. ບາງຊະນິດເກີດໄດ້ດີໃນເຂດຫນາວ, ແຕ່ບາງຊະນິດກໍ່ເກີດ ບໍ່ໄດ້. ພືດອາຫານສັດອາດສາມາດເອົາຕົວລອດ ໃນສະພາບ ແລະ ເງື່ອນໄຂ ທີ່ບໍ່ສາມາດປັບຕົວໄດ້ ແຕ່ ມັນຈະບໍ່ຈະເລີນເຕີບໂຕໄດ້ດີ. ດັ່ງນັ້ນ, ມັນມີຄວາມສໍາຄັນ ທີ່ຈະຕ້ອງໄດ້ຄັດເລືອກເອົາພືດ ອາຫານສັດ ທີ່ສາມາດປັບຕົວເຂົ້າກັບສະພາບແວດລ້ອມ ອາກາດ ແລະ ດິນໃນທ້ອງຖິ່ນ.

ປັດໄຈທາງດ້ານອາກາດ ແລະ ດິນ
ທີ່ມີຜົນກະທົບຕໍ່ການປັບຕົວຂອງພືດອາຫານສັດ ແມ່ນ : ໄລຍະຍາວ ຂອງລະດູແລ້ງ, ອຸນນະພູມ, ຄວາມອຸດົມສົມບູນຂອງດິນ, pH ຂອງດິນ ແລະ ຄວາມສາມາດໃນການລະບາຍ ນໍ້າຂອງດິນ. ລັກສະນະການປັບຕົວ ຂອງແຕ່ລະຊະນິດ ແມ່ນ ສະແດງ ຢູ່ ພາກທີ 3 (ຕາຕະລາງ ທີ 2, ແລະ ໃນພາກ " ບາງຈຸດທີ່ຕ້ອງໄດ້ພິຈາລະນາເປັນພິເສດ") ແລະ ໃນພາກທີ 4" ລາຍລະອຽດກ່ຽວກັບແຕ່ລະຊະນິດ...".



## 4. ແນະນຳສາຍພັນຕ່າງ ໆ, ແຕ່ບໍ່ແມ່ນຊະນິດ ໃຫ້ແກ່ຊາວກະສິກອນ !

ພືດອາຫານສັດແມ່ນມີຫລາຍຊະນິດ ແລະ ແຕ່ລະຊະນິດ ແມ່ນ ມີ ນຶ່ງ ຫລື ຫລາຍສາຍພັນ. ຍົກຕົວຢ່າງ: ຫຍ້າຊະນິດ ບູາກີເຣຍ ບຼີຊັນຕາ (*Brachiaria brizantha*) (ຮູບສະແດງ ທີ 1). ແມ່ນມີ ສາມ ສາຍພັນ, ເຊິ່ງ ສາຍພັນ "ເຊເຣນເກຕີ (Serengeti) ແມ່ນມີລັກສະນະຕົ້ນເຕັ້ຍ ແລະ ຂະຫຍາຍເປັນແຜ່ນ (ຄືກັນ ກັບສາຍພັນ "ບາຊີລິສກ ຫລື ຊິກນານ ຂອງຊະນິດ ບູາກີເຣຍ ດີເກມເບີນ (*Brachiaria decumbens*). ສ່ວນອີກສອງສາຍພັນທີ່ເຫລືອ ແມ່ນມີລັກສະນະ ລຳຕົ້ນສູງ. ທັງສາມສາຍພັນນີ້ ຍັງອອກດອກ ແລະ ຜະລິດແກ່ນ ໃນເວລາທີ່ແຕກຕ່າງກັນ.

**ຮູບສະແດງທີ 1: ຊະນິດ ແລະ ສາຍພັນ**





ດັ່ງນັ້ນ, ຕ້ອງເຂົ້າໃຈວ່າ ສາຍພັນແຕ່ລະສາຍພັນ ແມ່ນຖືກຄັດເລືອກມາ ສຳລັບຄຸນລັກສະນະ ໃດນຶ່ງໂດຍສະເພາະ, ເຊັ່ນ ລັກສະນະ ຂອງການຈະເລີນເຕີບໂຕ, ເວລາອອກດອກ, ໃຫ້ຜົນຜລິດ ແກ່ນສູງ, ທົນທານຕໍ່ພະຍາດ ແລະ ສະພາບນ້ຳຂັງ ດັ່ງນີ້ ເປັນຕົ້ນ. ດັ່ງນັ້ນ, ຈະມີການທົດລອງ ສາຍພັນໃຫມ່ອອກມາເລື້ອຍ ໆ ເພື່ອມານຳໃຊ້ ເຂົ້າໃນ ການແກ້ໄຂບັນຫາສະເພາະໃດນຶ່ງ. ຕົວຢ່າງ, ໃນຫວ່າງມໍ່ ໆ ມານີ້ ຊະນິດ ບຼາກີເຣຍ ດີເກມເບີນ (*Brachiaria decumbens*) ແມ່ນມີພຽງສາຍ ພັນດຽວ ຄື "ບາຊີລິສກ", ສາຍພັນດັ່ງກ່າວແມ່ນເກີດໄດ້ດີ ໃນເຂດ ອາຊີ ຕາເວັນອອກສຽງໃຕ້ ແຕ່ມັນຈະໃຫ້ຜົນຜລິດແກ່ນຕ່ຳ ໃນຫລາຍ ໆ ເຂດ. ສາຍພັນໃຫມ່ຂອງຊະນິດ ນີ້ ແມ່ນກຳລັງທົດລອງ ແລະ ຄັດເລືອກ ເພື່ອແກ້ໄຂບັນຫາ ດັ່ງກ່າວ. ດັ່ງນັ້ນ, ມັນຈຶ່ງມີຄວາມ ສຳຄັນ ທີ່ຕ້ອງໄດ້ນຳເອົາ ສາຍພັນທີ່ດີທີ່ສຸດ ໄປແນະນຳໃຫ້ແກ່ ຊາວກະສິກອນ ບໍ່ແມ່ນຈະເອົາ ສາຍພັນໃດນຶ່ງຂອງຊະນິດ ນັ້ນ.

ປື້ມຫົວນີ້ ຈະແນະ ນຳບັນດາສາຍພັນທີ່ດີທີ່ສຸດ ສຳລັບສະພາບອາກາດ, ດິນ ແລະ ການນຳໃຊ້ ທີ່ແຕກຕ່າງກັນ.

**ຈະຈຳແນກສາຍພັນຕ່າງ ໆ ໄດ້ແນວໃດ?**

ບັນດາອົງການຄົ້ນຄວ້າ ແລະ ທົດລອງ ໃນຫລາຍ ໆ ປະເທດ ໄດ້ໃຫ້ນ້ຳເບີແຕ່ລະສາຍພັນຂອງຕົນເອງ, ຕົວຢ່າງ: ສາຍພັນ ຖົ່ວ ອາຣາຄິສ ປິນໂຕຍ "ອາມາຣິນໂລ" (Arachis pintoi 'Amarillo') ສູນຄົ້ນຄວ້າກະສິກຳເຂດຮ້ອນ ນາ ໆ ຊາດ ໄດ້ໃຫ້ນ້ຳເບີຂອງຕົນເອງ ແມ່ນ CIAT 17434, ສ່ວນ ອົງການຄົ້ນຄວ້າວິທະຍາສາດຂອງອົດສະຕາລີ (CSIRO) ແມ່ນໃສ່ນ້ຳເບີ CPI 58113 ແລະ ອົງການ EMBRAPA ຂອງ ປະເທດ ເບຼຊີນ ແມ່ນໃຊ້ BRA 013251. ເວລາໃດ ທີ່ປະເທດໃດນຶ່ງ ສາມາດຜລິດສາຍພັນໃດນຶ່ງໄດ້ແລ້ວ ຈຶ່ງຈະໃສ່ຊື່ ສະເພາະໃຫ້ສາຍພັນນັ້ນ.
ຖ້າວ່າຫລາຍປະເທດສາມາດຜລິດໄດ້ ມັນກໍຈະມີຊື່ສະເພາະເປັນຫລາຍຊື່. ຕົວຢ່າງ: ຖົ່ວ ອາຣາຄິສ ປິນໂຕຍ "ອາມາຣິນໂລ" (Arachis pintoi cv. Amarillo , ຢູ່ ອົດສະຕາລີຈະໃສ່ຊື່ສະ ເພາະຂອງມັນ ແມ່ນ "ອາມາຣິນໂລ" (Amarillo) , ແຕ່ ຢູ່ປະເທດ ໂກລົມເບຍ ແມ່ນ "ມານີ ໂຟຣາເຈໂຣ ເປເຣນເນ" (Mani Forrajero Perenne) ແລະ ຢູ່ ປະເທດ ຮົງດູຣັດ ແມ່ນ "ປີໂກ ໂບນີໂຕ" (Pico Bonito).

ບາງສາຍພັນ ທີ່ ໄດ້ນຳໃຊ້ ໃນ ເຂດອາຊີຕາເວັນອອກສຽງໃຕ້ ແມ່ນຍັງບໍ່ທັນມີຊື່ສະເພາະ ຈະມີພຽງແຕ່ ນ້ຳເບີ ເຊິ່ງຈະຈື່ໄດ້ຍາກ. ຜ່ານການປຶກສາຫາລື ກັບບັນດາອົງການ ແລະ ສູນຄົ້ນຄວ້າແຫ່ງຊາດ ຂອງປະເທດຕ່າງ ໆ ໃນອາຊີຕາເວັນອອກສຽງໃຕ້ ແມ່ນໄດ້ຕົກລົງກັນວ່າ ແຕ່ລະສາຍພັນຕ້ອງໄດ້ໃສ່ຊື່ສະເພາະຂອງມັນ. ຊື່ ສະເພາະເຫລົ່ານີ້ ແມ່ນຈະໄດ້ອີງໃສ່ ຊື່ສະເພາະທີ່ມີຢູ່ແລ້ວ ຕົວຢ່າງ: ສາຍພັນ "ອາມາຣິນໂລ" ຫລືຊື່ທົ່ວ ໄປ ເຊັ່ນ ຫຍ້າ "ແກມບາ", ບາງສາຍພັນກໍຈະເອົາຊື່ສະຖານທີ່ກຳເນີດ ເຊັ່ນ "ເຊເຣນເກຕີ" ຫລືສະຖານ ທີ່ ໆ ມີການນຳໃຊ້ສາຍພັນນັ້ນ ຢ່າງກວ້າງຂວາງ ເຊັ່ນ "ເບຊາກົນ".

ຕາຕະລາງກ່ຽວກັບສາຍພັນຕ່າງ ໆ ເຫລົ່າ ນີ້ ພ້ອມທັງຊື່, ນ້ຳເບີ, ຖິ່ນກຳເນີດ ໄດ້ຮວບຮວມໄວ້ ໃນພາກທີ 5.





ສະເຫນີຫລາຍທາງເລືອກໃຫ້ແກ່ຊາວກະສິກອນ (ປີເຕີ ຮອນ)

## 5. ສະເຫນີຫລາຍທາງເລືອກໃຫ້ແກ່ຊາວກະສິກອນ

ໃນເວລາທີ່ຊາວກະສິກອນ ເລີ້ມຕົ້ນການປະເມີນຜົນ, ຕ້ອງຮັບປະກັນວ່າ:

- ສະເຫນີຫລາຍຊະນິດ ແລະ ສາຍພັນ, ບໍ່ແມ່ນຈະແນະນຳພຽງແຕ່ ນຶ່ງ ຫລື ສອງສາຍພັນທີ່ທ່ານມັກເທົ່ານັ້ນ.
- ແຕ່ກໍ່ບໍ່ຄວນສະເຫນີໃນເວລາດຽວກັນ ຫລາຍທາງເລືອກໂພດ, ເພາະຈະເຮັດໃຫ້ຊາວກະສິກອນມີຄວາມຫຍຸ້ງ ຍາກໃນການປະເມີນຜົນຫລາຍ ໆ ສາຍພັນໃຫມ່. ຕາມຕົວຈິງແລ້ວ ເຫັນວ່າ 4-8 ສາຍພັນ ແມ່ນເຫມາະສົມດີ.
- ໃນໄລຍະເລີ້ມຕົ້ນ ຄວນປູກໃນເນື້ອທີ່ນ້ອຍ ກ່ອນທີ່ຈະຂະຫຍາຍເນື້ອທີ່ອອກໄປ. ເພາະໃນການເຮັດວຽກກັບຊາວກະສິກອນຫລາຍຄົນ ທີ່ປູກໃນເນື້ອທີ່ນ້ອຍ ຈະດີກວ່າ ເຮັດກັບບາງຄົນ ທີ່ ປູກໃນເນື້ອທີ່ກວ້າງ, ເພາະວ່າ ຖ້າເລີ້ມຕົ້ນນ້ອຍກ່ອນ ມັນຈະຄຸ້ມຄອງງ່າຍ ແລະ ຊາວກະສິກອນ ຈະມີໂອກາດໄດ້ຄັດເລືອກໃນຊະນິດ ຫລື ສາຍພັນ ທີ່ຕົນເອງມັກ ແລ້ວຈຶ່ງຂະຫຍາຍຊະນິດ ຫລື ສາຍພັນນັ້ນ ໆ ໄປຕາມຄວາມສາມາດຂອງຕົນເອງ.

# ຄວນຄັດເລືອກ ພືດອາຫານສັດທີ່ດີ ໄດ້ແນວໃດ...

# 3

# ຄວນຈະຄັດເລືອກພືດອາຫານສັດທີ່ດີໄດ້ແນວໃດ...?



ໃນການຄັດເລືອກພືດອາຫານສັດທີ່ດີ ເພື່ອນຳໄປຊຸກຍູ້ໃຫ້ຊາວກະສິກອນ ປະເມີນຜົນນັ້ນ ແມ່ນມີຂັ້ນຕອນດັ່ງລຸ່ມນີ້:

ຂັ້ນຕອນທີ 1 ນຳໃຊ້ຕາຕະລາງທີ 1 ເພື່ອຄັດເລືອກເອົາຊະນິດ ທີ່ ເຫັນວ່າເຫມາະສົມກັບວິທີການ ທີ່ຊາວກະສິກອນ ຕ້ອງການປູກ ແລະ ນຳໃຊ້.

ຂັ້ນຕອນທີ 2 ນຳໃຊ້ຕາຕະລາງທີ 2 ເພື່ອເບິ່ງວ່າແມ່ນຊະນິດໃດ ທີ່ແນະນຳສຳລັບ ສະພາບອາກາດ ແລະ ດິນ ຕ່າງ ໆ.

ຫ້ອງຫວ່າງໃນຕາຕະລາງ ທີ 2 ຫມາຍຄວາມວ່າ ຊະນິດນັ້ນບໍ່ເຫມາະສົມກັບ ສະພາບອາກາດ ແລະ ດິນ ລັກສະນະນັ້ນ. ຊະນິດໃດ ທີ່ມີຫມາຍດາວ 2 ຫນ່ວຍ (●● ) ຫມາຍວ່າ ເປັນຊະນິດ ທີ່ເຫມາະ ສົມ ຫລື ຄວນໃຊ້ເປັນທາງເລືອກທຳອິດ ໃນການທົດລອງໃນເງື່ອນໄຂດັ່ງກ່າວ. ຊະ ນິດທີ່ມີ ຫມາຍດາວດຽວ (●) ອາດຈະເຫມາະສົມ ແຕ່ຈະບໍ່ຈະເລີນເຕີບໂຕໄດ້ດີເທົ່າກັບ ຊະນິດ ທີ່ມີ ຫມາຍດາວ 2 ຫນ່ວຍ (●● ). ຍົກຕົວຢ່າງ: ຫຍ້າ ຣູມີດີໂກລາ ຈະເກີດໄດ້ດີໃນດິນ ທີ່ມີຄວາມອຸດົມ ສົມບູນດີ ແຕ່ໄດ້ຮັບພຽງກາດຽວ (●) ເພາະວ່າ ຖ້າສົມທຽບໃສ່ ຫຍ້າກີນີ ທີ່ປູກໃນດິນແບບດຽວກັນແລ້ວ ແມ່ນຫຍ້າກີນີ ຈະງາມກວ່າ.

ຂັ້ນຕອນທີ 3 ກວດກາຂໍ້ມູນໃນພາກ " ບາງຈຸດສຳຄັນທີ່ຕ້ອງໄດ້ພິຈາລະນາເປັນພິເສດ" ເພື່ອໃຫ້ຮູ້ວ່າ ມີບາງ ອັນ ກົງກັບສະພາບຂອງເຮົາເອງບໍ່.

ຂັ້ນຕອນທີ 4 ອ່ານຄຳອະທິບາຍ ກ່ຽວກັບແຕ່ລະຊະນິດ (ເບິ່ງພາກທີ 4 "ລາຍລະອຽດກ່ຽວກັບແຕ່ລະຊະນິດ") ທີ່ຄັດເລືອກມາ ເພື່ອຊອກຫາສາຍພັນຕ່າງ ໆ ແລະ ນຳໄປໃຫ້ຊາວກະສິກອນ ປະເມີນຜົນ.

ທັງ 4 ຂັ້ນຕອນນີ້ ແມ່ນເປັນພຽງຂໍ້ແນະນຳ ເພື່ອເຮັດໃຫ້ທ່ານງ່າຍຂຶ້ນ ໃນການເລີ້ມຕົ້ນຄັດເລືອກພືດອາຫານສັດ. ທ່ານສາມາດເລີ້ມຈາກຂັ້ນຕອນທີ 2 ກ່ອນຂັ້ນຕອນທີ 1 ແລ້ວແຕ່ທ່ານມັກ.
ໃນເມື່ອທ່ານຫາກຄຸ້ນເຄີຍກັບ ຂໍ້ມູນຕ່າງ ໆ ໃນປື້ມຫົວນີ້ແລ້ວ ທ່ານຈະເຫັນວ່າ
ການຄັດເລືອກພືດອາຫານສັດ ເພື່ອໃຫ້ຊາວກະສິກອນ ປະເມີນຜົນ ນັ້ນແມ່ນງ່າຍດາຍ.

ໃນພາກທີ 3 ນີ້ ແມ່ນຈະໄດ້ຈັດລຽງ ຫລື ສະເຫນີພຽງແຕ່ບາງຊະນິດທີ່ສຳຄັນເທົ່ານັ້ນ, ສ່ວນພືດອາຫານສັດບາງຊະນິດ ແລະ ສາຍພັນ ຕ່າງໆ ທີ່ເປັນປະໂຫຍດ ແມ່ນຮວບຮວມໄວ້ ໃນພາກທີ 4 "ລາຍລະອຽດກ່ຽວກັບແຕ່ຊະນິດ")

**ຕາຕະລາງ 1: ຄວາມເໝາະສົມຂອງພືດອາຫານສັດສຳລັບການນຳໃຊ້ຕ່າງ ໆ.**

| | ວິທີການປູກ ແລະ ນຳໃຊ້ພືດອາຫານສັດ | | | | | | | | | |
|---|---|---|---|---|---|---|---|---|---|---|
| | ຫຍ້າສວນຄົວ | ສວນຫຍ້າປ່ອຍໃຫ້ສັດເຂົ້າກິນ | ຮົ້ວຊີວະພາບ | ຕາວກັນເຈື່ອນ | ປັບປຸງໄຮ່ເກົ່າ | ພືດປົກຄຸມໃນສວນພືດລົ້ມລຸກ | ພືດປົກຄຸມຢູ່ກ້ອງຕົ້ນໄມ້ | ພືດປົກຄຸມດິນສຳລັບປ້ອງກັນການເຊາະ ເຈື່ອນ | ພືດຕະກູນຖົ່ວເປັນອາຫານເສີມໃນລະດູແລ້ງທີ່ຍາວ | ໃບຖົ່ວປົ່ນ(ແຫ້ງ) |
| **ຫຍ້າ** | | | | | | | | | | |
| ອັນໂດໂປກົນ ກາຢານັດ | ●● | ● | | ● | | | | | | |
| ບູາກິເຣຍ ບູີຊັນຕາ | ●● | ● | | ● | | | | | | |
| ບູາກິເຣຍ ດີກັມເບັນ | ● | ●● | | | | | | | | |
| ບູາກິເຣຍ ຮູມີດີໂກລາ | ● | ●● | | | | | | ● | | |
| ບູາກິເຣຍ ຣູຊີຊຽນຊິສ | ● | ●● | | | | | | ●● | | |
| ປານິກັມ ແມກຊີມັມ | ●● | ● | | ● | | | | ● | | |
| ປາສປາລອມ ອາຕຼາຕອມ | ●● | ●● | | ●● | | | | | | |
| ເປນີເຊຕອມ ເປີເປີຣຽມ | ●● | | | ● | | | | | | |
| ເຊຕາເຣຍ ສະພາເຊລາຕາ | ●● | ● | | ●● | | | | | | |
| **ຖົ່ວ** | | | | | | | | | | |
| ອາຣາຄິສ ປິນໂຕຍ | | ● | | | | | ●● | ●● | | |
| ກາລຽນໂກ ກາໂລທີຊັສ | ●● | | ● | ● | | | | | ● | |
| ເຊັນໂຕຼຊີມາ ມາໂຄກາຣປັມ | ● | | | | ●● | ●● | ● | ● | | |
| ເຊັນໂຕຼຊີມາ ປັບເບບເຊັນ | ● | | | | ●● | ●● | ● | ● | | |
| ເດັດສເມັນຕັສ ວີຣກາຕັສ | ●● | | | ● | | | | | | ●● |
| ເດັດສະໂມດຽມ ເຊເນເຣຍ | ●● | | | ●● | | | | | | |
| ແຄຟລັ່ງ (ກລີຣີຊີເດຍ ເຊປັມ) | ●● | | ●● | ● | | | | | ● | |
| ກະຖິນ | ●● | ● | ● | ● | | | | | ●● | ●● |
| ສະໄຕໂລຊຽນຕິສ ກຽນອາເນນຊິສ | ●● | ● | | ● | ●● | ●● | ● | | ●● | ●● |

**!** ຄຳເຕືອນ - ກະລຸນາເບິ່ງຄຳອະທິບາຍ ຢູ່ ພາກ "ບາງຈຸດສຳຄັນທີ່ຕ້ອງໄດ້ພິຈາລະນາເປັນພິເສດ"

●● – ປັບຕົວໄດ້ດີ. ● – ອາດປັບຕົວໄດ້. ບ່ອນບໍ່ມີກາດາວ – ປັບຕົວບໍ່ໄດ້

ຕາຕະລາງ 2: ການແນະນຳພືດອາຫານສັດ ສຳລັບ ສະພາບອາກາດ ແລະ ດິນ.

| | ສະພາບອາກາດ | | | ດິນ | | |
|---|---|---|---|---|---|---|
| | ເຂດຮ້ອນຊຸ່ມຊື້ນທີ່ບໍ່ມີ ຫລື ມີລະດູແລ້ງສັ້ນ | ເຂດຮ້ອນຊຸ່ມຊື້ນ/ແຫ້ງແລ້ງ ທີ່ມີລະດູແລ້ງຍາວ | ເຂດຮ້ອນທີ່ມີອາກາດເຢັນ (ໃນເຂດພື້ນທີ່ສູງ) | ດິນອຸດົມສົມບູນ(ຈາກດິນທຳມະດາ ຫາດິນເປັນກົດ/ສົ້ມປານກາງ) | ອຸດົມສົມບູນປານກາງ (ຈາກດິນທຳມະດາຫາດິນເປັນກົດປານກາງ) | ດິນບໍ່ດີ(ມີຄວາມເປັນກົດປານກາງ ຫາດິນທີ່ເປັນກົດທີ່ສຸດ) |
| **ຫຍ້າ** | | | | | | |
| ອັນຫໃດໂປກົນ ກາຢານັດ | ● | ●● | | ● | ● | ● |
| ບູາກີເຣຍ ບີຊັນຕາ | ● | ●● | ●● | ● | ●● | ● |
| ບູາກີເຣຍ ດີກັມເບີນ | ● | ●● | ●● | ● | ●● | ● |
| ບູາກີເຣຍ ຮູມີດີໂກລາ | ●● | ● | ● | ● | ● | ●● |
| ບູາກີເຣຍ ຮູຊີຊຽນຊີສ | ●● | | ● | ●● | ● | |
| ປານີກັມ ແມກຊີມັມ | ●● | ● | ● | ●● | ● | |
| ປາສປາລອມ ອາຕຼາຕອມ | ●● | | ● | ● | ●● | ● |
| ເປນີເຊຕອມ ເປີເປີຣຽມ ແລະ ລູກປະສົມ | ●● | | ● | ●● | ● | |
| ເຊຕາເຣຍ ສະພາເຊລາຕາ | ●● | ● | ●● | ●● | ● | |
| **ກົ່ວ** | | | | | | |
| ອາຣາຄິສ ປິນໂຕຍ | ●● | | ● | ●● | ●● | |
| ກາລຽນດູາ ກາໂລທີຊັສ | ● | | ●● | ● | ●● | |
| ເຊັນໂຕຼຊີມາ ມາໂກຼກາຣປັມ | ●● | ● | ● | ●● | ● | |
| ເຊັນໂຕຼຊີມາ ປັບເບບເຊັນ | ●● | ● | | ●● | ● | |
| :ດັດສເມັບຕັສ ວີຣກາຕັສ | ●● | | ●● | ●● | ● | |
| ເດັດສະໂມດຽມ ຊີເບເຣຍ | ● | ● | | ● | ● | |
| ແຄຝລັ່ງ(ກລີຣີຊີເດຍ ເຊປັມ) | ●● | ●● | | ● | ●● | |
| ກະກຶບ(ເລີກາເຢັນນາ ເລີກາເຊັບພາລາ) | ●● | ●● | ● | ●● | ● | |
| ສະໄຕໂລຊຽນຕິສ ກຽນອາເນນຊີສ | ●● | ●● | ● | ● | ●● | ●● |

●● – ປັບຕົວໄດ້ດີ.   ● – ອາດປັບຕົວໄດ້.   ບ່ອນບໍ່ມີກາດາວ – ປັບຕົວບໍ່ໄດ້

### ບາງຈຸດສຳຄັນທີ່ຕ້ອງພິຈາລະນາເປັນພິເສດ

ເພື່ອເປັນການຕື່ມໃສ່ຂໍ້ມູນ ທີ່ສະແດງໃນຕາຕະລາງ ທີ 1 ແລະ 2 ນັ້ນ, ຍັງມີ ບາງສະພາບສະເພາະ ທີ່ຈຳເປັນຕ້ອງໄດ້ພິຈາລະນາເປັນພິເສດ ໃນການຄັດເລືອກພືດອາຫານສັດ ເພື່ອສະເຫນີຕໍ່ຊາວກະສິກອນ.



### ພືດອາຫານສັດ ສຳລັບແກະ, ແບ້ ແລະ ງົວນ້ອຍ.

**ຄຳເຕືອນ** -ບໍ່ຄວນໃຫ້ ຫຍ້າພືດອາຫານສັດບາງຊະນິດ ເຊັ່ນ ບູາກີເຣຍ ບຼີຊັນຕາ, ບູາກີເຣຍ ດີເກມເບນ, ບູາກີເຣຍ ມູຕີກາ ຫລື ບູາກີເຣຍ ຣູຊີຊຽນຊີສ ເປັນອາຫານແກ່ ແກະ, ແບ້ ແລະ ງົວນ້ອຍ. ຖ້າສັດເຫລົ່ານີ້ກິນຫຍ້າ ດັ່ງກ່າວເປັນຈຳນວນຫລາຍ ຈະເຮັດໃຫ້ເກີດອາການພິດຕໍ່ແສງ (Photosensitisation) ໂດຍປົກກະຕິຈະເຖິງຂັ້ນ ຕາຍ. ຫຍ້າ ບູາກີເຣຍ ຣູມີດີໂກລາ ສາມາດ ໃຫ້ສັດ ກິນໄດ້ ໃນຈຳນວນຫນ້ອຍ, ຖ້າໃຫ້ຫລາຍ ກໍຈະເຮັດໃຫ້ເກີດມີ ອາການພິດຕໍ່ແສງເຫມືອນກັນ.



## ພືດອາຫານສັດ ສຳລັບສັດກະເພາະດຽວ



ພືດອາຫານສັດບາງຊະນິດ ສາມາດເປັນພິດຕໍ່ສັດກະເພາະດຽວໄດ້ ຖ້າໃຫ້ກິນເປັນຈຳນວນ ຫລາຍ. ຫຍ້າ ເຊຕາເຣຍ ສະປາເຊລາຕາ ດັ່ງທີ່ຮູ້ກັນແລ້ວວ່າ ເປັນພິດ ຕໍ່ ມ້າ, ເພາະມັນມີທາດ ອົກເຊເລຕສ (Oxalates) . ຕົ້ນກະຖິນ ກໍ່ສາມາດເປັນພິດຕໍ່ສັດກະເພາະດຽວຄືກັນ ເພາະມັນຈະມີ ທາດ ມີໂມຊິນ (Mimosine) . ໂດຍທົ່ວໄປແລ້ວ ໃນອາຫານຂອງສັດກະເພາະດຽວ ຄວນໃຊ້ກະຖິນ ບໍ່ໃຫ້ເກີນ 10 %. ເຖິງຢ່າງໃດກໍ່ຕາມ, ສຳລັບສັດຄ້ຽວເອື້ອງ (ງົວ ແລະ ແບ້) ແມ່ນສາມາດນຳໃຊ້ເປັນອາຫານ ໃນຈຳນວນຫລາຍໄດ້, ເພາະວ່າສັດຈຳພວກນີ້ສາມາດ ຍ່ອຍທາດ ມີໂມຊິນໄດ້ ໃນກະເພາະຂອງມັນ.





## ພືດອາຫານສັດ ສໍາລັບບ່ອນທີ່ມີຮົ່ມ

ພືດອາຫານສັດຫລາຍຊະນິດ ສາມາດເກີດໄດ້ໃນພື້ນທີ່ ໆ ມີຮົ່ມເລັກນ້ອຍ (ເປັນຕົ້ນແມ່ນກ້ອງຕົ້ນພ້າວ) ຄືກັນກັບບ່ອນທີ່ມີແສງພຽງພໍ. ພືດອາຫານສັດບາງຊະນິດ ທີ່ມັກຖືກນໍາໄປປູກໃຫ້ສັດເຂົ້າກິນ ໃນບ່ອນທີ່ມີຮົ່ມ ເລັກນ້ອຍນັ້ນ ໄດ້ແກ່ ຫຍ້າ ບູາກີເຣຍ ຣູມີດີໂກລາ , ສະເຕໂນຕາຟຣັມ ເຊກົນດາຕັມ (Stenotaphrum secundatum) ແລະ ອາຣາຄີສ ປິນໂຕຍ.

ຊາວກະສິກອນບາງຄັ້ງ ໄດ້ຖາມຫາພືດອາຫານສັດ ທີ່ສາມາດເກີດໃນຮົ່ມໄດ້. ແຕ່ໃນສະພາບດັ່ງກ່າວນີ້ ແມ່ນບໍ່ມີພືດອາຫານສັດຊະນິດໃດຫມົດ ທີ່ສາມາດເກີດໄດ້ດີ, ແຕ່ມີພຽງພືດອາຫານສັດບາງຊະນິດ ທີ່ ສາມາດປັບຕົວໄດ້ດີກັບການເອົາຕົວລອດ ໃນສະພາບທີ່ມີຮົ່ມລະດັບກາງ. ຕົວຢ່າງ: ກົ່ວ ອາຣາຄີສ ປິນໂຕຍ ສາມາດນໍາໃຊ້ປູກເພື່ອຄວບຄຸມຫນ້າດິນ ແລະ ວັດຊະພືດ ໃນເນື້ອທີ່ ໆ ມີຮົ່ມໄດ້, ແຕ່ມັນຈະບໍ່ໃຫ້ຜົນຜລິດຫລາຍ. ພືດອາຫານສັດບາງຊະນິດ ທີ່ ສາມາດເກີດໄດ້ໃນບ່ອນທີ່ມີຮົ່ມໃນລະດັບກາງ ເຊັ່ນ  ກົ່ວ ເຊັນໂຕຼຊີມາ ປັບເບເຊັນ ແລະ ມາໂຄຼກາຣປັມ, ປັດສະປາລອມ ອາຕຼາຕອມ, ປານີກັມ ແມກຊີມັມ, ເຊຕາເຣຍ ສະປາເຊລາຕາ, ບູາກີເຣຍ ດີເກມເບນ, ບູາກີເຣຍ ບຼີຊັນຕາ, ບູາກີເຣຍ ຣູມີດີໂກລາ ແລະ ສະເຕໂນຕາຟຣັມ ເຊກົນດາຕັມ.



## ພືດອາຫານສັດ ສຳລັບເຂດທີ່ມີລະດູແລ້ງແກ່ຍາວ

ພືດອາຫານສັດ ຕ້ອງການນ້ຳ ເພື່ອການຈະເລີນເຕີບໂຕ, ຮັກສາຄວາມຊຸ່ມເຢັນ ແລະ ລຳລຽງທາດບຳລຸງລ້ຽງຈາກດິນ. ດັ່ງນັ້ນ, ຈຶ່ງບໍ່ມີພືດອາຫານສັດຊະນິດໃດ ທີ່ຈະສາມາດໃຫ້ ຜົນຜລິດໄດ້ ໃນຕະຫລອດລະດູແລ້ງທີ່ແກ່ຍາວນັ້ນໄດ້. ມັນຈະມີພຽງວ່າ ອາດມີພືດອາຫານສັດຊະນິດໃດນຶ່ງ ສາມາດປັບຕົວເຂົ້າໄດ້ກັບສະພາບແຫ້ງແລ້ງນັ້ນໄດ້ດີກວ່າຊະນິດອື່ນ ໆ (ເບິ່ງຕາຕະລາງ 2). ມີຕົ້ນໄມ້ພືດອາຫານສັດ ແລະ ຕົ້ນຖົ່ວຈຳນວນນຶ່ງ ເຊັ່ນ ຕົ້ນກະຖິນ ແມ່ນມີລະບົບຮາກ ທີ່ສາມາດຢັ່ງລົງໄປເຖິງນ້ຳ ທີ່ຢູ່ເລິກລົງໄປໃນ ດິນໄດ້, ເຊິ່ງອັນນີ້ມັນສາມາດ ຊ່ວຍໃຫ້ຕົ້ນດັ່ງກ່າວສາມາດເຕີບໂຕ ແລະ ຮັກສາໃບໄວ້ໃນລະດູແລ້ງ ໄດ້ດີ ກວ່າຊະນິດອື່ນ ໆ. ນອກນັ້ນ ຍັງມີຫຍ້າ ແລະ ຖົ່ວບາງຊະນິດ ເປັນຕົ້ນແມ່ນ ຫຍ້າ ແກມບາ ແລະ ຖົ່ວ ເວຣາໂນ ທີ່ສາມາດຮັກສາໃບຂຽວ ໄວ້ໄດ້ໃນລະດູແລ້ງ.

## ພືດອາຫານສັດສຳລັບເຂດທີ່ມີດິນເປັນກົດ ແລະ ບໍ່ອຸດົມສົມບູນ

ພືດອາຫານສັດທຸກຊະນິດ ແມ່ນເກີດໄດ້ດີ ໃນດິນອຸດົມສົມບູນ ຫລື ປານກາງ. ແຕ່ບາງຊະນິດ ເຊັ່ນ ຫຍ້າເນເປຍພັນສິດ ແລະ ລູກປະສົມ ແມ່ນສາມາດເກີດໄດ້ແຕ່ໃນດິນອຸດົມສົມບູນເທົ່ານັ້ນ.

ພືດອາຫານສັດຫລາຍ ໆ ຊະນິດ ທີ່ໄດ້ແນະນຳໃນປຶ້ມຫົວນີ້ ແມ່ນສາມາດເກີດໄດ້ ໃນດິນທີ່ ບໍ່ອຸດົມສົມບູນ ແລະ ບາງຊະນິດ ເຊັ່ນ ຫຍ້າ ຣູນີດີໂກລາ ແລະ ກົ່ວສະໄຕໂລ ແມ່ນຍັງສາມາດເກີດ ໄດ້ໃນດິນເປັນກົດ ແລະ ບໍ່ອຸດົມສົມບູນອີກດ້ວຍ (ເບິ່ງຕາຕະລາງ 2). ເຖິງຢ່າງໃດກໍ່ຕາມ, ບໍ່ມີພືດ ອາຫານສັດຊະນິດໃດຫມົດ ທີ່ຈະໃຫ້ຜົນຜລິດສູງ ໃນດິນທີ່ບໍ່ອຸດົມສົມບູນ ຈົນກວ່າຈະນຳໃຊ້ຝຸ່ນເຄມີ ຫລື ຝຸ່ນຄອກເຂົ້າໃສ່. ໃນສະພາບທີ່ດິນບໍ່ດີແທ້ ໆ ນັ້ນ, ພືດອາຫານສັດ ອາດຈະບໍ່ສາມາດບັນຈຸເອົາທາດບຳລຸງລ້ຽງຕ່າງ ໆ ທີ່ຈຳເປັນສຳລັບການເຕີບໂຕຂອງສັດ.

## ພືດອາຫານສັດ ສຳລັບດິນເປັນດ່າງ (ເຄັມ)

ພືດອາຫານສັດຫລາຍຊະນິດ ສາມາດເກີດໄດ້ໃນດິນເປັນດ່າງ (ເຄັມ). ບາງຊະນິດກໍ່ເຫມາະສົມສະເພາະກັບດິນທີ່ມີ pH ສູງ ເຊັ່ນ ຕົ້ນກະຖິນ, ກົ່ວ ເດັດສະມັນຕັສ ວິຣກາຕັສ ແລະ ບູາກີເຣຍ ຣູນີດີໂກລາ. ມີກົ່ວຊະນິດນຶ່ງ ທີ່ເກີດບໍ່ໄດ້ດີ ໃນ ດິນ ທີ່ ເປັນດ່າງຫລາຍ - ກົ່ວສະໄຕໂລແຂນຕິສ ກີອາເນນຊີສ.





## ພືດອາຫານສັດ ສຳລັບເຂດດິນທີ່ມີສະພາບນ້ຳຂັງ

ຫລາຍຊະນິດສາມາດທົນໄດ້ກັບສະພາບນ້ຳຂັງໃນໄລຍະສັ້ນ (ສາມ-ສີ່ ມື້). ມີພຽງບາງຊະນິດເທົ່ານັ້ນ ທີ່ສາມາດເກີດໄດ້ດີ ໃນດິນທີ່ມີນ້ຳຂັງໃນໄລຍະຍາວ, ບາງຊະນິດກໍສາມາດທົນທານຕໍ່ສະພາບດັ່ງກ່າວໄດ້ດີກວ່າ ຊະນິດອື່ນ ໆ ເຊັ່ນ: ຫຍ້າ ບຣາກິເຣຍ ມູຕິກາ, ປັດສະປາລອມ ອາຕຣາຕອມ, ເຊຕາເຣຍ ສະປາເຊລາຕາ, ບຣາກິເຣຍ ຮູມີດີໂກລາ, ກົ່ວ ມາໂຄຣຕີລຽມ ກຣາຊີລ ແລະ ໂກດາຣິໂອກາລີກສ ຈີໂຣຍດີສ.

## ພືດອາຫານສັດ ສຳລັບເຂດທີ່ຖືກໄຟໄໝ້ເລື້ອຍ ໆ

ພືດອາຫານສັດ ຕະກຸນຫຍ້າຫລາຍຊະນິດ ຈະທົນທານຕໍ່ໄຟໄໝ້ ເພາະວ່າຈຸດຈະເລີນເຕີບໂຕຂອງຫຍ້າແມ່ນຢູ່ຕິດກັບພື້ນດິນ (ຕົວຢ່າງ: ຕະກຸນ ບຣາກິເຣຍ). ແຕ່ພືດອາຫານສັດຕະກຸນກົ່ວ ທຸກ ໆ ຊະນິດ ແມ່ນມີຈຸດຈະ ເລີນເຕີບໂຕຢູ່ສູງ ແລະ ຖືກທຳລາຍ ຫລື ເຜົາໄໝ້ໄດ້ງ່າຍ (ຕົວຢ່າງ: ກົ່ວ ສະໄຕໂລ ແລະ ເຊັນໂຕຣ). ເຖິງຢ່າງໃດກໍຕາມ, ກົ່ວເຫລົ່ານີ້ ຫລັງຈາກໄຟໄໝ້ແລ້ວ ແມ່ນຈະເກີດຄືນຂຶ້ນມາອີກຈາກແກ່ນ. ມີຕົ້ນໄມ້ອາຫານສັດຕະກຸນກົ່ວ ຊະນິດນຶ່ງ ທີ່ທົນທານຕໍ່ໄຟໄໝ້ໄດ້ດີ ຄື ຕົ້ນກະຖິນ.



# ລາຍລະອຽດ ກ່ຽວກັບ ແຕ່ລະຊະນິດ ...

# 4

# ລາຍລະອຽດ ກ່ຽວກັບ ແຕ່ລະຊະນິດ ...



ລັກສະນະການຈະເລີນເຕີບໂຕ ແລະ ໄລຍະການດຳລົງຊີວິດ ຂອງບັນດາພືດອາຫານສັດຊະນິດຕ່າງ ໆ ທີ່ສຳຄັນ ທີ່ໄດ້ຮວບຮວມໄວ້ໃນປຶ້ມຫົວນີ້ ແມ່ນ ໄດ້ສະແດງຢູ່ໃນຕາຕະລາງທີ 3. ລາຍລະອຽດກ່ຽວກັບພືດອາຫານສັດ ແຕ່ລະຊະນິດເຫລົ່ານັ້ນ ແມ່ນໄດ້ສັງລວມໄວ້ຢູ່ໃນພາກນີ້, ພາຍໃຕ້ຫົວຂໍ້:

(1) ພືດອາຫານສັດຕະກຸນຫຍ້າ
(2) ພືດອາຫານສັດຕະກຸນກົ່ວ (ລວມເອົາທັງກົ່ວພຸ່ມ, ເປັນຕົ້ນ ແລະ ຕົ້ນໄມ້ອາຫານສັດຕະກຸນກົ່ວ)
(3) ພືດອາຫານສັດຊະນິດອື່ນ ໆ ທີ່ເປັນປະໂຫຍດ ຫລື ທ່າແຮງ (ລວມທັງພືດອາຫານສັດ ທີ່ສາມາດນຳໃຊ້ສຳລັບສະພາບ ຫລື ເງື່ອນໄຂໃດນຶ່ງໂດຍສະເພາະ ຫລື ຍັງບໍ່ທັນໄດ້ໄປ ທົດສອບເພື່ອໃນລະບົບການຜລິດຂອງຊາວກະສິກອນ.

ສາຍພັນທີ່ດີທີ່ສຸດ ຂອງແຕ່ລະຊະນິດ ແມ່ນ ໄດ້ຈັດລຽງຢູ່ໃນຫ້ອງຂອງສາຍພັນ. ສ່ວນລາຍຊື່, ນ້ຳເບີ ແລະ ຊື່ສະເພາະ ຂອງພືດອາຫານສັດສາຍພັນຕ່າງ ໆ ເຫລົ່ານີ້ ແມ່ນໄດ້ສັງລວມໄວ້ ໃນພາກ ທີ 5 "ເອກະສານຊ້ອນທ້າຍ".

ຕາຕະລາງ 3: ລັກສະນະການຂະຫຍາຍຕົວ ແລະ ໄລຍະຊີວິດ ຂອງ ພືດອາຫານສັດ

| ຊະນິດ | ສາຍພັນ | ລັກສະນະການຂະຫຍາຍຕົວ: ຫຍ້າເຕ້ຍ, ມີລຳຕົ້ນແຂງແຮງ ເລືອໄປຕາມດິນ | ຫຍ້າສູງປານກາງເປັນພຸ່ມ | ຫຍ້າທີ່ສູງຊື່ ແລະເປັນສຸມ | ກົ່ວທີ່ເປັນເຄືອກ້ຽວ | ກົ່ວເປັນພຸ່ມ | ກົ່ວເປັນຕົ້ນ | ຕົ້ນໄມ້ອາຫານສັດ | ດຳລົງຊີວິດໄດ້ດົນປານໃດ ? |
|---|---|---|---|---|---|---|---|---|---|
| **ຫຍ້າ** | | | | | | | | | |
| ອັນໂດໂປກົນ ກາຢານັດ | ແກມບາ | | | ● | | | | | |
| ບຼາກິເຣຍ ບຼີຊັນຕາ | ມາຣານດູ; | | | ● | | | | | |
| | ກາຣັນກາ | | ● | | | | | | |
| | ເຊເຣນເກຕີ | | ● | | | | | | |
| ບຼາກິເຣຍ ດີກັມເບັນ | ບາເຊລິສກ | ● | | | | | | | |
| | (ຊີກນານ) | | ● | | | | | | |
| ບຼາກິເຣຍ ຮູມິດີໂກລາ | ຕູລີ; ຢາເບໂຮ | | | ● | | | | | |
| ບຼາກິເຣຍ ຣູຊີຊຽນຊິສ | ຣູຊີ | | | ● | | | | | |
| ປານິກັມ ແມກຊີມັມ | ສີມ່ວງ | | | ● | | | | | |
| ປາສປາລອມ ອາຕຼາຕອມ | :ຕເຣໂນສ | | | | | | | | |
| ເປນິເຊຕອມ ເປີເປີຣຽມ | :ມເປຍ;ມອດ, ຄິງ | | | ● | | | | | |
| ເຊຕາເຣຍ ສະພາເຊລາຕາ | ລຳປຸງ, ໂຊແລນເດີ | | | | | | | | |
| **ກົ່ວ** | | | | | | | | | |
| ອາຣາຄິສ ປິນໂຕຍ | ອາມາຣິໂລ, | ● | | | | | | | |
| | ອີຕາແກມບີຣາ | | | | | | | | |
| ກາລຽນດຼາ ກາໂລທີຊັສ | ເບຊາກີ | | | | | | | ● | |
| ເຊັນໂຕຼຊີມາ ມາໂຄຼກາຣປັມ | ອູກາຢາລີ | | | | ● | | | | |
| ເຊັນໂຕຼຊີມາ ປັບເບບເຊັນ | ບາຣີມັສ | | | | ● | | | | |
| ເດັດສເມັນຕັສ ວີຣກາຕັສ | ຈາລັນ | | | | | ● | | | |
| ເດັດສະໂມດຽມ ຊິເບເຣຍ | ລັດ ເດລີຊຽດສ | | | | | | ● | | |
| ແຄຝລັງ(ກລີຣີຊີເດຍ ເຊປັມ) | ເຣຕາຮູເລ, | | | | | | | ● | |
| | ເບເລັນຣີວັສ | | | | | | | | |
| ກະຖິນ | K636 , K584 | | | | | | | ● | |
| ສະໄຕໂລແຊນຕິສ ກິອາເນນຊີສ | ສະໄຕໂລ 184 | | | | | ● | | | |

ສ - ໄລຍະຊີວິດສັ້ນ (1-3 ປີ)  ຍ - ໄລຍະຊີວິດຍາວ (ຫລາຍກວ່າ 3 ປີ)  ຍຫຼ - ໄລຍະຊີວິດຍາວຫລາຍ (ຫລາຍກວ່າ 6 ປີ)

# ພືດອາຫານສັດຕະກຸນຫຍ້າ

## ອັນໂດຣໂປໂກນ ກາຢານັສ

(*Andropogon gayanus*)

ສາຍພັນທີ່ແນະນຳ:

**ແກມບາ**

- ເປັນຫຍ້າສູງ ເໝາະສົມສຳລັບການຕັດ.
- ໃນລະດູແລ້ງຍັງຂຽວງາມຢູ່.
- ສາມາດເກີດໄດ້ດີ ໃນດິນບໍ່ອຸດົມສົມບູນ ແລະ ດິນເປັນກົດ.

ແຕ່

- ຖ້າຫາກບໍ່ຕັດເລື້ອຍ ໆ ຈະກາຍເປັນກ່າງຫລາຍ.



❶

ຫຍ້າ ແກມບາ ເປັນຫຍ້າຢືນຕົ້ນ ສູງ ແລະ ເປັນຫຍ້າທີ່ສັດມັກກິນ ໃນເວລາຍັງອ່ອນ, ມີໃບອ່ອນ ແລະ ມີອິນອ່ອນ ໆ. ຊໍ່ດອກຈະອອກທີ່ລຳຕົ້ນສູງ (ສູງເຖິງ 4 ແມັດ). ແກ່ນຫຍ້າຊະນິດນີ້ ແມ່ນ ເບົາ ແລະ ເປັນອິນ.

ຫຍ້າ ແກມບາ ຈະເກີດໄດ້ດີໃນດິນບໍ່ອຸດົມສົມບູນ, ດິນເປັນກົດ ໃນເຂດທີ່ມີອາກາດຮ້ອນ. ຫຍ້າຊະນິດນີ້ ຈະເກີດໄດ້ດີໃນຫລາຍສະພາບອາກາດ ແຕ່ໂດຍສະເພາະ ຈະເປັນປະໂຫຍດ ໃນເຂດທີ່ມີລະດູແລ້ງ ແກ່ຍາວ. ມັນຈະຍັງຄົງຂຽວຢູ່ ໃນລະດູແລ້ງ ໃນເວລາທີ່ ຫຍ້າຫລາຍ ໆ ຊະນິດແມ່ນແຫ້ງຫ່ຽວແລ້ວ.

ຫຍ້າ ແກມບາ ແມ່ນ ຕັດງ່າຍ ແຕ່ກໍທົນທານຕໍ່ການຢຽບຢ່ຳ ແລະ ກັດແທ້ນຂອງສັດ. ເຊິ່ງຈຳເປັນຕ້ອງໄດ້ຕັດເລື້ອຍ ໆ ຫລືບໍ່ດັ່ງນັ້ນ ມັນຈະອອກດອກ ແລະ ກາຍເປັນກ່າງຫລາຍ ແລ້ວສັດກໍຈະບໍ່ກິນ.

ຫຍ້າຊະນິດນີ້ ສາມາດນຳເອົາເຫງົ້າຮາກອ່ອນໄປຂະຫຍາຍໄດ້ຢ່າງງ່າຍດາຍ ແຕ່ບໍ່ຄວນ ເອົາເຫງົ້າແກ່. ການປູກດ້ວຍແກ່ນ ໂດຍທົ່ວໄປແມ່ນຈະພົບຄວາມຫຍຸ້ງຍາກ ເພາະວ່າຄຸນນະພາບ ຂອງແກ່ນຈະບໍ່ຄ່ອຍດີ.

❶ ແກ່ນຫຍ້າ ແກມບາ ຈະມີລັກສະນະເປັນອິບ ແລະ ເບົາ (ເວີນເນີ ສະເຕືອ)

❷ ຫຍ້າ ແກມບາ ຈະມີກ່າງຫລາຍກ້ານບໍ່ຕັດເລື້ອຍ ໆ (ຈີມ ໂຣມ)

❸ ຫຍ້າ ແກມບາ ຈະມີໃບຫລາຍກ້າຕັດເປັນປະຈຳ (ເວີນເນີ ສະເຕືອ)

❹ ຢູ່ ມາໂກຼມັນ, ປະເທດອິນໂດເນເຊຍ ຫຍ້າ ແກມບາ ຈະປູກໄວ້ສຳລັບຕັດໃຫ້ສັດກິນ (ເວີນເນີ ສະເຕືອ)


❷


❸


❹

# ບຣາກີເອຍ ບຣິຊັນຕາ
(*Brachiaria brizantha*)

ສາຍພັນທີ່ແນະນຳ:
**ມາຣັນດູ** (CIAT 6780)
**ກາຣັນກາ** (CIAT 16835)
**ເຊເຣນເກຕີ** (CIAT 6387)

- ເປັນຫຍ້າສູງເຫມາະສົມສຳລັບການຕັດ.
- ເກີດໄດ້ດີ ໃນດິນອຸດົມສົມບູນປານກາງ ແລະ ດິນເປັນກົດ.
- ໃຫ້ຜົນຜລິດແກ່ນດີກວ່າ ຫຍ້າ ບຣາກີເອຍ ດີແກມເບີນ (ຊີກນານ).

ແຕ່

- ບໍ່ຄວນໃຊ້ຫຍ້າຊະນິດນີ້ເປັນອາຫານຢ່າງດຽວ ສຳລັບ ແບ້, ແກະ ແລະ ງົວນ້ອຍ.



❶

ບຣາກີເອຍ ບຣິຊັນຕາ ເປັນຫຍ້າປະເພດຍືນຕົ້ນ ມີລັກສະນະການຂະຫາຍຕົວຫລາຍແບບ. ທຸກ ໆ ສາຍພັນ ແມ່ນເຫມາະສົມສຳລັບການຕັດ. ໃນສາມສາຍພັນທີ່ໄດ້ແນະນຳນັ້ນ ສອງສາຍພັນ "ມາຣັນດູ" (CIAT 6780) ແລະ "ກາຣັນກາ" (CIAT 16835) ແມ່ນ ສູງ, ເຊິ່ງສູງເຖິງ 2 ແມັດ, ສ່ວນ ສາຍພັນ "ເຊເຣັນເກຕີ" (CIAT 6387) ແມ່ນຈະສັ້ນກວ່າ (ປະມານ 1 ແມັດ) ແລະ ມີລັກສະນະ ການຂະຫຍາຍຕົວ ຄ້າຍຄືກັບ ຫຍ້າ ບຣາກີເອຍ ດີເກມເບີນ. ທັງສາມສາຍພັນນີ້ ແມ່ນຜລິດແກ່ນໄດ້ດີ, ຍົກເວັ້ນຢູ່ໃນ ພື້ນທີ່ໃກ້ເສັ້ນສູນສູດ.

ທັງສາມສາຍພັນ ແມ່ນ ປັບຕົວໄດ້ດີໃນຫລາຍສະພາບອາກາດ ແລະ ດິນ.  ຫຍ້າດັ່ງກ່າວນີ້ ຈະເກີດ ແລະ ທົນທານໄດ້ໃນດິນບໍ່ອຸດົມສົມບູນ ແລະ ດິນເປັນກົດ, ແຕ່ພວກມັນຈະຕ້ອງການດິນທີ່ມີ ຄວາມອຸດົມສົມບູນ ສຳລັບການຈະເລີນເຕີບໂຕທີ່ດີ ຫລາຍກວ່າ ຫຍ້າ ບຣາກີເອຍ ດີເກມເບີນ ແລະ ຫຍ້າ ບຣາກີເອຍ ຣູມີດີໂກລາ. ໃນລະດູແລ້ງ ຫຍ້າ ບຣາກີເອຍ ບຣິຊັນຕາ ຈະຍັງຂຽວຢູ່.

ຫຍ້າ ບຣາກີເອຍ ບຣິຊັນຕາ ບໍ່ຄວນຈະນຳໄປເກືອແກະ, ແບ້ ແລະ ງົວນ້ອຍ (ເບິ່ງ ພາກທີ 3, ບາງຈຸດສຳຄັນ ທີ່ຕ້ອງໄດ້ພິຈາລະນາ)

ສາຍພັນ "ມາຣັນດູ" ແມ່ນເກີດບໍ່ໄດ້ດີ ໃນດິນທີ່ມີນ້ຳຖ້ວມຂັງ ແລະ ບາງຄັ້ງໃບມັກຕິດພະຍາດ ໃນເຂດ ທີ່ມີຝົນຕົກຫລາຍ. ແຕ່ສອງສາຍພັນຍັງເຫລືອນັ້ນ ແມ່ນຈະເຫມາະສົມກວ່າ ໃນສະພາບດັ່ງກ່າວນີ້.

ຫຍ້າ ບູາກິເຣຍ ບູີຊັນຕາ ສາມາດຂະຫຍາຍ ຫລື ປູກດ້ວຍເຫງົ້າ ຫລື ແກ່ນ ໄດ້ຢ່າງງ່າຍດາຍ.





❶ ຫຍ້າ ບູີຊັນຕາ ສາຍພັນ ມາຣັນດູ ປູກໄວ້ໃກ້ເຮືອນສຳລັບຕັດໃຫ້ສັດກິນ (ເວີນເນີ ສະເຕືອ)

❷ ຫຍ້າ ສາຍພັນມາຣັນດູ ຍັງຂຽວຢູ່ ໃນລະດູແລ້ງ ແຕ່ຫຍ້າ ປັດສະປາລອມ ແມ່ນເລີ້ມແຫ້ງ (ເວີນເນີ ສະເຕືອ)

❸ ຫຍ້າ ບູີຊັນຕາ ຜລິດແກ່ນໄດ້ດີ (ຈີມ ໂຮມ)

❹ ຫຍ້າ ສາຍພັນ ມາຣັນດູ (ຈີມ ໂຮມ)



# ບູາກີເຣຍ ດີເກມເບນ

(*Brachiaria decumbens*)

ສາຍພັນທີ່ແນະນຳ:

**"ບາຊີລີສກ" (ຊີກນານ)**

- ເຫມາະສົມສຳລັບປູກໃຫ້ສັດເຂົ້າກິນ, ບາງຄັ້ງກໍປູກສຳລັບຕັດໃຫ້ກິນໄດ້.
- ປັບຕົວໄດ້ດີໃນດິນຫລາຍປະເພດ.
- ໃນລະດູແລ້ງກໍຍັງຂຽວຢູ່.

ແຕ່:

- ບໍ່ຄວນໃຊ້ຫຍ້າຊະນິດນີ້ຢ່າງດຽວເປັນອາຫານສຳລັບ ແກະ, ແບ້ ແລະ ງົວນ້ອຍ.
- ໃຫ້ຜົນຜລິດແກ່ນບໍ່ໄດ້ດີ ໃນອາຊີຕາເວັນອອກສ່ຽງໃຕ້.



❶

ຫຍ້າ ບາຊີລີສກ (ຊີກນານ) ເປັນຫຍ້າປະເພດຍືນຕົ້ນ ແຂງແຮງ ແລະ ສູງ ປະມານ 1 ແມັດ. ກ້າຫາກບໍ່ໄດ້ຕັດລຳຕົ້ນ ຫລື ແຫນງຈະລົ້ມລົງສູ່ພື້ນ ແລະ ຂະຫຍາຍອອກໄປ ທາງຂ້າງ ເຮັດໃຫ້ປົກຄຸມຫນ້າດິນໄດ້ດີ. ການຜລິດແກ່ນ ແມ່ນ ບໍ່ໄດ້ດີ ໃນ ອາຊີຕາເວັນ ອອກສ່ຽງໃຕ້.

ຫຍ້າຊະນິດນີ້ ສາມາດປັບຕົວເຂົ້າໃນຫລາຍສະພາບອາກາດ ແລະ ດິນຫລາຍປະເພດ, ທົນທານກັບດິນເປັນກົດ ແລະ ດິນບໍ່ອຸດົມສົມບູນ, ເຫມາະສົມກັບເຂດຮ້ອນ ທີ່ມີອາກາດຊຸ່ມຊື່ນ/ແຫ້ງແລ້ງ ແລະ ຍັງຂຽວຢູ່ໃນ ລະດູແລ້ງ. ຫຍ້າ ບາຊີລີສກ ຈະທົນທານ ໃນສະພາບດິນທີ່ມີ ຄວາມອຸດົມສົມບູນຕ່ຳ ແລະ ລະດູແລ້ງຍາວ ໄດ້ດີກວ່າ ຫຍ້າ ບູີຊັນຕາ.

ຫຍ້າ ບູາກີເຣຍ ດີເກມເບີນ ບໍ່ຄວນຈະເອົາໄປເກືອແກະ, ແບ້ ແລະ ງົວນ້ອຍ(ເບິ່ງ ພາກທີ 3, ບາງຈຸດສຳ ຄັນທີ່ ຕ້ອງໄດ້ພິຈາລະນາ)

ສາມາດຂະຫຍາຍພັນໄດ້ດ້ວຍເຫງົ້າ. ການປູກດ້ວຍແກ່ນ ອາດຈະບໍ່ໄດ້ຮັບຜົນດີ ເນື່ອງຈາກຄຸນນະພາບຂອງເມັດບໍ່ຄ່ອຍຈະດີ.

*<u>ຫມາຍເຫດ:</u> ຫຍ້າ ບູາກີເອຍ ບູີຊັນຕາ ສາຍພັນ ເຊເຣນເກຕີ (CIAT 6387) ສາມາດນຳໃຊ້ແທນ ຫຍ້າ ບູາກີເອຍ ດີເກມເບີນ ສາຍພັນ ບາຊີລີສກ (ຊິກນານ)ໄດ້, ເພາະມັນມີລັກສະນະການຂະຫຍາຍຕົວຄ້າຍຄືກັນ, ແຕ່ສິ່ງທີ່ແຕກຕ່າງຈາກ ບາຊີລີສກ ແມ່ນ ເຊເຣນເກຕີ ໃຫ້ຜົນຜລິດແກ່ນດີກວ່າ ໃນຫລາຍເຂດຂອງອາຊີຕາເວັນອອກ ສ່ຽງໃຕ້.*



❷



❸

❶ ສວນຫຍ້າ ສຳລັບປ່ອຍສັດເຂົ້າກິນ ຢູ່ ນອດຕ ສຸມາຕຼາ. ອິນໂດເນເຊຍ (ເວີນເນີ ສະເຕືອ)

❷ ຫຍ້າ ສາຍພັນ ບາເຊລີສກ (ຈິມ ໂຣມ)

❸ ຜົນຜລິດແກ່ນ ຂອງ ຫຍ້າ ບາເຊລີສກ ແມ່ນບໍ່ໄດ້ດີ ຢູ່ ອາຊີຕາເວັນອອກສ່ຽງໃຕ້ (ເວີນເນີ ສະເຕືອ)

# ບຣາກີເຣຍ ຮູມີດີໂກລາ

(*Brachiaria humidicola*)

ສາຍພັນທີ່ແນະນຳ:

**ຕູລີ** (cv Tully )

**ຢາເນໂຣ** (CIAT 6133)

- ເປັນຫຍ້າ ທີ່ ມີລຳຕົ້ນເລືອໄປຕາມໜ້າດິນ.
- ດີສຳລັບການປ້ອງກັນການເຊາະເຈື່ອນ.
- ສາມາດທົນທານຕໍ່ການຢຽບຢ່ຳຂອງສັດເປັນຈຳນວນຫລາຍໄດ້.
- ສາມາດເກີດໄດ້ໃນດິນທີ່ບໍ່ອຸດົມສົມບູນ.
- ສາມາດທົນທານຕໍ່ສະພາບນ້ຳຂັງໄດ້ໃນລະດັບໃດນຶ່ງ.

ແຕ່

- ເປັນອາຫານທີ່ມີຄຸນນະພາບຕ່ຳກວ່າຫຍ້າບຣາກີເຣຍ ຊະນິດອື່ນ ໆ.



1

ຫຍ້າ ບຣາກີເຣຍ ຮູມີດີໂກລາ ເປັນຫຍ້າທີ່ແຜ່ລາມໄດ້ດີເລີດ ແຕ່ລຳຕົ້ນຈະເຕ້ຍ, ມັນຈະແຜ່ ລາມໄດ້ໄວ ໂດຍລຳຕົ້ນທີ່ມີຮາກປົ່ງອອກຕາມຂໍ້. ສາຍພັນ "ຢາເນໂຣ" ຈະມີໃບຫລາຍກວ່າ ສາຍພັນ "ຕູລີ", ແຕ່ທັງສອງສາຍ ພັນນີ້ແມ່ນມີຄຸນຄ່າທາງອາຫານ ຕ່ຳກວ່າຫຍ້າບຣາກີເຣຍຊະນິດ ອື່ນ ໆ. ສາຍພັນ " ຕູລີ" ຈະຂະຫຍາຍໄດ້ໄວກວ່າ ສາຍພັນ " ຢາເນໂຣ " ແລະ ເໝາະສົມສຳລັບ ການໃຊ້ປ້ອງກັນການເຊາະເຈື່ອນໄດ້ດີກວ່າ. ການຜລິດແກ່ນ ແມ່ນ ບໍ່ໄດ້ດີ ໃນ ອາຊີຕາເວັນອອກ ສ່ຽງໃຕ້.

ຍ້ອນທັງສອງສາຍພັນນີ້ ເປັນຫຍ້າທີ່ເຕ້ຍ ຈຶ່ງບໍ່ຄ່ອຍຈະເໝາະສົມສຳລັບການຕັດ ໃຫ້ສັດ ກິນ ຄືກັນກັບຫຍ້າບຣາກີເຣຍອື່ນ ໆ, ແຕ່ມັນຈະສາມາດທົນທານຕໍ່ການຢຽບຢ່ຳຂອງສັດ ເປັນ ຈຳນວນຫລາຍໄດ້.

ຫຍ້າຊະນິດນີ້ ສາມາດເກີດໄດ້ໃນດິນຫລາຍປະເພດ ຈາກດິນທີ່ບໍ່ອຸດົມສົມບູນ, ດິນເປັນກົດ ຫາ ດິນຊາຍ ທີ່ມີ pH ສູງ. ຫຍ້າດັ່ງກ່າວນີ້ ແມ່ນ ຈະເກີດ ຫລື ຂະຫຍາຍຕົວ ໃນເຂດຮ້ອນຊຸ່ມຊື່ນ ທີ່ບໍ່ມີລະດູແລ້ງ ຫລື ລະດູແລ້ງສັ້ນ ໄດ້ດີກວ່າ. ນອກນັ້ນ, ຍັງທົນທານສະພາບນ້ຳຂັງ ແລະ ນ້ຳຖ້ວມໃນໄລຍະສັ້ນໄດ້.

ຫຍ້າຊະນິດນີ້ ຕ້ອງປ່ອຍໃຫ້ສັດເຂົ້າກິນເລື້ອຍ ໆ ໃນຊ່ວງລະດູຝົນ ຖ້າບໍ່ດັ່ງນັ້ນ ຈະເຮັດໃຫ້ມີ ກ່າງຫລາຍ ແລະ ສັດຈະບໍ່ມັກກິນ. ການປູກດ້ວຍທ່ອນພັນ ຫລື ລຳຕົ້ນ ແມ່ນງ່າຍກວ່າ. ການ ປູກດ້ວຍແກ່ນຈະ ມີຄວາມຫຍຸ້ງຍາກ ເຖິງວ່າຈະໃຊ້ເມັດພັນທີ່ມີຄຸນນະພາບດີກໍ່ຕາມ, ເພາະການ ປູກສ້າງແມ່ນຕ່ຳ (ການຈະເລີນເຕີບໂຕໃນໄລຍະທຳອິດແມ່ນຊ້າ). ຄຸນນະພາບຂອງແກ່ນບໍ່ຄ່ອຍດີ.

ຫຍ້າ ບູາກີເຣຍ ຮູມີດີໂກລາ ແມ່ນສາມາດນຳໄປເກືອແກະ, ແບ້ ແລະ ງົວນ້ອຍໄດ້ໃນ ຈຳນວນຫນ້ອຍ, ເພາະຖ້າໃຫ້ເປັນຈຳນວນຫລາຍ ສັດເຫລົ່ານີ້ ຈະໄດ້ຮັບຜົນສະທ້ອນຈາກ ອາການເປັນພິດຕໍ່ແສງ.

<u>**ຫມາຍເຫດ:**</u> ສາຍພັນ "ຢາເນໂຣ" ແມ່ນສາຍພັນດຽວກັນກັບ ໃນເມື່ອກ່ອນທີ່ເຄີຍຮູ້ກັນມາ ໃນນາມສາຍພັນ ບູາກີເຣຍ ດິກຕີໂອເນີຣາ CIAT 6133 (Brachiaria dictyoneura CIAT 6133).



❶ ຫຍ້າ ຮູມີດີໂກລາ (ສາຍພັນ ຢາເນໂຣ) ທົນທານຕໍ່ການກັດເລັມຂອງສັດ (ເວີນເນີ ສະເຕືອ)
❷ ຫຍ້າ ຮູມີດີໂກລາ (ສາຍພັນ ຢາເນໂຣ) ແຜ່ຂະຫຍາຍດ້ວຍລຳຕົ້ນ (ເວີນເນີ ສະເຕືອ)
❸ ຫຍ້າ ສາຍພັນ ຕູລີ ເປັນຫຍ້າທີ່ດີທີ່ສຸດ ສຳລັບປູກປ້ອງກັນການເຊາະເຈື່ອນ (ເວີນເນີ ສະເຕືອ)
❹ ຫຍ້າ ສາຍພັນ ຕູລີ ແລະ ຢາເນໂຣ ສາມາດປູກເປັນທົ່ງຫຍ້າ ທີ່ມີຄວາມຫນາແຫນ້ນ (ຈິມ ໂຣມ)





# ບຣາກີເອຍ ຣູຊີຊຽນຊີສ
## (*Brachiaria ruziziensis*)



❶



❷

ສາຍພັນທີ່ແນະນຳ:

**ຣູຊີ**

- ໃຫ້ຜົນຜລິດແກ່ນດີ.
- ປູກໄດ້ຢ່າງງ່າຍດາຍ ທັງຈາກແກ່ນ ແລະ ລຳຕົ້ນ.
- ເປັນພືດອາຫານສັດທີ່ມີຄຸນນະພາບສູງ.

ແຕ່:

- ຕ້ອງການດິນທີ່ອຸດົມສົມບູນ.
- ບໍ່ທົນທານກັບດິນທີ່ມີຄວາມອຸດົມສົມບູນຕ່ຳ.
- ປັບຕົວບໍ່ໄດ້ດີໃນສະພາບທີ່ມີລະດູແລ້ງແກ່ຍາວ.

ຫຍ້າ ຣູຊີ ເປັນຫຍ້າທີ່ມີໃບຫລາຍ, ສູງປານກາງ, ມີລຳຕົ້ນເລືອ ແລະ ມີຮາກປົ່ງອອກ ຕາມຂໍ້. ຫຍ້າຊະນິດນີ້ ແມ່ນຖືກນຳໃຊ້ຢ່າງກວ້າງຂວາງ ຢູ່ປະເທດໄທ. ຫຍ້າຣູຊີ ແມ່ນ ມີໃບສັ້ນ ແລະ ມີຂົນ, ສາມາດໃຫ້ຜົນຜລິດແກ່ນສູງ ໃນຫລາຍເຂດ, ຄຸນນະພາບ ແລະ ເປີເຊັນຄວາມງອກ ໂດຍທົ່ວໄປແລ້ວ ແມ່ນ ສູງ.

ຫຍ້າຊະນິດນີ້ ແມ່ນ ປັບຕົວໄດ້ດີໃນດິນທີ່ລະບາຍນ້ຳໄດ້ງ່າຍ, ອຸດົມສົມບູນ ແລະ ໃນເຂດທີ່ມີ ປະລິມານນ້ຳຝົນຫລາຍ. ໃນເຂດທີ່ມີສະພາບດັ່ງກ່າວມານັ້ນ ຫຍ້າ ຣູຊີ ຈະເປັນອາຫານທີ່ມີ ຄຸນນະພາບດີກວ່າຫຍ້າ ບຣາກີເອຍ ຊະນິດອື່ນ ໆ, ແຕ່ຫຍ້າ ຣູຊີ ຈະບໍ່ເຫມາະສົມກັບດິນທີ່ມີ ຄວາມ ອຸດົມສົມບູນຕ່ຳ, ລະບາຍນ້ຳບໍ່ໄດ້ດີ ແລະ ມີລະດູແລ້ງແກ່ຍາວ.

ຫຍ້າ ຣູຊີ ບໍ່ຄວນຈະນຳໄປເກືອແກະ, ແບ້ ແລະ ງົວນ້ອຍ, ເພາະຖ້າໃຫ້ເປັນຈຳນວນຫລາຍ ສັດເຫລົ່ານີ້ ຈະໄດ້ຮັບຜົນສະທ້ອນຈາກອາການເປັນພິດຕໍ່ແສງ ເຊິ່ງອາດເຖິງຕາຍໄດ້.

ຫຍ້າ ຣູຊີ ສາມາດຂະຫຍາຍພັນໄດ້ດ້ວຍແກ່ນ ແລະ ທ່ອນພັນ, ເຫງົ້າ ແລະ ລຳຕົ້ນ.



❸



❹



❺

❶ ຫຍ້າ ຣູຊີ ເກີດໄດ້ດີ ໃນດິນທີ່ມີຄວາມອຸດົມສົມບູນດີ (ຈິມ ໂຣມ)

❷ ໃບຂອງມັນມີຂົນ (ຈິມ ໂຣມ)

❸ ໃຫ້ຜົນຜະລິດແກ່ນສູງ (ເວີນເນີ ສະເຕືອ)

❹ ຫຍ້າ ຣູຊີ ແຜ່ຂະຫຍາຍດ້ວຍລຳຕົ້ນ (ຈິມ ໂຣມ)

❺ ການຈະເລີນເຕີບໂຕ ໃນລະດູແລ້ງ ແມ່ນບໍ່ໄດ້ດີ (ຈິມ ໂຣມ)

# ຫຍ້າ ປານິກັມ ແມກຊິ ມັມ

(*Panicum maximum*)

ສາຍພັນທີ່ແນະນຳ:
" **ກີນີ ສີມ່ວງ**" (TD-58 )

- ເປັນຫຍ້າສູງ ເຫມາະສົມສຳລັບຕັດໃຫ້ສັດກິນ.
- ເຫມາະສົມກັບດິນອຸດົມສົມບູນດີ.
- ເປັນພືດອາຫານສັດ ທີ່ ມີຄຸນນະພາບສູງ.

ແຕ່:

- ຕ້ອງໄດ້ໃຊ້ຝຸ່ນເປັນປະຈຳ.
- ຖ້າບໍ່ຕັດເລື້ອຍ ໆ ຈະມີກ່າງຫລາຍ.
- ບໍ່ເຫມາະສົມກັບເຂດທີ່ມີລະດູແລ້ງຍາວ.



1



2

ກີນີ ສີມ່ວງ ເປັນຫຍ້າສູງ ເຫມາະສົມສຳລັບການຕັດໃຫ້ສັດກິນ ແລະ ສາມາດປ່ອຍໃຫ້ສັດ ເຂົ້າກິນ ເລັກນ້ອຍ (ເບົາບາງ), ເປັນອາຫານທີ່ມີຄຸນນະພາບສູງ ຖ້າປູກໃສ່ດິນທີ່ອຸດົມ ສົມບູນ. ສາຍພັນສີມ່ວງ ໄດ້ຖືກຄັດເລືອກພັນ ໂດຍກົມລ້ຽງສັດ ຂອງປະເທດໄທ ຍ້ອນວ່າ ຫຍ້າສາຍພັນນີ້ ມີໃບຫລາຍ ແລະ ສາມາດປັບຕົວເຂົ້າກັບຫລາຍສະພາບໄດ້ດີກວ່າ ຫຍ້າ ປານິກັມ ແມກຊິມັມ ຊະນິດອື່ນ ໆ.

ກີນີ ສີມ່ວງ ຈະປັບຕົວໄດ້ດີໃນເຂດທີ່ລະດູແລ້ງສັ້ນ ຫລື ບໍ່ມີເລີຍ, ແຕ່ມັນກໍສາມາດທົນໄດ້ ໃນເຂດທີ່ມີລະດູແລ້ງແກ່ຍາວ. ຫຍ້າດັ່ງກ່າວ ຕ້ອງການຄວາມອຸດົມສົມບູນຂອງດິນສູງ, ຝຸ່ນຄອກ ຫລື ຝຸ່ນເຄມີຈຳເປັນຕ້ອງໄດ້ໃຊ້ເປັນປະຈຳ ເພື່ອເຮັດໃຫ້ການຈະເລີນເຕີບໂຕໄດ້ດີ. ຫຍ້າ ກີນີສີມ່ວງ ເຫມາະສົມກັບດິນທີ່ລະບາຍນ້ຳໄດ້ດີ, ດິນອຸດົມສົມບູນ, ແຕ່ກໍສາມາດເກີດໄດ້ໃນດິນ ທີ່ອຸດົມສົມບູນ ປານກາງ. ບໍ່ທົນທານຕໍ່ສະພາບນ້ຳຂັງ.

ຫຍ້າຊະນິດນີ້ ເປັນທີ່ຮູ້ກັນວ່າ ເປັນຫຍ້າ ທີ່ປົ່ງຄືນໄດ້ໄວ ຫລັງຈາກການຕັດ. ຈຳເປັນຕ້ອງ ໄດ້ຕັດຫຍ້ານີ້ເລື້ອຍ ໆ ຖ້າບໍ່ດັ່ງນັ້ນ ມັນຈະກາຍເປັນກ່າງແຂງ ແລະ ອອກດອກ ເຮັດໃຫ້ສັດ ບໍ່ມັກກິນ.

ຫຍ້າ ກີນີສີມ່ວງ ສາມາດຂະຫຍາຍພັນໄດ້ດ້ວຍເຫງົ້າ ແລະ ແກ່ນ. ໃຫ້ຜົນຜລິດແກ່ນສູງ ໃນຫລາຍເຂດ ແລະ ຄຸນນະພາບຂອງແກ່ນ ດີກວ່າຂອງຫຍ້າ ປານີກັມ ແມກຊິມັມ ສາຍພັນອື່ນ ໆ.

**<u>ຫມາຍເຫດ:</u>** ມີສາຍພັນດີ ອີກສາຍພັນນຶ່ງ ຊື່ "ໂຕເບຍຕາ" (CIAT 6299) ຢູ່ ບູາຊິນ, ເປັນ ຫຍ້າສູງ ແລະ ມີ ໃບກວ້າງກວ່າ ຫຍ້າ ສີມ່ວງ. ສາຍພັນ " ໂຕເບຍຕາ" ມີຂົນແຂງຢູ່ເບື້ອງກົກ ຂອງລຳຕົ້ນ ເຊິ່ງເວລາຕັດອາດແທງເຂົ້າຫນັງໄດ້.


③


④

❶ ຫຍ້າ ກີນີສີມ່ວງ ຈະມີລຳຕົ້ນ ເປັຍສີມ່ວງ (ຈີມ ໂຣມ)

❷ ມັນເປັນຫຍ້າສູງ ແລະ ຕັ້ງຊື່ (ລີງກອດ ຊາໂຢ)

❸ ຫຍ້າ ກີນີສີມ່ວງ ໃຊ້ສຳລັບຕັດໃຫ້ສັດກິນ ຢູ່ພາກເຫນືອຂອງ ສປປ ລາວ (ຈີມ ໂຣມ)

❹ ຫຍ້າ ກີນີສີມ່ວງ ໃຫ້ຜົນຜລິດແກ່ນໄດ້ດີ ໃນອາຊີຕາເວັນອອກສ່ຽງໃຕ້ (ຈີມ ໂຣມ)

# ຫຍ້າ ປາສປາລອມ ອາຕຼາຕອມ

(*Paspalum atratum*)


❶

ສາຍພັນ ທີ່ ແນະນຳ:
"ເຕເຣໂບສ" ( BRA 9610 )

- ເປັນຫຍ້າສູງ ເຫມາະສົມສຳລັບການຕັດ.
- ເກີດໄດ້ດີ ໃນດິນທີ່ມີຄວາມອຸດົມສົມບູນຕ່ຳ ແລະ ເປັນກົດ.
- ເຫມາະສົມສຳລັບເຂດຮ້ອນຊຸ່ມຊື່ນ ແລະ ມີລະດູແລ້ງສັ້ນ ຫລື ບໍ່ມີເລີຍ.
- ສາມາດທົນທານຕໍ່ສະພາບນ້ຳຂັງໄດ້.
- ມີໃບຫລາຍ.

ແຕ່:

- ບໍ່ເຫມາະສົມກັບເຂດທີ່ມີລະດູແລ້ງຍາວ.

ຫຍ້າປັດສະປາລອມ ສາຍພັນ " ເຕເຣໂບສ" ເປັນຫຍ້າສູງ ແລະ ເປັນສຸມ, ມີໃບກວ້າງ, ຖ້າເກີດໃນບ່ອນທີ່ມີເງື່ອນໄຂດີ ຈະມີໃບຫລາຍ ແລະ ສັດມັກກິນ . ໃນລະດູແລ້ງ ຫຍ້າ ສາຍພັນ" ເຕເຣໂບສ" ຈະຫຍາບ, ແຂງ ແລະ ສັດ ຈະບໍ່ມັກກິນ. ຫຍ້າຊະນິດນີ້ ຈະໃຫ້ ຜົນຜລິດແກ່ນສູງ ໃນຫລາຍເຂດ , ຍົກເວັ້ນເຂດທີ່ໃກ້ກັບ ເສັ້ນສູນສູດ.

" ເຕເຣໂບສ" ຖືວ່າເປັນທາງເລືອກທີ່ດີ ສຳລັບເຂດ ທີ່ມີດິນອຸດົມສົມບູນປານກາງ ຫາ ຕ່ຳ ໃນເຂດຮ້ອນຊຸ່ມຊື່ນ ແລະ ຈະເປັນປະໂຫຍດ ໂດຍສະເພາະ ແມ່ນ ໃນເຂດທີ່ມີນ້ຳຂັງເປັນບາງຄັ້ງຄາວ. " ເຕເຣໂບສ" ສາມາດ ທົນໄດ້ໃນເຂດທີ່ມີລະດູແລ້ງແກ່ຍາວ ແຕ່ ການຈະເລີນເຕີບໂຕແມ່ນບໍ່ໄດ້ດີ. ນອກນັ້ນ, ຍັງສາມາດເກີດໄດ້ດີໃນເຂດ ທີ່ ມີອາກາດເຢັນ (ເຂດສູງ) ແລະ ທົນແລ້ງໃນໄລຍະໃດນຶ່ງ.

❶ ຢູ່ ອິນໂດເນເຊຍ ມັກປູກຫຍ້າ ເຕເຣໂບສ ໃສ່ຕາມແຄມຮົ້ວ (ເວີນເນີ ສະເຕືອ)
❷ ຫຍ້າ ປ. ອາຕູາຕອມ ແມ່ນມີການຟື້ນຕົວ (ເກີດຄືນ) ໄດ້ໄວ (ເວີນເນີ ສະເຕືອ)
❸ ມັນໃຫ້ຜົນຜລິດແກ່ນສູງ (ເວີນເນີ ສະເຕືອ)
❹ ຫຍ້າ ເຕເຣໂບສ ແມ່ນຕັດງ່າຍ (ໄມເຄີ ແຣ)

ຊາວກະສິກອນສ່ວນຫລາຍມັກ " ເຕເຣໂບສ" ເພາະວ່າ ມັນຕັດງ່າຍ ແລະ ເກີດຄືນໄດ້ໄວ, ພ້ອມທັງສາມາດປ່ອຍໃຫ້ສັດເຂົ້າກິນໄດ້ອີກ.

" ເຕເຣໂບສ" ສາມາດຂະຫຍາຍພັນໄດ້ດ້ວຍແກ່ນ, ແຕ່ກໍສາມາດຂະຫຍາຍໄດ້ດ້ວຍເຫງົ້າ ຢ່າງງ່າຍດາຍ.

**ຫມາຍເຫດ:** ອີກສາຍພັນນຶ່ງ ທີ່ຄ້າຍຄືກັນ ແມ່ນ ປັດສະປາລອມ ເກນົວຣອມ ສາຍພັນ "ເບລາ ວິສຕາ" (Paspalum guenoarum 'Bela Vista') (ສຳລັບລາຍລະອຽດແມ່ນເບິ່ງພາກ " ພືດອາຫານສັດອື່ນ ໆ ທີ່ເປັນປະໂຫຍດ".



4



2



3

# ເປນີເຊຕອມ ເປີເປີຣຽມ ແລະ ພັນປະສົມ

(*Pennisetum purpureum and hybrids*)

ສາຍພັນທີ່ແນະນຳ:
ເນເປຍ (ຫຍ້າຊ້າງ ເປັນສາຍພັນພື້ນເມືອງ ຂອງ ເປນີເຊຕອມ ເປີເປີຣຽມ)
**ມອດຕ** (*Pennisetum purpureum* cv. Mott)
**ຄິງ** (*Pennisetum purpureum* x *P. glaucum* hybrid)

- ເປັນຫຍ້າທີ່ສູງ ແລະ ເຫມາະສຳລັບການນຳໃຊ້ ແບບຕັດໃຫ້ກິນ.
- ເປັນຊະນິດທີ່ໃຫ້ຜົນຜລິດສູງທີ່ສຸດ ໃນເງື່ອນໄຂດິນດີ ແລະ ນ້ຳພຽງພໍ.
- ເປັນອາຫານທີ່ມີຄຸນຄ່າສູງ.

ແຕ່:

- ບໍ່ທົນທານທາກບໍ່ໄດ້ໃສ່ຝຸ່ນ.
- ບໍ່ເຫມາະສົມກັບເຂດທີ່ມີລະດູແລ້ງແກ່ຍາວ.
- ກາຍເປັນກ່າງໄວ ຖ້າບໍ່ຕັດເລື້ອຍ ໆ.





ຫຍ້າ ເປນີເຊຕອມ ເປີເປີຣຽມ ແລະ ພັນປະສົມ (ເປນີເຊຕອມ ເປີເປີຣຽມ ແລະ ປ. ກະລາວກົມ) ເປັນຫຍ້າທີ່ມີຄວາມສູງຫລາຍ ເຊິ່ງເຫມາະສົມສຳລັບການຕັດ. ສາຍພັນ "ຄິງ" ຢູ່ໃນສະພາບດິນດີ ຈະສູງ, ມີໃບຫລາຍ ແລະ ໃຫ້ຜົນຜລິດສູງກວ່າສາຍພັນ "ເນເປຍ" ຫລື "ມອດຕ" , ແຕ່ ຈະນ້ອຍກວ່າ ແລະ ຈະເລີນເຕີບໂຕບໍ່ໄດ້ດີໃນສະພາບທີ່ດິນບໍ່ດີ ຫລື ໃນໄລຍະທີ່ລະດູແລ້ງແກ່ຍາວ.

ສາຍພັນ ມອດຕ (ບາງຄັ້ງເອີ້ນວ່າ ເນເປຍເຕັ້ຍ) ມີແຫນງ ແລະ ໃບຫລາຍກວ່າ ສາຍພັນ ເນເປຍ. ມອດຕ ຍັງເຫມາະສົມສຳລັບການປູກເປັນແລວກັນເຈື່ອນ ໄດ້ດີກວ່າຫຍ້າ ເປນີເຊຕັມ ຊະນິດອື່ນ ໆ ອີກ. ຫຍ້າ ເປນີເຊຕອມ ທຸກສາຍພັນ ຕ້ອງການທາດບຳລຸງລ້ຽງຫລາຍ, ດັ່ງນັ້ນ ມັນ ອາດຈະຍາດແຍ່ງກັບພືດຕ່າງ ໆ ທີ່ຢູ່ໃກ້ຄຽງ.



ຫຍ້າ ເປນີເຊຕອມ ເປັນຫຍ້າທີ່ໃຫ້ຜົນຜລິດສູງສຸດ ໃນຈຳນວນຫຍ້າທີ່ມີຢູ່, ແຕ່ມັນບໍ່ທົນທານ ກັບດິນທີ່ມີຄວາມອຸດົມສົມບູນຕ່ຳ ຫລື ໃນສະພາບແຫ້ງແລ້ງ. ພວກມັນ ເຫມາະສົມກັບເຂດທີ່ມີດິນດີ, ປະລິມານນ້ຳຝົນຫລາຍ ແລະ ມີລະດູແລ້ງສັ້ນ.

ຝຸ່ນເຄມີ ຫລື ຝຸ່ນຄອກ ແມ່ນຕ້ອງໄດ້ໃສ່ເລື້ອຍ ໆ ເພື່ອຮັກສາຜົນຜລິດໃຫ້ສູງ. ຊາວ ກະສິກອນຫລາຍຄົນໄດ້ປູກຫຍ້າດັ່ງກ່າວນີ້ ໃສ່ໃກ້ກັບຄອກສັດ ເພື່ອເຮັດໃຫ້ການໃສ່ຝຸ່ນງ່າຍຂຶ້ນ.

ຫຍ້າເປນີເຊຕອມ ຕ້ອງໄດ້ຕັດເປັນປະຈຳ ເພື່ອເຮັດໃຫ້ມັນມີໃບຫລາຍ. ຖ້າປ່ອຍໃຫ້ສູງຂຶ້ນ ມັນກໍຈະມີແຕ່ລຳຕົ້ນ ແລະ ເຮັດໃຫ້ສັດບໍ່ກິນ. ຫຍ້າ ເປນີເຊຕອມ ແມ່ນ ສາມາດປູກດ້ວຍລຳຕົ້ນໄດ້ຢ່າງງ່າຍດາຍ.


6

❶ ຫຍ້າ ສາຍພັນ ຄິງ ກູ້ສ ໃນຕົນລະດູແລ້ງ ຢູ່ປະເທດ ອິນໂດເນເຊຍ ( ຈິມ ໂຣມ)
❷ ຫຍ້າ ເນເປຍ ສຳລັບຕັດໃຫ້ສັດກິນ ຢູ່ ປະເທດໄທ ( ຈິມ ໂຣມ)
❸ ຫຍ້າ ສາຍພັນຕ່າງ ໆ ຂອງ ເປນີເຊຕອມ ຈະມີໃບຫລາຍ ຖ້າຕັດເລື້ອຍ ໆ ( ຈິມ ໂຣມ)
❹ ນຳໃຊ້ຫຍ້າ ສາຍພັນ ຄິງ ກູ້ສ ເປັນຮົ້ວອ້ອມຄອກໄກ່ ຢູ່ ອິນໂດເນເຊຍ (ເວີນເນີ ສະເຕືອ)
❺ ຫຍ້າສາຍພັນຕ່າງ ໆ ເຫລົ່ານີ້ ໃຫ້ຜົນຜລິດສູງ ແຕ່ຈະມີແຕ່ລະຕົ້ນ ຖ້າບໍ່ຕັດເລື້ອຍ ໆ ( ຈິມ ໂຣມ)
❻ ຫຍ້າສາຍພັນຕ່າງ ໆ ນີ້ ແມ່ນ ຕ້ອງການຝຸ່ນ ຫລື ຝຸ່ນເຄມີ ເພື່ອເຮັດໃຫ້ມີການຈະເລີນເຕີບໂຕ ໄດ້ດີ (ຈິມ ໂຣມ)


4


5

# ເຊຕາເຣຍ ສະຟາເຊ ລາຕາ
(*Setaria sphacelata*)



❶

ສາຍພັນທີ່ແນະນຳ:

**ລັມປຸງ** (*Setaria sphacelata* var. splendida)

**ໂຊເລັນເດີ** (*Setaria sphacelata* cv. solander )

- ເປັນຫຍ້າສູງ ລຳຕົ້ນຕັ້ງຊື່ ເຫມາະສົມສຳລັບຕັດ.
- ໃບອ່ອນ ແລະ ສັດມັກກິນ.
- ສາມາດຢູ່ລອດໄດ້ໃນດິນບໍ່ດີ.
- ສາມາດທົນທານຕໍ່ສະພາບນ້ຳຂັງ ໃນໄລຍະສັ້ນໄດ້.
- ເກີດໄດ້ດີໃນເຂດທີ່ມີອາກາດຫນາວ.

ແຕ່:

- ເພື່ອຢາກໃຫ້ໄດ້ຜົນຜລິດສູງ ມັນຕ້ອງການຄວາມຊຸ່ມ ແລະ ຄວາມອຸດົມສົມບູນຂອງດິນດີ.
- ໃນເຂດຮ້ອນຊຸ່ມຊື່ນ ໃບມັກມີພະຍາດ.
- ບໍ່ຄວນໃຊ້ເປັນອາຫານໃຫ້ແກ່ມ້າ.

ເຊຕາເຣຍ ສະຟາເຊລາຕາ ມີລຳຕົ້ນຕັ້ງ, ເປັນຫຍ້າຢືນຕົ້ນ ແລະ ມີຄວາມສູງປານກາງ. ໃບ ແລະ ລຳຕົ້ນອ່ອນນຸ້ມ ແລະ ສັດມັກກິນ. ສາມາດບົ່ງບອກຫຍ້າຊະນິດດັ່ງກ່າວນີ້ໄດ້ ດ້ວຍໃບຂອງມັນມີສີຂຽວເມື້ນ. ຫຍ້າຊະນິດນີ້ ແມ່ນ ເຫມາະສົມສຳລັບການຕັດໃຫ້ສັດກິນ ແຕ່ ກໍສາມາດປ່ອຍໃຫ້ສັດເຂົ້າກິນ ແບບເບົາບາງໄດ້.

ສາຍພັນ "ລຳປຸງ" ຈະບໍ່ຜລິດແກ່ນ ແລະ ຕ້ອງໄດ້ຂະຫຍາຍພັນດ້ວຍລຳຕົ້ນເທົ່ານັ້ນ. "ລຳປຸງ" ເຫມາະສົມສຳລັບເຂດຮ້ອນຊຸ່ມຊື່ນ ແລະ ມີລະດູແລ້ງສັ້ນ. ໃບມັກເກີດມີພະຍາດ ໃນ ເງື່ອນໄຂທີ່ມີຄວາມຊຸ່ມສູງທີ່ສຸດ. ສ່ວນສາຍ ພັນ " ໂຊລັນເດີ" ແມ່ນໃຫ້ຜົນຜລິດແກ່ນ ແລະ ເຫມາະສົມກັບເຂດຫນາວ (ພື້ນທີ່ສູງ) ຫລາຍກວ່າສາຍພັນ "ລຳປຸງ". ແຕ່ທັງສອງສາຍພັນນີ້ ສາມາດຢູ່ລອດໄດ້ໃນສະພາບດິນບໍ່ອຸດົມສົມບູນ. ເພື່ອຢາກເຮັດໃຫ້ ມີການຈະເລີນເຕີບໂຕທີ່ດີນັ້ນ ຄວນປູກໃນດິນທີ່ອຸດົມສົມບູນ ຫລື ປານກາງ. ຫຍ້າຊະນິດນີ້ ສາມາດທົນທານ ຕໍ່ສະພາບນ້ຳຂັງ ໄດ້ຫລາຍມື້.

ຫຍ້າ ເຊຕາເຣຍ ອາດເປັນພິດຕໍ່ມ້າ (ເບິ່ງພາກທີ 3, ຈຸດສຳຄັນທີ່ຕ້ອງໄດ້ພິຈາລະນາເປັນພິເສດ).
ທັງສອງສາຍພັນແມ່ນສາມາດຂະຫຍາຍພັນໄດ້ດ້ວຍເຫງົ້າ.

<u>**ຫມາຍເຫດ:**</u> ສາຍພັນ "ກາຊຸງກູລາ" (*Setaria sphacelata* cv. kazungula ຢູ່ ອົດສະຕາລີ) ເປັນອີກສາຍພັນນຶ່ງ ຂອງ ຫຍ້າຊະນິດນີ້ ເຊິ່ງອາດສາມາດພົບເຫັນເປັນບາງຄັ້ງຄາວ ໃນ ອາຊີ ຕາເວັນອອກສ່ຽງໃຕ້. ສາຍພັນດັ່ງກ່າວນີ້ ຈະເກີດໄດ້ດີ ໃນເຂດຕໍ່າ ແລະ ເຫມາະສົມສຳລັບ ການ ປູກເພື່ອໃຫ້ສັດເຂົ້າກິນໄດ້ດີ ກວ່າສາຍພັນ "ລຳປຸງ" ແລະ "ໂຊລັນເດີ". ອີກສາຍພັນນຶ່ງ ແມ່ນ "ສະປເລັນດາ" (*Setaria sphacelata* cv. splenda ຢູ່ ອົດສະຕາລີ) ເປັນສາຍພັນທີ່ຜລິດແກ່ນໄດ້ ແລະ ຄ້າຍຄືກັນກັບ ສາຍພັນ "ລຳປຸງ".



❶ ຫຍ້າ ສາຍພັນ ລຳປຸງ ປູກເປັນແຖວ ສຳລັບເປັນອາຫານສັດ ຢູ່ ປະເທດ ຟີລິບປິນ (ເວີນເນີ ສະເຕືອ)
❷ ຫຍ້າ ສາຍພັນ ລຳປຸງ ຈະຕັດໄດ້ງ່າຍ (ເວີນເນີ ສະເຕືອ)
❸ ຫຍ້າ ສາຍພັນ ໂຊລັນເດີ ຈະຜລິດແກ່ນໄດ້ດີ ແຕ່ສາຍພັນ ລຳປຸງ ຜລິດບໍ່ໄດ້ ( ຈິມ ໂຣມ)
❹ ຫຍ້າ ສາຍພັນ ຕ່າງໆ ຂອງ ເຊຕາເຣຍ ມີລຳຕົ້ນ ແປ/ແລບ ຢູ່ສ່ວນກົກ ແລະ ມີໃບຂຽວປົນຟ້າ (ເວີນເນີ ສະເຕືອ)





# ພືດອາຫານສັດ ແລະ ຕົ້ນໄມ້ອາຫານສັດຕະກຸນຖົ່ວ ອາຣາຄິສ ປິນໂຕຍ

(*Arachis pintoi*)

ສາຍພັນທີ່ແນະນຳ:

**ອາມາຣິໂລ** (cv. Amarillo)

**ອິຕາກໍາປິຣາ** (CIAT 22160)

- ເປັນຖົ່ວທີ່ມີລຳຕົ້ນເລືອຕາມດິນ ແລະ ຕ່ຳ.
- ທົນທານຕໍ່ການເຂົ້າກິນຂອງສັດຢ່າງຫນັກໄດ້.
- ປົກຄຸມດິນຢູ່ກ້ອງຕົ້ນໄມ້ໄດ້ດີ.
- ສາມາດປູກໄດ້ດ້ວຍລຳຕົ້ນ.

ແຕ່:

- ຕ້ອງການດິນທີ່ມີຄວາມອຸດົມສົມບູນປານກາງ.
- ບໍ່ເຫມາະສົມກັບເຂດທີ່ມີລະດູແລ້ງແກ່ຍາວ.



ອາຣາຄິສ ປິນໂຕຍ ມີລຳຕົ້ນແຂງແຮງ ແລະ ເລືອຕາມດິນ ມີຮາກປົ່ງອອກຕາມຂໍ້ ເຊິ່ງ ເຮັດໃຫ້ເກີດເປັນຜືນສີຂຽວທີ່ຫນາແຫນ້ນ ເຫມືອນຜ້າພົມ ເຊິ່ງປົກກະຕິມີດອກສີເຫລືອງ. ເປັນພືດຕະກຸນຖົ່ວ ທີ່ມີຄຸນນະພາບສູງ ສຳລັບສັດທຸກຊະນິດ ລວມທັງໄກ່, ເປັດ ແລະ ຫມູ. ສາມາດທົນທານຕໍ່ການຕັດ ຫລື ປ່ອຍສັດເຂົ້າກິນຢ່າງຫນັກໄດ້. ເປັນພືດຄຸມດິນທີ່ດີ ສຳລັບ ການຄວບຄຸມວັດຊະພືດ ໃນກ້ອງຕົ້ນໄມ້ ແລະ ປ້ອງກັນການເຊາະເຈື່ອນ ໃນດິນຄ້ອຍຊັນ.

ໃນຖົ່ວ ອາຣາຄິສ ປິນໂຕຍ ນີ້ ແມ່ນມີຫລາຍສາຍພັນ, ໃນຈຳນວນນັ້ນ ແມ່ນ "ອິຕາແກມປິຣາ" ແລະ ອາມາຣິໂລ" ເປັນສາຍພັນທີ່ນຳໃຊ້ກັນຢ່າງກວ້າງຂວາງ ໃນເຂດອາຊີ ຕາເວັນອອກສ່ຽງໃຕ້.

ອາຣາຄິສ ປິນໂຕຍ ຕ້ອງການດິນທີ່ມີຄວາມອຸດົມສົມບູນປານກາງ ແລະ ເຫມາະສົມກັບ ເຂດຮ້ອນຊຸ່ມຊື່ນ ແລະ ມີລະດູແລ້ງສັ້ນ ຫລື ບໍ່ມີເລີຍ. ຖົ່ວຊະນິດນີ້ ຈະບໍ່ເຫມາະສົມກັບເຂດທີ່ມີ ລະດູແລ້ງແກ່ຍາວ ຍົກເວັ້ນເຂດທີ່ມີ ອາກາດຫນາວ. ມັນສາມາດເກີດໄດ້ດີ ຈາກ ກາງແຈ້ງ ຫາບ່ອນທີ່ຮົ່ມປານກາງ ໃນກ້ອງຕົ້ນໄມ້.

ກົ່ວ ອາຣາຄິສ ປິນໂຕຍ ບໍ່ຄືກັບກົ່ວອາຫານສັດຊະນິດອື່ນ ໆ ຈຳເປັນຕ້ອງໄດ້ຕັດ ຫລື ໃຫ້ສັດເຂົ້າກິນ ຢ່າງເປັນປະຈຳ ເພື່ອປັບປຸງຜົນຜລິດ ແລະ ຄວາມທົນທານຂອງມັນ.

ສາມາດຂະຫຍາຍພັນໄດ້ດ້ວຍລຳຕົ້ນ ແລະ ເຫງົ້າຮາກຂອງມັນ. ຄຸນລັກສະນະພິເສດ ຂອງ ມັນ ແມ່ນຄືກັບກົ່ວດິນ ຜລິດແກ່ນຢູ່ພື້ນດິນ ເຊິ່ງເຮັດໃຫ້ການເກັບແກ່ນຫຍຸ້ງຍາກ. ຄຸນນະພາບຂອງ ເມັດພັນ ຈະຫລຸດລົງໄວໃນເວລາເກັບຮັກສາ. ການປູກດ້ວຍແກ່ນແມ່ນງ່າຍ ແລະ ແກ່ນທີ່ມີຄຸນນະພາບດີ ແມ່ນມີຢ່າງຫລວງຫລາຍ.

❶ ກົ່ວ ອາຣາຄິສ ແຜ່ຂະຫຍາຍໄດ້ໄວດ້ວຍລຳຕົ້ນ ແລະ ແກ່ນ ທີ່ຢູ່ ໃນດິນ (ປີເຕີ ຮອນ)

❷ ກົ່ວ ອາຣາຄິສ ທຸກ ໆ ສາຍພັນ ສາມາດປູກເປັນພືດຄຸມດິນ

❸ ຕາມກ້ອງຕົ້ນໄມ້ໄດ້ເປັນຢ່າງດີ (ເວີນເນີ ສະເຕືອ) ສາຍພັນ ອາມາຣິໂລ ຜລິດແກ່ນໄດ້ດີ (ວອງ ຈອຍ ຈີ)

❹ ສາຍພັນ ອີຕາກຳບີຣາ ເກີດເປັນແຜ່ນຢ່າງໜາແໜ້ນ (ຈີມ ໂຮມ)


❷


❸


❹

# ຕົ້ນ ກະຖິນແດງ

## (*Calliandra calothyrsus*)

ສາຍພັນທີ່ແນະນຳ:
"ເບຊາກີ" (CPI 115690)

- ເປັນຕົ້ນໄມ້ອາຫານສັດທີ່ດີ ສຳລັບເຂດໜາວ.
- ສາມາດເກີດໄດ້ໃນດິນເປັນກົດ.
- ເວລາຕັດຈະໃຫ້ຜົນຜລິດໃບຫລາຍ.
- ນຳໃຊ້ເປັນຟືນໄດ້ດີ.

ແຕ່:

- ສັດມັກກິນພຽງແຕ່ເວລາຍັງສົດ.
- ຈຳເປັນຕ້ອງໄດ້ປູກຈາກແກ່ນ.
- ເບັ້ຍນ້ອຍ ຈະເລີນເຕີບໂຕຊ້າ.



1

ຕົ້ນກະຖິນແດງ ເປັນຕົ້ນໄມ້ທີ່ມີອາຍຸຍືນ ແລະ ຖ້າຕັດເປັນປະຈຳ ຈະໃຫ້ຜົນຜລິດສູງ. ຈຸດແຕກຕ່າງ ຈາກຕົ້ນໄມ້ຕະກຸນກົ່ວອື່ນ ໆ ແມ່ນ ບໍ່ມັກມີພະຍາດ ແລະ ແມງໄມ້. ມີດອກສີແດງ. ລຳຕົ້ນອ່ອນ ຈະມີລັກສະນະຊຸກແຊັກ ແລະ ເປັນສີຫລ່ຽມ ຫລາຍກວ່າ ເປັນລຳມົນ.

ຕົ້ນກະຖິນແດງ ສາມາດປັບຕົວເຂົ້າກັບສະເພາະເຂດທີ່ໜາວໄດ້ດີ (ເຂດສູງ) ແລະ ເປັນ ເຂດຊຸ່ມຊື່ນ ມີລະດູແລ້ງສັ້ນ ຫລື ບໍ່ມີເລີຍ. ເກີດໄດ້ດີໃນດິນຫລາຍປະເພດ, ລວມທັງດິນເປັນກົດ ແຕ່ ຕ້ອງມີຄວາມອຸດົມສົມບູນປານກາງ. ຖ້າຈະເລີນເຕີບໂຕໄດ້ດີໃນໄລຍະປູກສ້າງ (18 ເດືອນ) ມັນຈະທົນທານແລ້ງໄດ້ດີ ໂດຍສະເພາະໃນດິນທີ່ມີຊັ້ນດິນເລິກ.

ຕົ້ນກະຖິນແດງ ມັກນຳໃຊ້ປູກເປັນແຖວກັບເຈື່ອນ. ການນຳໃຊ້ເປັນອາຫານສຳລັບງົວແມ່ນ ຈຳເປັນຕ້ອງໄດ້ຮຽນໃຫ້ກິນ ຫລື ເຮັດໃຫ້ລຶ້ງກ່ອນໃນເວລາທຳອິດ, ສ່ວນ ແກະ ແລະ ແບ້ ແມ່ນ ບໍ່ມີບັນຫາ. ຄຸນລັກສະນະສະເພາະຂອງກະຖິນແດງ ແມ່ນຕ້ອງໄດ້ເກືອສົດ ເພາະໃບຫ່ຽວສັດຈະບໍ່ມັກກິນ. ໄດ້ມີການນຳໃຊ້ກະຖິນແດງເປັນອາຫານເສີມໃນການທອມງົວ ໃນ ບາຫລີ ປະເທດອິນໂດເນເຊັຍ ທີ່ມີຄວາມສູງກວ່າ 500 ແມັດ ໄດ້ຢ່າງມີຜົນສຳເລັດ.

ກະຖິນແດງ ຕ້ອງໄດ້ປູກດ້ວຍເມັດພັນ ຄືກັນກັບຕົ້ນໄມ້ອາຫານສັດຕະກຸນກິ່ວທົ່ວໄປ, ການປູກສ້າງຂອງຕົ້ນເບັ້ຍ ແມ່ນຊັກຊ້າ. ເພື່ອໃຫ້ໄດ້ຮັບຜົນດີ ຕົ້ນເບັ້ຍຄວນປ້ອງກັນຈາກ ການເຂົ້າກິນຂອງສັດ, ວັດຊະພືດ ແລະ ໄຟໄຫມ້. ການຜລິດເມັດພັນ ອາດຈະບໍ່ໃຫ້ຜົນສູງ ໃນເຂດທີ່ບໍ່ມີເຈັຍ ທີ່ຊ່ວຍປະສົມລະອອງເກສອນ ໃນດອກຂອງກະຖິນແດງ.



❶ ສາຍພັນ ເບຊາກີ ເກີດໄດ້ດີ ໃນເຂດທີ່ມີອາກາດຫນາວ (ອາລັງ ໂປຕິນເຈີ)

❷ ກິ່ງ/ງ່າອ່ອນ ຂອງຕົ້ນກະຖິນແດງ ມີລັກສະນະເປັນສີ່ຫລ່ຽມ (ເວີນເນີ ສະເຕືອ)

❸ ຕົ້ນກະຖິນແດງ ສາມາດນໍາໃຊ້ເປັນຟືນໄດ້ດີ (ອາລັງ ໂປຕິນເຈີ)

❹ ຕົ້ນກະຖິນແດງ ມີດອກເປັນສີແດງ (ອາລັງ ໂປຕິນເຈີ)





# ເຊັນໂຕຼຊີມາ ປັບເບເຊັນ ແລະ ຊ.ມາ ໂຄຼກາຣປັມ

(*Centrosema pubescens* and *C. macrocarpum*)



ສາຍພັນທີ່ແນະນຳ:

**"ບາຣິບັສ"** (*Centrosema pubescens* CIAT 15160)

**"ອູກາຍ່າລີ"** (*Centrosema macrocarpum* CIAT 25522)

- ກົ່ວທີ່ມີເຄືອກ້ຽວ.
- ຄວບຄຸມວັດຊະພືດໄດ້ດີ.
- ສາມາດເກີດປົນກັບຫຍ້າສູງໄດ້ດີ ສຳລັບການຕັດໃຫ້ກິນ.

ແຕ່:

- ປັບຕົວບໍ່ໄດ້ດີໃນເຂດທີ່ມີລະດູແລ້ງແກ່ຍາວ.
- ຕ້ອງການດິນທີ່ອຸດົມສົມບູນປານກາງ ແລະ ລະບາຍນ້ຳໄດ້ດີ.
- ຕ້ອງປູກດ້ວຍແກ່ນຢ່າງດຽວ.

ກົ່ວເຊັນໂຕຼ ບໍ່ສາມາດທົນທານກັບການຕັດ ຫລື ໃຫ້ສັດເຂົ້າກິນຢ່າງຫນັກ. ມັນຈະເກີດໄດ້ດີ ຖ້າປ່ອຍໃຫ້ມັນເກີດ/ຟື້ນຄືນ ພາຍຫລັງການຕັດ ໃນໄລຍະຍາວ (ຫລາຍກວ່າ 6 ອາທິດ) ແລະ ບໍ່ຕັດຕ່ຳຈົນເກີນໄປ.

ທັງສອງສາຍພັນ "ອູກາຍ່າລີ" ແລະ "ບາຣິບັສ" ຈະຕ້ອງໄດ້ປູກດ້ວຍແກ່ນ. ທັງສອງ ຈະ ອອກດອກ ແລະ ຜລິດແກ່ນ ໃນຕອນຕົ້ນລະດູແລ້ງ. ຜົນຜລິດແກ່ນຈະໄດ້ດີ ຖ້າປູກ ແລະ ປ່ອຍໃຫ້ ມັນກ້ຽວຂຶ້ນຕາມຮາວ (ຕົວຢ່າງ: ຮາວຮົ້ວ). ຜົນຜະລິດແກ່ນຈະສູງທີ່ສຸດໃນເຂດທີ່ມີລະດູແລ້ງຍາວ.

ເຊັນໂຕຼຊີມາ ຫຼກຊະນິດ ແມ່ນຕິດພະຍາດໃບ ທີ່ຊື່ວ່າ ຣິຊົກໂຕເນຍ (Rhizoctonia) ໃນໄລຍະລະດູຝົນ. ແຕ່ສອງສາຍພັນ "ບາຣິບັສ" ແລະ ອູກາຍ່າລີ" ຈະເຊົາໄວກວ່າ.

ການຜລິດເມັດພັນ ແມ່ນ ງ່າຍ ໃນຫລາຍພື້ນທີ່ ທີ່ມັນສາມາດເກີດໄດ້. ແກ່ນມີເປືອກຫຸ້ມແຂງ ເພື່ອປ້ອງກັນການງອກຂອງເມັດ ຈົນກວ່າ ເປືອກມັນຈະຖືກທຳລາຍ (ເບິ່ງລາຍລະອຽດ ໃນປຶ້ມ ກ່ຽວກັບການພັດທະນາເຕັກໂນໂລຊີ ຮ່ວມກັບຊາວກະສິກອນ-ຈະປູກ, ຄຸ້ມຄອງ ແລະ ນຳໃຊ້ ພືດອາຫານສັດແນວໃດ).

ໃບຂອງຖົ່ວ ສາຍພັນ "ຈະລັນ" ມັກຖືກທຳລາຍຈາກແມງປະຊີລິດ (Psyllid) ແຕ່ເຊົາໄວ.

❶ ສາຍພັນ ບາຣິບັສ ນຳໃຊ້ເປັນພືດຄຸມດິນ ໃນສວນສາລີ (ຫລັງຈາກການເກັບກ່ຽວ) ຢູ່ອິນໂດເນເຊຍ (ຈິມໂຣມ)

❷ ສາຍພັນ ອູກາຍປາລີ ຈະມີໃບໃຫຍ່ກວ່າ ສາຍພັນ ບາຣິບັສ (ຈິມ ໂຣມ)

❸ ດອກ ຂອງສາຍພັນ ບາຣິບັສ ຈະມີສີຂາວ ແລະ ສີບົວ (ຈິມ ໂຣມ)

❹ ສາຍພັນ ບາຣິບັສ ຈະປົ່ງຮາກອອກຕາມຂໍ້ ເຊິ່ງຈະເຮັດໃຫ້ມັນທົນທານດີກວ່າ ຖົ່ວ ເຊັນໂຕຼ

❺ ສາຍພັນອື່ນ ໆ (ເວີນເນີ ສະເຕືອ) ທັງສອງສາຍ ພັນ ຈະມີແກ່ນໃຫຍ່ ເຊິ່ງເຮັດໃຫ້ປູກງ່າຍ (ຈິມ ໂຣມ)



❺



❷



❸



❹

# ໄມຍະຣາ

*(Desmanthus virgatus)*



❶

ສາຍພັນທີ່ແນະນຳ:

"**ຈະລັນ**" (Chaland)

- ມີລັກສະນະເປັນຕົ້ນພຸ່ມ ເຫມາະສຳລັບຕັດໃຫ້ກິນ.
- ຈະເກີດໄດ້ດີ ໃນດິນຫນຽວ (ດິນດາກ) ທີ່ມີຄວາມອຸດົມສົມບູນ.
- ເປັນອາຫານທີ່ມີຄຸນນະພາບສູງ.
- ໃບ-ສາມາດນຳໄປເຮັດເປັນອາຫານປົ່ນ.
- ຜະລິດແກ່ນໄດ້ງ່າຍ.

ແຕ່:

- ບໍ່ເຫມາະສົມກັບດິນເປັນກົດ.
- ຕ້ອງປູກຈາກແກ່ນເທົ່ານັ້ນ.

ສາຍພັນ "ຈະລັນ" ເປັນກົ່ວທີ່ມີລຳຕົ້ນຊື່ ເປັນພຸ່ມ ແລະ ລຳຕົ້ນແຂງ ສູງເຖິງ 2 ແມັດ, ສ່ວນໃຫຍ່ ມີການນຳໃຊ້ກົ່ວຊະນິດນີ້ ຢູ່ ປະເທດໄທ . ແຕ່ລະຕົ້ນມີອາຍຸຢູ່ໄດ້ປະມານ 3-5 ປີ. ໃບ ເປັນອາຫານທີ່ມີຄຸນນະພາບສູງ ເຊິ່ງສາມາດນຳໃຊ້ເປັນອາຫານຕອນຍັງສົດ ຫລື ແຫ້ງ (ໃບປົ່ນ). ສາມາດນຳໄປປູກເປັນແຖວກັບເຈື່ອນໄດ້.

ເປັນຊະນິດທີ່ເຫມາະສົມສະເພາະກັບດິນຫນຽວ ທີ່ມີ pH ລະດັບກາງ ຫາ ສູງ. ເຖິງວ່າມັນ ຈະສາມາດຢູ່ລອດໄດ້ໃນເຂດທີ່ມີລະດູແລ້ງຍາວ, ແຕ່ມັນຈະເກີດໄດ້ດີກວ່າ ໃນເຂດຮ້ອນຊຸ່ມຊື່ນທີ່ມີລະດູແລ້ງສັ້ນ.ສາຍພັນ "ຈະລັນ" ຕ້ອງໄດ້ປູກດ້ວຍແກ່ນ.

ສາຍພັນ "ຈະລັນ" ຕ້ອງໄດ້ປູກດ້ວຍແກ່ນ. ການຜລິດເມັດພັນ ແມ່ນ ງ່າຍ ໃນຫລາຍພື້ນທີ່ ທີ່ມັນສາມາດເກີດໄດ້. ແກ່ນມີເປືອກຫຸ້ມແຂງ ເພື່ອປ້ອງກັນການງອກຂອງເມັດ ຈົນກວ່າ ເປືອກມັນຈະຖືກທຳລາຍ (ເບິ່ງລາຍລະອຽດ ໃນປື້ມກ່ຽວກັບການພັດທະນາເຕັກໂນໂລຊີ ຮ່ວມກັບຊາວກະສິກອນ-ຈະປູກ, ຄຸ້ມຄອງ ແລະ ນຳໃຊ້ ພືດອາຫານສັດແນວໃດ).

ໃບຂອງກິ່ວ ສາຍພັນ "ຈະລັນ" ມັກຖືກທຳລາຍຈາກແມງປະຊີລິດ (Psyllid) ແຕ່ເຊົາໄວ.



❷



❸

❶ ສາຍພັນ ຈະລັນ ມີໃບຫລາຍ (ຈິມ ໂຣມ)
❷ ກິ່ວຊະນິດນີ້ເປັນຕົ້ນ ແລະ ເປັນພຸ່ມ (ຈິມ ໂຣມ)
❸ ການຜລິດເມັດພັນແມ່ນງ່າຍ (ຈິມ ໂຣມ)

# ເດັດສະໂມດຽມ ຊີເນເຣຍ

(*Desmodium cinerea*)



1

ສາຍພັນທີ່ແນະນຳ:

**"ລັດສ ເດລີຊຽດສ"** (Las Delicias)

ສາຍພັນນີ້ເຄີຍເອີ້ນວ່າ ເດັສໂມດຽມ ເຣນໂຊນີ
(*Desmodium rensonii* CPI 46562)

- ເປັນຕົ້ນພຸ່ມ ໃຫຍ່ໄວ ແລະ ເໝາະສົມສຳລັບການຕັດໃຫ້ສັດກິນ.
- ເໝາະສົມສຳລັບການປູກເປັນແຖວກັນເຈື່ອນ.
- ເປັນອາຫານທີ່ມີຄຸນນະພາບສູງ.
- ເໝາະສຳລັບເຂດຮ້ອນຊຸ່ມຊື່ນ.

ແຕ່:

- ອາຍຸສັ້ນ ( 2-3ປີ )
- ຕ້ອງໄດ້ປູກດ້ວຍແກ່ນເທົ່ານັ້ນ.

"ລັດ ເດລີຊຽດສ" ເປັນພືດທີ່ມີອາຍຸສັ້ນ (2-3 ປີ), ເປັນຕົ້ນພຸ່ມ ແລະ ສູງເຖິງ 3 ແມັດ. ເບັ້ຍນ້ອຍ ຂອງກົ່ວຊະນິດນີ້ ແມ່ນໃຫຍ່ໄວ, ເຮັດໃຫ້ປູກງ່າຍກວ່າຕົ້ນກົ່ວຊະນິດອື່ນ ໆ. ລຳຕົ້ນແຂງຄືກັບກັບໄມ້ ແລະ ມີກິ່ງກ້ານ. ໃຫ້ຜົນຜະລິດໃບສູງ ຖ້າຕັດເປັນປະຈຳ.

ກົ່ວຊະນິດນີ້ ປັບຕົວໄດ້ດີ ໃນດິນທີ່ອຸດົມສົມບູນປານກາງ, ບໍ່ເປັນກົດ ຫລື ເປັນກົດນ້ອຍນຶ່ງ. ເກີດໄດ້ດີ ໃນເຂດຮ້ອນຊຸ່ມຊື່ນ ມີລະດູແລ້ງສັ້ນ ຫລື ບໍ່ມີເລີຍ, ບໍ່ເໝາະສົມກັບພື້ນທີ່ ເຊິ່ງມີລະດູ ແລ້ງຍາວ.

ການນຳໃຊ້ ກົ່ວ "ລັດ ເດລີຊຽດສ" ປູກເປັນແຖວກັນເຈື່ອນ ໄດ້ຮັບການສົ່ງເສີມ ຢ່າງກວ້າງ ຂວາງ ໂດຍ ສູນສາດສະໜາ ບາບຕິສ - ຊີວິດໃນຊົນນະບົດ ໃນ ມິນດານາວ, ຟີລິບປິນ. ເປັນ ອາຫານທີ່ມີຄຸນນະພາບສູງ ແລະ ສັດຫລາຍປະເພດມັກກິນ.

ກົ່ວ ເດັດສະໂມດຽມ ເຮັນໄຊນີ ຕ້ອງໄດ້ປູກດ້ວຍແກ່ນ. ການຜລິດແກ່ນ ແມ່ນໄດ້ດີ ໃນຫລາຍເຂດທີ່ມັນ ສາມາດປັບຕົວໄດ້.

**<u>ສາຍເຫດ:</u>** ອີກສາຍພັນນຶ່ງ ທີ່ຄ້າຍຄືກັນ ແມ່ນ ໂກດາຣີໂອກາລິກສ ຈີໂຣຍເດັສ (Codariocalyx gyroides) (ສຳລັບລາຍລະອຽດແມ່ນເບິ່ງພາກ " ພືດອາຫານສັດອື່ນ ໆ ທີ່ເປັນ ປະໂຫຍດ".)





❶ ສາຍພັນ ລາສ ເດລີຊີອັສ ມັກປູກເປັນແຖວ ຢູ່ ອິນໂດເນເຊັຍ (ເວີນເນີ ສະເຕືອ)
❷ ກົ່ວຊະນິດນີ້ ແມ່ນມີໃບມົນ (ຈີມ ໂຣມ)
❸ ກົ່ວຊະນິດນີ້ ໃຫ້ຜົນຜລິດສູງ ໃນຫລາຍ ໆ ເຂດ ຂອງອາຊີຕາເວັນອອກສຽງໃຕ້ (ຈີມ ໂຣມ

# ຕົ້ນແຄຝລັ່ງ

(*Gliricidia sepium*)

ສາຍພັນທີ່ແນະນຳ: ເຣຕາຣູເລ (Retalhuleu)
ເບເລັນ ຣິວັສ (Belen Rivas)

- ສາມາດຂະຫຍາຍພັນໄດ້ຈາກລຳຕົ້ນຢ່າງງ່າຍດາຍ
- ປູກສຳລັບເຮັດຮົ້ວໄດ້ດີ.
- ສາມາດເກີດໄດ້ດີໃນດິນເປັນກົດລະດັບກາງ.
- ເປັນອາຫານເສີມທີ່ດີສຳລັບສັດໃນລະດູແລ້ງ.

ແຕ່:

- ສັດບໍ່ມັກກິນປານໃດ.
- ຕິດພະຍາດ ຫລື ມັກມີແມງໄມ້ທຳລາຍງ່າຍ.



1

ຕົ້ນແຄຝລັ່ງ ເປັນຕົ້ນໄມ້ໃຫຍ່ລະດັບກາງ ເຊິ່ງໃຫ້ຜົນຜລິດໃບສູງ ໃນກໍລະນີຕັດເລື້ອຍ ໆ. ຕົ້ນແຄຝລັ່ງ ມີດອກສີບົວ ເຊິ່ງມັນຈະແຕກຕ່າງກັບຕົ້ນແຄພື້ນເມືອງ ທີ່ມີດອກສີຂາວ (*G. maculata*) , ນອກນັ້ນ, ທັງສອງສາຍພັນ ເຣຕາຣູເລ ແລະ ເບເລນ ຣິວັສ ໃຫ້ຜົນຜລິດ ແລະ ມີໃບຫລາຍກວ່າພັນອື່ນ ໆ.

ຕົ້ນແຄຝລັ່ງ ແມ່ນນຶ່ງໃນຈຳນວນຕົ້ນໄມ້ຕະກຸນຖົ່ວ ທີ່ສາມາດຂະຫຍາຍພັນດ້ວຍລຳຕົ້ນໄດ້ ຢ່າງງ່າຍດາຍ. ເຊິ່ງເຮັດໃຫ້ຕົ້ນແຄຝລັ່ງ ເຫມາະສົມສຳລັບປູກເຮັດຮົ້ວຊີວະພາບ.

ຕົ້ນແຄຝລັ່ງ ຈະເກີດໄດ້ດີ ໃນເຂດທີ່ມີຄວາມຊຸ່ມ ແລະ ມີລະດູແລ້ງສັ້ນ ຫລື ປານກາງ, ສາມາດເກີດໄດ້ໃນດິນສົ້ມ ແຕ່ຕ້ອງມີຄວາມອຸດົມສົມບູນໃນລະດັບກາງ. ຕົ້ນແຄຝລັ່ງ ຈະບໍ່ໃຫຍ່ ໃນ ດິນທີ່ເປັນກົດຫລາຍ ແລະ ໃນເຂດສູງກວ່າ 800 ແມັດ. ບໍ່ທົນທານຕໍ່ສະພາບນ້ຳຂັງໃນໄລຍະຍາວ.

ໃບຂອງຕົ້ນແຄຝລັ່ງເປັນອາຫານເສີມທີ່ມີຄຸນນະພາບສູງ ເຊິ່ງແກະ ແລະ ແບ້ມັກກິນທີ່ສຸດ. ສຳລັບງົວ ແລະ ຄວາຍ ແມ່ນຕ້ອງໄດ້ຮຽນໃຫ້ກິນ ແຕ່ໃນເມື່ອລຶ້ງກັບກິ່ນຂອງແຄຝລັ່ງແລ້ວ ກໍຈະ ກິນໄດ້ດີ. ໃນການຮຽນໃຫ້ສັດ ກິນໃບແຄຝລັ່ງນັ້ນ ວິທີການງ່າຍ ໆ ແມ່ນປົນກັບພືດອາຫານສັດຊະ ນິດ ອື່ນ ໆ. ການນຳໃຊ້ເປັນອາຫານເສີມໃນການຫອມງົວ ຢູ່ ບາຫລີ ປະເທດອິນໂດເນເຊຍ ແມ່ນໄດ້ຮັບຜົນດີ.



ໃນລະດູແລ້ງ, ໂດຍທົ່ວໄປແລ້ວໃບຈະລົ່ນ, ແຕ່ຖ້າຕັດໃນທ້າຍລະດູຝົນ ຕົ້ນແຄຝລັ່ງ ຈະປົ່ງ ໃບໃຫມ່ອອກມາ ແລະ ຂຽວງາມຢູ່ຕະຫລອດຈົນຮອດທ້າຍລະດູແລ້ງ.

ຢູ່ເຂດອາຊີຕາເວັນອອກສ່ຽງໃຕ້ນີ້ ມີບາງເຂດເທົ່ານັ້ນທີ່ຕົ້ນແຄຝລັ່ງ ສາມາດຜະລິດເມັດພັນ ໄດ້, ເຊິ່ງເຂດດັ່ງກ່າວເປັນເຂດທີ່ມີລະດູແລ້ງຍາວ ເປັນຕົ້ນແມ່ນ ພາກຕາເວັນອອກຂອງປະເທດ ອິນໂດເນເຊຍ. ແຕ່ ຕົ້ນແຄຝລັ່ງ ສາມາດຂະຫຍາຍພັນໄດ້ໂດຍລຳຕົ້ນ ຈຶ່ງບໍ່ຄ່ອຍຈະມີບັນຫາ ເລື້ອງເມັດພັນ.



ໃນເຂດຊຸ່ມຊື່ນ ຕົ້ນແຄຝລັ່ງ ມັກຕິດພະຍາດ ຫລື ແມງໄມ້ທຳລາຍ.

❶ ຕົ້ນ ແຄຝລັ່ງ ແມ່ນ ເຫມາະສົມສຳລັບການປູກເປັນຮົ້ວຊີວະພາບ (ປີເຕີ ຮອນ)
❷ ແກະ ມັກກິນ ຕົ້ນແຄຝລັ່ງ (ເວີນເນີ ສະເຕືອ)
❸ ຕົ້ນແຄຝລັ່ງ ພັນ ເຊປັມ ມີດອກເປັນສີບົວ (ເວີນເນີ ສະເຕືອ)
❹ ຕົ້ນແຄຝລັ່ງ ພັນ ມາກູລາຕາ ມີດອກເປັນສີບົວ (ປີເຕີ ຮອນ)
❺ ສາຍພັນ ເຣຕາຣູເລ ໃຫ້ຜົນຜລິດໃບສູງ (ເວີນເນີ ສະເຕືອ)





# ຕົ້ນກະຖິນ
(*Leucaena leucocephala*)

ສາຍພັນທີ່ແນະນຳ: K 636
K 584

- ໃຫ້ຜົນຜລິດສູງ.
- ທົນທານຕໍ່ການຕັດ ແລະ ປ່ອຍສັດເຂົ້າກິນ.
- ເປັນອາຫານເສີມທີ່ມີຄຸນນະພາບສູງ.
- ສາມາດນຳໃຊ້ເຮັດຟືນໄດ້.
- ທົນທານຕໍ່ຄວາມແຫ້ງແລ້ງ.

ແຕ່:

- ຈະບໍ່ເກີດໃນດິນເປັນກົດ ແລະ ດິນບໍ່ອຸດົມສົມບູນ.
- ບໍ່ເປັນອາຫານສຳລັບສັດກະເພາະດ່ຽວ.
- ມັກຕິດພະຍາດ ປສີລິສ (Psyllid) ທີ່ທຳລາຍໃບ.
- ຕ້ອງປູກດ້ວຍແກ່ນເທົ່ານັ້ນ



❶

ຕົ້ນກະຖິນ ເປັນຕົ້ນໄມ້ທີ່ມີອາຍຸຍືນ, ໃຫ້ຜົນຜລິດສູງ ຖ້າຕັດເປັນປະຈຳ. ຫລັງຈາກການປູກສ້າງ (18 ເດືອນ) ຈະມີຄວາມທົນທານຕໍ່ການຕັດໄດ້ເປັນຢ່າງດີ, ສາມາດ ປ່ອຍໃຫ້ສັດເຂົ້າກິນໄດ້. ໃບຂອງມັນສາມາດນຳໃຊ້ເປັນອາຫານເສີມທີ່ມີຄຸນນະພາບດີໄດ້, ໂດຍສະເພາະແມ່ນໃນລະດູແລ້ງ. ນອກນັ້ນ ຍັງສາມາດນຳໃຊ້ເປັນຟືນໄດ້ດີອີກດ້ວຍ.

ສາຍພັນ K636 ແລະ K584 ເປັນສາຍພັນທີ່ໃຫ້ຜົນຜລິດສູງກວ່າຫມູ່ ໃນຈຳພວກ L. leucocephala. K636 ມັກມີລຳຕົ້ນສູງດ່ຽວ, ແຕ່ແຕກກິ່ງງ່າອອກເວລາເຮົາຕັດເປັນປະຈຳ. K584 ມີກິ່ງງ່າຫລາຍ ກວ່າ K636. ຕົ້ນກະຖິນມັກປັບຕົວໄດ້ດີໃນເຂດຮ້ອນຊຸ່ມຊື່ນ ແລະ ມີລະດູແລ້ງ. ມັນເກີດໄດ້ດີໃນ ດິນຫນຽວ ແລະ ມີ pH ລະດັບກາງ ຫາ ສູງ. ເກີດບໍ່ໄດ້ດີໃນດິນບໍ່ອຸດົມສົມບູນ, ດິນສົ້ມ ແລະ ດິນທີ່ມັກມີນ້ຳຂັງ. ຕົ້ນກະຖິນບໍ່ເຫມາະສົມປູກໃນເຂດທີ່ມີອາກາດຫນາວ.

ຕົ້ນກະຖິນ ສາມາດນຳໄປປູກເປັນແບບສວນຄົວ, ແຖວກັນເຈື່ອນ ແລະ ຮົ້ວຊີວະພາບ. ຕົ້ນກະຖິນຈຳເປັນ ຕ້ອງປູກດ້ວຍແກ່ນເທົ່ານັ້ນ. ການຜລິດແກ່ນ ໂດຍທົ່ວໄປແລ້ວແມ່ນງ່າຍ. ແກ່ນ ກະຖິນມີເປືອກຫຸ້ມແຂງ ເຊິ່ງຊ່ວຍປ້ອງກັນບໍ່ໃຫ້ແກ່ນງອກໄດ້ ຈົນກວ່າຈະນຳແກ່ນໄປທຳລາຍ ເປືອກແຂງຕາມວິທີການຕ່າງ ໆ (ລາຍລະອຽດເບິ່ງປຶ້ມ ການພັດທະນາເຕັກໂນໂລຊີພືດອາຫານສັດຮ່ວມກັບຊາວກະສິກອນ-ການປູກ, ຄຸ້ມຄອງ ແລະ ນຳໃຊ້ພືດອາຫານສັດ).

ຕົ້ນກະຖິນ ແມ່ນ ຄືກັນກັບຕົ້ນໄມ້ອາຫານສັດຕະກຸນຖົ່ວ ທົ່ວໄປ, ການປູກລ້າງຂອງຕົ້ນເບ້ຍ ແມ່ນຊັກຊ້າ. ເພື່ອໃຫ້ໄດ້ຮັບຜົນດີ ຕົ້ນເບ້ຍຄວນປ້ອງກັນຈາກການເຂົ້າກິນຂອງສັດ, ວັດຊະພືດ ແລະ ໄຟໄຫມ້.

ກະຖິນເກືອບທຸກສາຍພັນ ຈະຖືກແມງ ປສີລີສ ທຳລາຍໃບ, ເຊິ່ງມີພຽງສອງສາຍພັນ ຄື k636 ແລະ k584 ທີ່ທົນທານຕໍ່ແມງໄມ້ດັ່ງກ່າວ ກວ່າທຸກ ໆສາຍພັນ (ຕົວຢ່າງ ພັນ ກັນນິງແຮມ).

ກະຖິນ ເປັນພິດສຳລັບສັດກະເພາະດ່ຽວ ຖ້າວ່າເກືອໃບຈຳນວນຫລາຍ. (ລາຍລະອຽດ ເບິ່ງພາກທີ 3 - ບາງຈຸດສຳຄັນທີ່ຕ້ອງໄດ້ພິຈາລະນາເປັນພິເສດ)

**ຫມາຍເຫດ:** ໃນອະນາຄົດ, F1 ລູກປະສົມລະຫວ່າງ K636 ຫລື K584 ແລະ ກະຖິນຊະນິດ ອື່ນ ໆ ອາດຈະຖືກທົດລອງອອກມານຳໃຊ້, ເຊິ່ງຄາດວ່າຈະໃຫ້ ຜົນຜລິດຫລາຍກວ່າ K636 ຫລື K584 ໃນເຂດທີ່ມີ ບັນຫາເລື້ອງພະຍາດ ປຊີລີສ ເຂົ້າທຳລາຍ.

❶ ຕົ້ນ ກະຖິນ ໂດຍປົກກະຕິຈະເກີດປົນກັບພືດອື່ນ ໆ (ປີເຕີ ຣອນ)
❷ ຕົ້ນຈະປູກໄດ້ຈາກແກ່ນເທົ່ານັ້ນ (ຈິມ ໂຣມ)
❸ ເປັນອາຫານ ທີ່ມີທາດຊີ້ນ (ໂປຼຕີນ) ຫລາຍ (ຈິມ ໂຣມ)
❹ ສາມາດຕັດນຳໃຊ້ເປັນຟືນໄດ້ເປັນຢ່າງດີ (ປີເຕີ ຣອນ)
❺ ແກ່ນກະຖິນມີເປືອກຫຸ້ມທີ່ແຂງ ແລະ ກ່ອນນຳໄປປູກຕ້ອງໄດ້ຕັດ ຫລື ຂູດເປືອກຫຸ້ມຫນ້ອຍນຶ່ງ (ຈິມ ໂຣມ)


❺


❷


❸


❹

# ສະໄຕໂລແຊນຕິສ ກິອາເນນຊິສ

(*Stylosanthes guianensis*)



1

ສາຍພັນທີ່ແນະນຳ:

**"ສະໄຕໂລ 184"**

- ເປັນພຸ່ມ ຕັ້ງຊື່ ເໝາະສຳລັບການຕັດໃຫ້ສັດກິນ.
- ໃຫ້ຜົນຜລິດສູງ.
- ເປັນອາຫານທີ່ມີຄຸນນະພາບສູງ.
- ນຳໃຊ້ໄດ້ຫລາຍຢ່າງ ລວມທັງການຜລິດໃບປົ່ນ.
- ປັບຕົວໄດ້ກັບຫລາຍສະພາບ ລວມທັງດິນທີ່ມີຄວາມອຸດົມສົມບູນຕ່ຳ ແລະ ເປັນກົດ.
- ໃບລະດູແລ້ງ ໃບຍັງຂຽວງາມດີ.
- ທົນທານຕໍ່ພະຍາດເຊື້ອລາ ອັນແທຼກໂນສ.

ແຕ່:

- ອາຍຸສັ້ນ ( 2 - 3 ປີ )
- ບໍ່ທົນທານກັບການຕັດເລື້ອຍ ໆ ຫລື ການປ່ອຍໃຫ້ສັດເຂົ້າກິນຕະຫລອດ.
- ຕ້ອງປູກດ້ວຍແກ່ນເທົ່ານັ້ນ.

"ສະໄຕໂລ 184" ເປັນພືດຢືນຕົ້ນອາຍຸສັ້ນ ( 2-3ປີ) ເຊິ່ງໃຫຍ່ມາເປັນພຸ່ມ ແລະ ມີລຳຕົ້ນ ແຂງ, ສາມາດປັບຕົວເຂົ້າໄດ້ກັບຫລາຍສະພາບອາກາດ ແລະ ດິນຫລາຍປະເພດ ແລະ ເປັນຊະນິດນຶ່ງ ໃນຈຳນວນກົ່ວພຸ່ມບາງຊະນິດ ທີ່ ສາມາດເກີດໄດ້ດີໃນດິນບໍ່ດີ ແລະ ເປັນກົດ. ກົ່ວສະໄຕໂລ 184 ເກີດບໍ່ໄດ້ດີໃນດິນທີ່ເປັນດາງ (pH>8). ນອກນັ້ນ, ສິ່ງ ທີ່ແຕກຕ່າງໄປຈາກສາຍພັນອື່ນ ໆ (CV. Schofield, Cook ແລະ Graham) ແມ່ນທົນທານຕໍ່ ພະຍາດເຊື້ອລາ "ອັນແທຼກໂນສ" ຢູ່ ອາຊີຕາເວັນອອກສ່ຽງໃຕ້.

ໂດຍທົ່ວໄປແລ້ວ ແມ່ນຖືກນຳໃຊ້ປູກເປັນພືດຄຸມດິນ ເຊິ່ງຕ້ອງໄດ້ຕັດ ໃນທຸກ ໆ 2-3 ເດືອນ. ກົ່ວຊະນິດນີ້ ສາມາດຄວບຄຸມວັດຊະພືດໄດ້ດີ ແລະ ຍັງເປັນອາຫານເສີມສຳລັບສັດຫລາຍຊະນິດ ເຊັ່ນ: ໄກ່, ໝູ ແລະ ປາ. ກົ່ວສະໄຕໂລ ສາມາດໃຫ້ເປັນອາຫານແກ່ສັດ ໃນລັກສະນະຫຍ້າສົດ ຫລື ຫຍ້າແຫ້ງ ແລະ ຫຍ້າປົ່ນໄດ້.

ກົ່ວສະໄຕໂລ ບໍ່ທົນກັບການຕັດຕ່ຳໃກ້ກັບໜ້າດິນ ເພາະຈຸດຈະເລີນເຕີບໂຕຂອງມັນ ແມ່ນ ຢູ່ລຸ່ມ ເຊິ່ງສາມາດ ປັບປຸງແກ້ໄຂໄດ້ໂດຍການຕັດຄັ້ງທຳອິດໃນລະດັບສູງ 10 -20 ຊຕມ ເພື່ອເຮັດໃຫ້ ມັນແຕກກິ່ງກ້ານ ຢູ່ໃກ້ກັບ ໜ້າດິນກ່ອນ. ຫລັງຈາກນັ້ນ, ເພື່ອເຮັດໃຫ້ມັນສາມາດເກີດຄືນໄດ້ດີ ຕ້ອງຕັດໃນລະດັບສູງກວ່າ 25 ຊມ).

ກົ່ວສະໄຕໂລ 184 ຕ້ອງໄດ້ປູກດ້ວຍແກ່ນ. ການຜະລິດເມັດພັນ ສາມາດເປັນໄປໄດ້ ໃນຫລາຍເຂດ ແຕ່ເຂດ ທີ່ດີທີ່ສຸດ ແມ່ນເຂດທີ່ມີລະດູແລ້ງຍາວ.

**<u>ໝາຍເຫດ:</u>** ໃນອະນາຄົດ ກົ່ວສະໄຕໂລ 184 ອາດຕິດພະຍາດ ອັນແທຼກໂນສ ໄດ້, ດັ່ງນັ້ນ ໃນປະຈຸບັນໄດ້ ມີການຄົ້ນຄວ້າທົດລອງ ຢູ່ ໄຮນານ, ປະເທດຈີນ ເພື່ອຊອກຫາສາຍພັນທີ່ສາມາດ ທົນທານກັບພະຍາດ ດັ່ງກ່າວ ໄດ້ດີກວ່າ.



❶ ກົ່ວສະໄຕໂລ ແມ່ນຖືກນຳໃຊ້ເປັນພືດປັບປຸງໄຮ່ເກົ່າ ແລະ ໃຊ້ເປັນອາຫານແກະ ໃນອິນໂດເນເຊັຍ (ເວີນເນີ ສະເຕືອ)

❷ ສາມາດຜລິດແກ່ນໄດ້ໃນຫລາຍ ໆ ເຂດ ຂອງອາຊີຕາເວັນອອກສ່ຽງໃຕ້ (ເອມມາ ລຸຍ ໂອເຣນເຊັຍ)

❸ ສາມາດຈຳແນກໄດ້ງ່າຍ ຈາກໃບທີ່ມີລັກສະນະແຫລມ ແລະ ດອກສີເຫລືອງ (ເວີນເນີ ສະເຕືອ)

❹ ກົ່ວສະໄຕໂລ ສາຍພັນ 184 ແມ່ນເປັນອາຫານ ທີ່ມີທາດຊີ້ນ (ໂປຼຕີນ) ສູງ (ຈີມ ໂຮມ)



❷



❸

# ພືດອາຫານສັດຊະນິດອື່ນ ທີ່ ເປັນປະໂຫຍດ

ພືດອາຫານສັດຊະນິດຕ່າງ ໆ ທີ່ເປັນປະໂຫຍດ ດັ່ງຕໍ່ໄປນີ້ ແມ່ນພຽງແຕ່ສໍາລັບໃຊ້ໃນບາງ ສະພາບເງື່ອນໄຂ ເທົ່ານັ້ນ ຫລື ຍັງບໍ່ທັນໄດ້ທົດລອງຫລືນໍາໃຊ້ຢູ່ໃນລະບົບການຜລິດຂອງຊາວ ກະສິກອນເທື່ອ.

## ພືດອາຫານສັດຕະກຸນຫຍ້າ




**ບູາກີເອຍ ມູຕິກາ "ປາຣາ" (Brachiaria mutica "Para")** ❶

ຫຍ້າຊະນິດນີ້ ແມ່ນພົບເຫັນທົ່ວໄປໃນອົງເຂດ ໃນດິນທີ່ລະບາຍນໍ້າໄດ້ຍາກ ແລະ ມີນໍ້າກ້ອມ. ຢູ່ ປະເທດໄທ ແມ່ນໃຊ້ເປັນອາຫານໃຫ້ແກ່ງົວນົມ ເຊິ່ງໄດ້ປູກໃສ່ທົ່ງນາ ເຊິ່ງເມື່ອກ່ອນ ໄດ້ປູກເຂົ້າ. ຫຍ້າຊະນິດນີ້ ແມ່ນ ບໍ່ເຫມາະສົມກັບເຂດທີ່ມີສະພາບແຫ້ງແລ້ງ.




**ດີກີຕາເຣຍ ມີລັນຈຽນນາ " ຈາຣາ" (Digitaria milanjiana "Jara")** ❷

ເປັນຫຍ້າປະເພດຢືນຕົ້ນ, ມີລໍາຕົ້ນເລືອ ແລະ ເຕັ້ຍ, ມີໃບອ່ອນ. ເຫມາະສົມກັບເຂດທີ່ມີ ລະດູແລ້ງສັ້ນ. ມັນມີການປັບຕົວ ທີ່ຄ້າຍກັບຫຍ້າ ບູາກີເອຍ ດີເກມເບັນ ແລະ ມັນມີສິ່ງທີ່ຫນ້າ ສົນໃຈເປັນພິເສດ ເພາະວ່າ ສາມາດໃຊ້ເປັນອາຫານໃຫ້ແກ່ ແກະ, ແບ້ ແລະ ງົວນ້ອຍ ໄດ້.




**ປັດສະປາລອມ ກືໂນອອມ " ເບລາ ວິສຕາ" (Paspalum guenoarum "Bela Vista")** ❸

ຫຍ້າຊະນິດນີ້ ແມ່ນ ຄ້າຍຄືກັນກັບ ຫຍ້າ ປັດສະປາລອມ ອາຕຼາຕອມ. ໃຫ້ຜົນຜລິດຫນ້ອຍ ກວ່າ, ແຕ່ ມີໃບ ອ່ອນ ແລະ ສັດມັກກິນຫລາຍກວ່າ. ຫຍ້າດັ່ງກ່າວບໍ່ເຫມາະສົມກັບພື້ນທີ່ ເຊິ່ງ ມີ ນໍ້າຝົນຫລາຍ ເພາະ ໃບ ຂອງມັນ ຈະຕິດພະຍາດເຊື້ອຣາ.

**ສະເຕັນໂນຕາຟຣັມ ເຊກັນດາຕັມ " ວານົວຕູ" (*Stenotapharum secundatum* "Vanuatu") ❹**

ເປັນຫຍ້າ ທີ່ມີລຳຕົ້ນເລືອຕາມດິນ ເຫມາະສົມໃນການປູກສຳລັບປ່ອຍສັດເຂົ້າກິນ ໃນເຂດ ທີ່ມີຮົ່ມປານກາງ. ຊາວກະສິກອນໃນ ວານົວຕູ ໄດ້ນຳໃຊ້ຫຍ້າຊະນິດນີ້ຢ່າງກວ້າງຂວາງ ສຳລັບ ເປັນທົ່ງຫຍ້າໃນກອງຕົ້ນພ້າວ. ມັນສາມາດປັບຕົວໄດ້ໃນເຂດຊຸ່ມຊື່ນ ທີ່ມີລະດູແລ້ງສັ້ນ ຫລື ບໍ່ມີເລີຍ ແລະ ມັນຈະເກີດໄດ້ດີ ໃນດິນທີ່ມີທາດອິງຄະທາດຫລາຍ. ຄຸນຄ່າທາງດ້ານອາຫານ ແມ່ນ ຫນ້ອຍ ກວ່າ ຫຍ້າ ຣູມີດີໂກລາເລັກນ້ອຍ. ຫຍ້າ ວານົວຕູ ແມ່ນຜລິດແກ່ນບໍ່ໄດ້, ແຕ່ສາມາດປູກດ້ວຍລຳຕົ້ນໄດ້ດີ.


❹ WS

## ພືດອາຫານສັດຕະກຸນກົ່ວ

**ເຊັນໂຕຼຊີມາ ປັດສກູໂອຣັມ " ກາວານເກດ" (*Centrosema pascuorum* "Cavalcade") ❺**

ເປັນພືດປະເພດລົ້ມລຸກ, ມີເຄືອກ້ຽວ ເຊິ່ງອາດໃຊ້ເປັນພືດປົກຄຸມ ຫລື ປັບປຸງດິນປູກຝັງ ເກົ່າໄດ້. ການປັບຕົວຂອງມັນ ແມ່ນຄ້າຍຄືກັນກັບ ມາໂຄຼຕີລອມ ກູາຊີນ " ມານໂດນາໂດ" (ລາຍລະອຽດຢູ່ລຸ່ມນີ້). ຢູ່ ປະເທດໄທ ແມ່ນນຳໃຊ້ສຳລັບເຮັດຫຍ້າແຫ້ງ.


❺ MH

**ໂກດາຣີໂອກາລີກ ກີໂຣຍເດັສ "ເບລີສ" (*Codariocalyx gyroides* "Belize") ❻**

ເປັນກົ່ວທີ່ມີອາຍຸສັ້ນ (3-4ປີ), ກົ່ວເປັນຕົ້ນມີກິ່ງງ່າ ແລະ ຄ້າຍຄືກັບ ເດັສໂມດຽມ ຊີເນເຣັຍ (ໃນເມື່ອກ່ອນເອີ້ນວ່າ ດ. ເຣນໂຊນີ). "ເບລີສ" ເກີດໄດ້ດີໃນເຂດຮ້ອນຊຸ່ມຊື່ນ ແລະ ທົນທານຕໍ່ ສະພາບນ້ຳຂັງໄດ້ດີ.


❻ WS





**ຟະເລມິງເກັຍ ມາໂກຼຟີລາ "ຊຸມພອນ" (Flemingia macrophylla "Chumphon") – ❼**

ເປັນຕົ້ນກົ່ວພືດອາຫານສັດ ທີ່ ມີອາຍຸຍາວ ແລະ ເປັນພຸ່ມໃຫຍ່. ສາຍພັນ "ຊຸມພອນ" ເປັນສາຍພັນ ທີ່ມີໃບຫລາຍກວ່າຫມູ່ ແລະ ຜົນຜະລິດສູງ ສາຍພັນນຶ່ງທີ່ມີຢູ່ໃນປັດຈຸບັນ. ຕົ້ນກົ່ວ ຟະເລມິງເກັຍ ເປັນຊະນິດ ນຶ່ງ ໃນຈຳນວນຕົ້ນກົ່ວພືດອາຫານສັດ ທີ່ສາມາດເກີດໄດ້ດີ ໃນດິນບໍ່ດີ ແລະ ເປັນກົດ. ກົ່ວຊະນິດນີ້ ເຫມາະສົມ ກັບເຂດຮ້ອນຊຸ່ມຊື່ນຫລາຍກວ່າ. ໃບຂອງມັນສັດບໍ່ຄ່ອຍ ມັກກິນ ເພາະວ່າມັນມີນຈຸທາດ "ຕັນນິນ" (Tannins). ແບ້ຈະກິນໃບຂອງມັນກໍ່າຫາກປົນກັບອາຫານ ອື່ນ ໆ. ການຕັດກິ່ງງ່າຂອງມັນ ແລ້ວກົບລົງດິນ ຈະເປັນປະໂຫຍດໃນການປັບປຸງຄວາມ ອຸດົມ ສົມບູນຂອງດິນ, ເພາະວ່າໃບຂອງມັນຈະຍ່ອຍສະຫລາຍຢ່າງຊ້າ ໆ ໃນດິນ.

**ມາໂກຼຕີລອມ ກຼາຊິນ " ມານໂດນາໂດ" (Macroptilium gracile "Maldonado") "❽**

ມານໂດນາໂດ" ເປັນພືດປະເພດຍືນຕົ້ນໄລຍະສັ້ນ (1-2 ປີ), ລຳຕົ້ນເປັນເຄືອກ້ຽວ ເຊິ່ງຈະ ຂະຫຍາຍຕົວດີ ໃນສອງ ສາມ ເດືອນທຳອິດ ຫລັງຈາກປູກແລ້ວ. ເປັນພືດຄຸມດິນໃນໄລຍະສັ້ນໄດ້ດີ ແລະ ຍັງສາມາດໃຊ້ເປັນອາຫານສັດ ປົນກັບຫຍ້າຊະນິດອື່ນ ໆໄດ້ອີກດ້ວຍ. " ມານໂດນາໂດ ສາມາດເກີດໄດ້ໃນດິນຫລາຍປະເພດ, ລວມເຖິງດິນທີ່ມີຄວາມອຸດົມສົມບູນຕ່ຳ ແລະ ດິນຊາຍ. ຄຸນລັກສະນະພິເສດຂອງກົ່ວຊະນິດນີ້ແມ່ນ ມັນສາມາດທົນໄດ້ ໃນສະພາບນ້ຳຂັງ ແລະ ນ້ຳກ້ວມ ໃນໄລຍະສັ້ນ.

**ກົ່ວສະໂນ ເຊສບາເນຍ ກຣັນດິຟະໄລຣາ "ຕູຣີ" (*Sesbania grandiflora* "Turi") " ❾**

ເປັນຕົ້ນໄມ້ອາຫານສັດ ທີ່ຂະຫຍາຍຕົວໄວ, ອາຍຸສັ້ນ (3-5 ປີ ) ແລະ ມີລຳຕົ້ນດ່ຽວ. ເປັນ ອາຫານເສີມທີ່ມີຄຸນນະພາບສູງ, ໂດຍສະເພາະໃນລະດູແລ້ງ, ແຕ່ຜົນຜລິດໃບແມ່ນຕ່ຳ. ຕົ້ນເຊສບາເນຍ ແມ່ນປັບຕົວໄດ້ດີໃນພື້ນທີ່ ມີລະດູແລ້ງຍາວ ແຕ່ຕ້ອງການດິນທີ່ມີຄວາມອຸດົມສົມບູນ ປານກາງ. ຕົ້ນ ເຊສບາເນຍ ຈະຕາຍ ກ້າຫາກລຳຕົ້ນ ກຶກຕັດ, ແຕ່ ກິ່ງ ງ່າຂອງມັນແມ່ນສາມາດ ຕັດໄດ້ເປັນປະຈຳ. ພັນພື້ນເມືອງແມ່ນມີຢູ່ທົ່ວໄປ ໃນຫລາຍ ໆ ພາກ ຂອງອາຊີຕາເວັນອອກ ສ່ຽງໃຕ້.

**ສະໄຕໂລແຊນທີສ ຮາມາຕາ "ເວຣາໂນ" (*Stylosanthes hamata* "Verano") " ❿**

ເປັນກົ່ວທີ່ອ້ອນອ້າງອາຍຸສັ້ນ ແລະ ສ່ວນໃຫຍ່ ແມ່ນນຳໃຊ້ປູກສຳລັບປ່ອຍໃຫ້ສັດ ເຂົ້າກິນ ໃນເຂດທີ່ມີລະດູແລ້ງຍາວ. ໃນພາກຕາເວັນອອກສ່ຽງເຫນືອຂອງປະເທດໄທ ໄດ້ມີການ ຫວ່ານຕາມແຄມທາງ ແລະ ເນື້ອທີ່ເປົ່າຫວ່າງຕ່າງ ໆ.



❾ JH



❿ WS



# ເອກະສານຊ້ອນທ້າຍ

# 5

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 1. ຕົ້ນກຳເນີດ ແລະ ການຈຳແນກ ພືດອາຫານສັດສາຍພັນຕ່າງ ໆ ທີ່ ແນະນຳ.

| ຊະນິດ | ຊື່ສາຍພັນ | ນ້ຳເບີ ແລະ ຊື່ ທົ່ວໄປ | ປະເທດ ແຫລ່ງກຳເນີດ |
|---|---|---|---|
| **ຫຍ້າອາຫານສັດ**<br>ອັນໂດໂປກົນ ກາຍານັດ<br>*Andropogon gayanus* | ແກມບາ<br>Gamba | • cv. Kent<br>• CIAT 621<br>• ຍັງມີອີກຫລາຍສາຍພັນ ທີ່ ກຳ ລັງທົດລອງໃນປະເທດ ຕ່າງ ໆ | ໄນຈີເຣຍ<br>Nigeria |
| ບຼາກີເຣຍ ບຼີຊັນຕາ<br>*Brachiaria brizantha* | ກາຣັນກາ<br>Karanga | • CIAT 1683 | ຊິມບັບເວ<br>Zimbabwe |
| | ເຊເຣນເກຕີ<br>Serengeti | • CIAT 6387 | ເກນຢາ<br>Kenya |
| | ມາຣັນດູ<br>Marandu | • cv. Marandu (Brazil)<br>• CIAT 7680;ILCA 16550<br>• ຍັງມີອີກຫລາຍສາຍພັນ ທີ່ ກຳ ລັງທົດລອງໃນປະເທດ ຕ່າງ ໆ | ຊິມບັບເວ<br>Zimbabwe |
| ບຼາກີເຣຍ ດີເກມເບີນ<br>*Brachiaria decumbens* | ບາຊີລີສກ<br>(ຊິກນານ)<br>Basilisk | • cv. Basilisk (Australia)<br>• CIAT 606<br>• ຍັງມີອີກຫລາຍສາຍພັນ ທີ່ ກຳ ລັງທົດລອງໃນປະເທດ ຕ່າງ ໆ | ອູກັນດາ<br>Uganda |
| ບຼາກີເຣຍ ຮູມີດີໂກລາ<br>*Brachiaria humidicola* | ຢາເນໂຣ<br>Yanero | • cv. Llanero (Colombia)<br>• CIAT 6133<br>• ຍັງມີອີກຫລາຍສາຍພັນ ທີ່ ກຳ ລັງທົດລອງໃນປະເທດ ຕ່າງ ໆ | ຊິມບັບເວ<br>Zimbabwe |
| ບຼາກີເຣຍ ຮູມີດີໂກລາ<br>*Brachiaria humidicola* | ຕູລີ<br>Tully | • cv. Tully (Australia)<br>• CIAT 679<br>• ຍັງມີອີກຫລາຍສາຍພັນ ທີ່ ກຳ ລັງທົດລອງໃນປະເທດ ຕ່າງ ໆ | ແຫລ່ງກຳເນີດບໍ່ຈະແຈ້ງ, ແຕ່ມີ ການນຳເຂົ້າໄປ ອົດສະຕາລີ ຈາກ ປະເທດ ອາຟລິກກາໃຕ້ |
| ບຼາກີເຣຍ ມູຕິກາ<br>*Brachiaria mutica* | ປາຣາ<br>Para | • ເປັນຫຍ້າທີ່ແຜ່ຫລາຍໃນເຂດ ອາຊີອາຄະເນ | ແຫລ່ງກຳເນີດບໍ່ ຈະແຈ້ງ, ແຕ່ອາດ ນຳເຂົ້າມາຈາກ ເຂດຮ້ອນໃນ ອາຟລິກກາ |

| ຊະນິດ | ຊື່ສາຍພັນ | ນ້ຳເປີ ແລະ ຊື່ ທົ່ວໄປ | ປະເທດ ແຫລ່ງກຳເນີດ |
|---|---|---|---|
| ບູາກິເຣຍ ຣູຊີຊຽນຊີສ<br>Brachiaria ruziziensis | ຣູຊີ<br>Ruzi | • cv.Kennedy (Australia) | ຣາວັນດາ<br>Rwanda |
| ດິກິຕາເຣຍ ມີລັນຈຽນນາ<br>*Digitaria milanjiana* | ຈາຣາ<br>Jarra | • cv.Jarra (Australia) | ມາລາວີ<br>Malawi |
| ປານິກັມ ແມກຊີມັມ (ກີນີ)<br>Panicum maximum | ໂຕເບຍຕາ<br>Tobiata<br>ສີມ່ວງ | • cv.Tobiata (Brazil)<br>• CIAT 6299<br>• TD 58 (ກີນີສີມ່ວງ) | ເກນຢາ<br>Kenya<br>ໄອໂວຣີ ໂຄສຕ |
| | Si Muang | • Tanzania 1 (Brazil)<br>• CIAT 16031; ILCA16554 | Ivory Coast |
| ປາສປາລອມ ອາຕູາຕອມ<br>*Paspalum atratum* | ເຕເຣໂນສ<br>Terenos | • BRA 009610<br>• Cv. Hi Gane (Australia)<br>• Cv. Suerte (USA) | ບູາຊິນ<br>Brazil |
| ປາສປາລອມ ເກໂນຣອມ<br>*Paspalum gueonarum* | ເບລາ ວິສຕາ<br>Bela Vista | • BRA 003824 | ບູາຊິນ<br>Brazil |
| ເປນີເຊຕອມ ເປີເປີຣຽມ<br>*Pennisetum purpureum* | ເນເປຍ<br>Napier<br>ມອດຕ<br>Mott | • ມີພັນພື້ນເມືອງຫລາຍສາຍພັນ<br>• cv. Mott (USA) | ເຂດຮ້ອນໃນ ອາຟລິກກາ<br>ເປັນພັນລູກປະ<br>ສົມແຕ່ສາຍພັນເດີມ<br>(ທີ່ເອົາມາປະ ສົມ) ແມ່ນມາ<br>ຈາກ ເຂດຮ້ອນ ໃນອາຟລິກາ |
| ປ. ເປີເປີຣຽມ × ລູກປະສົມ<br>ຂອງ ປ. ກະເລົາກັມ<br>*P. purpureum* x<br>*P. glaucum hybrid* | ຄິງ<br>King | • ຫຍ້າ ຄິງ (Indonesia)<br>• ນອກນີ້ຍັງມີລູກປະສົມອີກ ຫລາຍສາຍພັນທີ່ຄ້າຍຄືກັນ (ຕົວຢ່າງ: ຫຍ້າ ເນເປຍ ຟລໍຣິດາ ຢູ່ ປະເທດ ຟີລິບປິນ) | ເປັນພັນລູກປະສົມແຕ່ສາຍພັນເດີມ (ທີ່ເອົາມາປະ ສົມ) ແມ່ນມາ ຈາກ ເຂດຮ້ອນ ໃນອາຟລິກາ |
| ເຊຕາເຣຍ ສະພາເຊລາຕາ<br>*Setaria sphacelata* | ໂຊແລນເດີ<br>Solander | • cv.Solander (Australia) | ເປັນພັນລູກປະສົມແຕ່ສາຍພັນເດີມ (ທີ່ເອົາມາປະ ສົມ)ແມ່ນມາ ຈາກ ເຂດຮ້ອນໃນອາຟລິກາ |
| ເຊຕາເຣຍ ສະພາເຊລາຕາ<br>ສາຍພັນ ສະປເລັນດິດາ̈<br>*Setaria sphacelata* var.<br>Splendida | ລຸມພອນ<br>Lampung | • cv.Splendida (Indonesia)<br>• CPI 15899 | ພັນລູກປະສົມ ຈາກ ເຂດຮ້ອນ ອາຟລິກາ |

| ຊະນິດ | ຊື່ສາຍພັນ | ປ້າເບີ ແລະ ຊື່ ທົ່ວໄປ | ປະເທດ ແຫລ່ງກຳເນີດ |
|---|---|---|---|
| ສະເຕໂນຕາຟຣັມ ເຊກັນດາຕັມ<br>*Stenotaphrum secundatum* | ວານົວຕູ<br>Vanuatu | • ເປັນຫຍ້າທຳມະຊາດ ຂອງ ວານົວຕູ | ພາກໃຕ້ຂອງທະ ວີບ<br>ອາຟລິກາ |
| **ຖົ່ວອາຫານສັດ**<br>ອາຣາຄິສ ປິນໂຕຍ<br>*Arachis pintoi* | ອິຕາກັມບີຣາ<br>Itacambira | • CIAT 22160 | ບູຣາຊິນ<br>Brazil |
| | | • Cv. Amarillo (Australia)<br>• CIAT 17434<br>• ຍັງມີອີກຫລາຍສາຍພັນ ທີ່ ທົດລອງ<br>ໃນປະເທດ ຕ່າງ ໆ | ບູຣາຊິນ<br>Brazil |
| ກາລຽນດຣາ ກາໂລເທີຊັສ<br>(ກະຖິນແດງ)<br>*Calliandra calothyrsus* | ເບຊາກິ<br>Besakih | • CPI 115690<br>• ແຜ່ຂະຫຍາຍຢ່າງກວ້າງ<br>ຂວາງໃນ ອິນໂດເນເຊຍ | ໃນແຖວ ອາເມລິກາກາງ<br>ອາດແມ່ນ ກົວເຕມາລາ |
| ເຊັນໂຕຼຊີມາ ມາໂກຼກາຣປັມ<br>*Centrosema macrocarpum* | ອູກາຢາລີ<br>Ucayali | • CIAT 25522<br>• Cv. Ucayali(Peru) | ໄດ້ຮວບຮວມເອົາຫລາຍສາຍ<br>ພັນ ໃນ ບູຣາຊິນ, ໂກລົມເບຍ<br>ແລະ ເວເນຊູເອລາ |
| ເຊັນໂຕຼຊີມາ ປັດສກູອໍຣັມ<br>*Centrosema pascuorum* | ກາບວາເກດ<br>Cavalcade | • Cv. Cavalcade (Australia) | ເປັນພັນລູກປະສົມ, ເຊື້ອພັນ<br>ດັ້ງເດີມ ແມ່ນມາຈາກ<br>ບູຣາຊິນ |
| ເຊັນໂຕຼຊີມາ ປັບເບເຊນ<br>Centrosema pubescens | ບາຣິນັສ<br>Barinas | • CIAT 15160 | ເວເນຊູເອລາ<br>Venezuela |
| ໂກດາຣິໂອກາລິກ ກີໂຣຍເດັດສ<br>Codariocalyx gyroides | ເບລີສ<br>Belize | • CIAT 3001 | ເບລີສ<br>Belize |
| ເດັດສມັນຕັສ ວີຣກາຕັສ<br>*Desmanthus virgatus* | ຈາລັນ<br>Chaland | • ໄນຍາຣາ (ປະເທດໄທ)<br>• CPI 52401 | ເມົາຣິຕຽດສ<br>Mauritius |
| ເດັດສະໂມດຽມ ຊີເນເຣຍ<br>(ເຣັນໂຊເນຍ)<br>Desmodium cinerea | ລັສ ເດລີຊຽດສ<br><br>Las delicias | • Rensonii (Philippines)<br><br>• CPI 46562 | ເວເນຊູເອລາ<br>Guatemala |
| ຟະເລມິງເກຍ ມາໂກຼຟິລາ<br>*Flemingia macrophylla* | ຊຸມພອນ<br>Chumphon | • CIAT 17403 | ໄທ<br>Thailand |

| ຊະນິດ | ຊື່ສາຍພັນ | ບ້ານເກີດ ແລະ ຊື່ ທົ່ວໄປ | ປະເທດ ແຫລ່ງກຳເນີດ |
|---|---|---|---|
| ກລີຣິຊີເດຍ ເຊປັມ(ແຄຝລັ່ງ)<br>*Gliricidia sepium* | ເບເລນ ຣິວອສ<br>Belen Rivas | • ສາຍພັນ ເບເລນ ຣິວອສ ໄດ້ຖືກນຳ ປແຜ່ຂະຫຍາຍໂດຍ ສະຖາບັນ ຄົ້ນຄວ້າປ່າໄມ້ ອອກສຟອດສ ຂອງອັງກິດ (Oxford Forestry Institute, UK) | ນິກາຣາກວາ<br>Nicaragua |
| | ເຣຕາຮູເລ<br>Retalhuleu | • ສາຍພັນ ເຣຕາຮູເລ ໄດ້ ຖືກນຳໄປ ແຜ່ຂະຫຍາຍ ໂດຍ ສະຖາບັນ ບັນຄົ້ນຄວ້າປ່າໄມ້ ອອກສຟອດສ ຂອງ ອັງກິດ (Oxford Forestry Institute, UK) | ກົວເຕມາລາ<br>Guatemala |
| ຕົ້ນກະຖິນ<br>*Leucaena leucocephala* | K 584 | • ສາຍພັນ K 584 ໄດ້ ຖືກນຳໄປແຜ່ຂະຫຍາຍໂດຍ ມະຫາ ວິທະຍາໄລ ຮາວາຍ (University of Hawaii,USA) | ເມັກຊິໂກ<br>Mexico |
| | K 636 | • cv.Tarramba (Australia)<br>• ສາຍພັນ K 636 ໄດ້ ຖືກ ນຳໄປແຜ່ຂະ ຫຍາຍໂດຍ ມະຫາວິທະຍາໄລ ຮາວາຍ (University of Hawaii) | ຄັດເລືອກມາຈາກ ເມັດພັນ ຢູ່ ປະເທດ ເມັກຊິໂກ<br>Mexico |
| ມາໂກຼຕີລັມ ກຼາຊິນ<br>*Macroptilium gracile* | ມານໂດນາໂດ<br>Maldonado | • cv. Maldonado (Australia) | ເວເນຊູເອລາ<br>Venezuela |
| ເຊສບາເນຍ ກຣັນດີຟລໍຣາ<br>*Sesbania grandiflora* | ຕູຣີ<br>Turi | • ເກີດຢູ່ຕາມທຳມະຊາດ ທົ່ວ ເຂດ ອາຊີອາຄະເນ | ຕົ້ນກຳເນີດບໍ່ຊັດ ເຈນ ອາດແມ່ນ ອິນໂດເນເຊຍ ຫລື ອິນເດຍ |
| ສະໄຕໂລແຊນຕິສ ກິອາເນນຊິສ<br>*Stylosanthes guianensis* | ສະໄຕໂລ 184<br>Stylo 184 | • cv.Pucallpa (Colombia)<br>• CIAT 184<br>• ຍັງມີອີກຫລາຍສາຍພັນ ທີ່ກຳ ລັງທົດລອງໃນປະເທດ ຕ່າງ ໆ | ໂຄລົມເບຍ<br>Colombia |
| ສະໄຕໂລແຊນຕິສ ຮາມາຕາ<br>*Stylosanthes hamata* | ເວຣາໂນ<br>Verano | • cv.Verano (Australia) | ເວເນຊູເອລາ<br>Venezuela |

# ເອກະສານຊ້ອນທ້າຍ 2. ສະຖານທີ່ຕິດຕໍ່ພົວພັນ ເມື່ອທ່ານຕ້ອງການ ເມັດພັນ/ທອນພັນຂອງບັນດາສາຍພັນຕາງ ໆ ເຫລົ່ານີ້.

ພືດອາຫານສັດ ສາຍພັນຕ່າງ ໆ ທີ່ໄດ້ບັນລະຍາຍ ໃນປື້ມຫົວນີ້ ແມ່ນໄດ້ ຖືກ ນຳໃຊ້ຢ່າງ ກວ້າງຂວາງ ໂດຍບັນດາອົງການຄົ້ນຄວ້າ ແລະ ພັດທະນາ ແຫ່ງ ຊາດ ຂອງບັນດາປະເທດ ໃນເຂດ ອາຊີຕາເວັນອອກສ່ຽງໃຕ້ ເພື່ອຊ່ວຍຊາວກະ ສິກອນ ປັບປຸງ ແລະ ພັດທະນາການລ້ຽງສັດ ແລະ ລະບົບການຜລິດ ໃນປະເທດ ຂອງຕົນເອງ.

ຖ້າບັນດາທ່ານ ຫາກສົນໃຈ ແລະ ຊອກຫາແນວພັນພືດອາຫານສັດສາຍພັນ ຕ່າງ ໆ ທີ່ໄດ້ ບັນລະຍາຍມານັ້ນ,

ທ່ານສາມາດຕິດຕໍ່ກັບບັນດາອົງການ ແລະ ສຳນັກງານ ເຊິ່ງມີທີ່ຢູ່ດັ່ງ ຂ້າງລຸ່ມ ນັ້ນ. ເຖິງວ່າບັນດາທີ່ຢູ່ເຫລົ່ານັ້ນ ອາດຈະມີການປ່ຽນແປງ ແຕ່ມັນກໍ່ຈະຊ່ວຍ ຊີ້ແນະ ໃຫ້ທ່ານສາມາດຊອກຫາ ສາຍພັນພືດອາຫານສັດ ທີ່ທ່ານຕ້ອງການ. ທ່ານສາມາດຊອກຫາ ບັນດາທີ່ຢູ່ເຫລົ່ານີ້ໄດ້ (ຖ້າຫາກມີການປ່ຽນແປງ) ໂດຍ ທີ່ຢູ່ທາງ ອິນເຕີແນັດ ຂອງອົງການ ຄົ້ນຄວ້າກະສິກຳເຂດຮ້ອນ (CIAT) ຕາມ ທີ່ຢູ່ດັ່ງນີ້:

**ສ ປ ປ ລາວ**

ສູນຄົ້ນຄວ້າການລ້ຽງສັດ
ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້
ກະຊວງກະສິກຳ ແລະ ປ່າໄມ້
ວຽງຈັນ
ໂທ: (856 21) 22 2796
ກະລຸນາຕິດຕໍ່ກັບ: ທ່ານ ວັນທອງ ແພງວິຈິດ
ທ່ານ ພອນປະເສີດ ເພັງສະຫວັນ
ທ່ານ ວຽງສະຫວັນ ພົມພະຈັນວົງສິດ

ຂະແໜງລ້ຽງສັດ ແລະ ການປະມົງ
ພະແນກກະສິກຳ ແລະ ປ່າໄມ້
ແຂວງ ຊຽງຂວາງ
ໂທ: (061) 31 2019
ກະລຸນາຕິດຕໍ່ກັບ: ທ່ານ ສຸລິວັນ ໂນວາຫາ
ທ່ານ ທົງທອງ ພົມມະສານ
ທ່ານ ສອນສະຫວັດ ວັນທະລາ

ຂະແໜງລ້ຽງສັດ ແລະ ການປະມົງ
ພະແນກກະສິກຳ ແລະ ປ່າໄມ້
ແຂວງ ຫລວງພະບາງ
ໂທ: (071) 21 2018
ກະລຸນາຕິດຕໍ່ກັບ: ທ່ານ ຈັນພອນ ແກ້ວບົວລະເພັດ
ທ່ານ ແສງປະສິດ ທອງສະຫວັດ
ທ່ານ ເພັງ ຄຳມະວົງ

ກອງສົ່ງເສີມການລ້ຽງສັດ ແລະ ປະມົງ
ກົມລ້ຽງສັດ ແລະ ການປະມົງ
ກະຊວງກະສິກຳ ແລະ ປ່າໄມ້
ວຽງຈັນ
ໂທ: (021) 21 5014
ກະລຸນາຕິດຕໍ່ກັບ: ທ່ານ ດຣ. ຕຽນ ວັນນະສຸກ
ທ່ານ ວຽງໄຊ ໂພຕະກຸນ

**ໄທ**

Division of Animal Nutrition
Department of Livestock Development
Phya Thai Road
Bangkok 10400
Thailand
Tel: (66 2) 251 1941
Current contact: Chaisang Phaikaew

Pakchong Animal Nutrition Research Center
Pakchong
Nakornrachasima 30130
Thailand
Tel: (66 44) 311612
Current contact: Ganda Nakamanee

**ຫວຽດນາມ**

National Institute of Animal Husbandry
Ministry of Agriculture and Rural Development
Thuy Phuong, Tu Liem
Hanoi
Tel: (84 4) 834 4775
Current contact: Le Hoa Binh

College of Agriculture and Forestry
Thu Duc
Ho Chi Minh City
Tel: (84 8) 896 3353
Current contact: Bui Xuan An

Hue University of Agriculture and Forestry
Center for Rural Development in Central Vietnam
24 Phung Hung St.
Hue
Tel: (84 54) 825 049
Current contact: Le Van An

**ສຳລັບການຕິດຕໍ່ທົ່ວໄປ:**

CIAT Regional Office
c/o IRRI
Makati Central P.O. Box 3127
1271 Makati City
Philippines
Tel: (63 2) 845 0563
Current contact: Peter Kerridge
Francisco Gabunada Jr.